# ແບບຮຽນ
# ວັນນະຄະດີ

## ຊັ້ນມັດທະຍົມສຶກສາຕອນຕົ້ນ ສຳລັບປະຊາຊົນ



## ກະຊວງສຶກສາທິການ ແລະ ກິລາ
## ກົມການສຶກສານອກໂຮງຮຽນ

2012

# ຄຳນຳ

ປຶ້ມແບບຮຽນວິຊາວັນນະຄະດີ ຊັ້ນມັດທະຍົມຕອນຕົ້ນ ສຳລັບປະຊາຊົນ ລະບົບບຳລຸງ ການສຶກສານອກໂຮງຮຽນ ເຫຼັ້ມນີ້ ໄດ້ຮຽບຮຽງຂຶ້ນເພື່ອນຳໃຊ້ເຂົ້າໃນການຈັດການຮຽນ-ການສອນລະບົບບຳລຸງໂດຍອີງ ອີງໃສ່ຫຼັກສູດການສຶກສານອກໂຮງຮຽນ ແລະ ອີງໃສ່ປຶ້ມແບບຮຽນ ຂອງສາຍສາມັນສຶກສາ ທີ່ນຳໃຊ້ໃນປັດຈຸບັນ ໂດຍໄດ້ຮັບຄວາມຮ່ວມມືຈາກນັກວິຊາການຫຼາຍພາກສ່ວນເຊັ່ນ:ນັກວິຊາການຈາກ ສະຖາບັນຄົ້ນຄ້ວາວິທະຍາສາດການສຶກສາ, ພະແນກສຶກສາທິການແລະກິລານະຄອນຫຼວງວຽງຈັນ,ນັກວິຊາການສູນພັດທະນາການສຶກສານອກໂຮງຮຽນ ແລະກົມການສຶກສານອກໂຮງຮຽນ

ເນື້ອໃນທີ່ສະແດງອອກໃນປຶ້ມເຫຼັ້ມນີ້ເປັນພຽງຂໍ້ມູນພື້ນຖານເພື່ອໃຫ້ຜູ້ຮຽນ ແລະ ຄູ ນຳໃຊ້ເຂົ້າໃນການ ຮຽນ-ການສອນເທົ່ານັ້ນ. ຄູແລະຜູ້ຮຽນສາມາດຊອກຫາຂໍ້ມູນເພີ່ມເຕີມຈາກຫລາຍແຫຼ່ງເອກະສານ ເພື່ອໃຫ້ແທດ ເໝາະກັບການຈັດ ການຮຽນ-ການສອນ ແລະ ເຮັດໃຫ້ຜູ້ຮຽນແລະຜູ້ສອນໄດ້ຮັບຄວາມຮູ້ແລະຄຸນຄ່າທາງດ້ານວັນນະຄະດີ.

ປຶ້ມເຫຼັ້ມນີ້ມີ 4 ພາກ ປະກອບມີ 13 ບົດຊຶ່ງລວມເອົາເນື້ອໃນສຳຄັນຊຶ່ງຜູ້ຮຽນຈະໄດ້ຮຽນຮູ້ກ່ຽວກັບວັນນະຄະດີພື້ນເມືອງຂອງລາວໃນອາດີດເຊັ່ນວັນນະຄະດີພື້ນເມືອງປະເພດຄຳຮ້ອຍແກ້ວ,ຮ້ອຍກອງຈົນເຖິງວັນນະຄະດີສະໄໝປັດຈຸບັນຂອງລາວ.

ໃນການຮຽນຮຽງຄັ້ງນີ້ອາດມີຫຼາຍສິ່ງຫຼາຍຢ່າງຂາດຕົກບົກຜ່ອງສະນັ້ນ,ກົມການສຶກສານອກໂຮງຮຽນ ຂໍຄວາມຮ່ວມມື ມາຍັງຄູ - ອາຈານ, ຜູ້ບໍລິຫານການສຶກສາ ຂັ້ນ ຕ່າງໆ ແລະ ທ່ານຜູ້ອ່ານ ຊ່ວຍຕີລາຄາ,ປະກອບຄຳຄິດຄຳເຫັນ ສິ່ງໃຫ້ກົມການສຶກສານອກໂຮງຮຽນ ນຳມາເປັນຂໍ້ມູນໃນການປັບປຸງ,ດັດແກ້ຄືນໃໝ່ ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບໝາກຜົນແລະເປັນທີ່ຍອມຮັບໃນທົ່ວສັງຄົມ.

ກົມການສຶກສານອກໂຮງຮຽນ

# ຄຳນຳ


**ພາກທີ I ວັນນະຄະດີພື້ນເມືອງລາວ ........................................................................ 1**

ບົດທີ 1 ຄວາມໝາຍ,ຄວາມສຳຄັນ,ປະເພດ ແລະຄຸນຄ່າຂອງວັນນະຄະດີພື້ນເມືອງລາວ ........................1

ບົດທີ 2 ວັນນະຄະດີພື້ນເມືອງລາວປະເພດຄຳຮ້ອຍແກ້ວ .................................................................3

ບົດທີ 3 ວັນນະຄະດີພື້ນເມືອງລາວປະເພດຄຳຮ້ອຍກອງ ...............................................................11

**ພາກທີ II ວັນນະຄະດີລາວມສະຕະວັດທີ XIV-XVII ...................................................... 16**

ບົດທີ 4 ອານາຈັກລາວລ້ານຊ້າງກັບການກຳເນີດວັນນະຄະດີຊຽນ...................................................16

ບົດທີ 5. ວັນນະຄະດີປະຫວັດສາດ ...........................................................................................20

ບົດທີ 6. ວັນນະຄະດີສາສະໜາ ...............................................................................................23

ບົດທີ 7. ວັນນະຄະດີຄຳສອນ...................................................................................................25

ບົດທີ 8. ກະວີນິຍາຍ ...............................................................................................................30

**ພາກທີ III ວັນນະຄະດີລາວໃນສະຕະວັດທີ XVIII - XIX................................................... 36**

ບົດທີ 9. ວັນນະຄະດີລາວໃນສະຕະວັດທີ XVIII - XIX ................................................................36

ບົດທີ 10. ສານລຶບພະສູນ .......................................................................................................39

**ພາກທີ IV ວັນນະຄະດີປັດຈຸບັນຂອງລາວ ....................................................................43**

ບົດທີ 11.  ການກຳເນີດ ແລະການຂະຫຍາຍຕົວຂອງວັນນະຄະດີປັດຈຸບັນ ........................................43

ບົດທີ 12. ເມືອງລາວສວຍງາມຮັ່ງມີ .........................................................................................45

ບົດທີ 13. ແຫກຄຸກ..................................................................................................................48

# ພາກທີ I ວັນນະຄະດີພື້ນເມືອງລາວ

## ບົດທີ 1

## ຄວາມໝາຍ, ຄວາມສຳຄັນ, ປະເພດ ແລະ ຄຸນຄ່າຂອງວັນນະຄະດີພື້ນເມືອງລາວ

### 1. ຄວາມໝາຍຂອງວັນນະຄະດີພື້ນເມືອງລາວ.

ວັນນະຄະດີພື້ນເມືອງ ແມ່ນວັນຄະດີລາວປະເພດໜຶ່ງເຊິ່ງແມ່ນປະຊາຊົນຜູ້ອອກແຮງງານລາວເປັນຜູ້ປະດິດຄິດແຕ່ງຂຶ້ນດ້ວຍປາກເປົ່າ ແລະ ໄດ້ເລົ່າສືບຕໍ່ກັນມາ ແຕ່ສະໄໝບູຮານຈົນເຖິງປັດຈຸບັນ ມັນໄດ້ສ່ອງແສງປະກົດການທຳມະຊາດ, ສັງຄົມ, ແນວຄິດຈິດໃຈ ແລະ ຮີດຄອງປະເພນີຂອງປະຊາຊົນບັນດາເຜົ່າ.

### 2. ຄວາມສຳຄັນຂອງວັນນະຄະດີພື້ນເມືອງລາວ.

ວັນນະຄະດີພື້ນເມືອງລາວມີບົດບາດສຳຄັນຍິ່ງຕໍ່ການກຳເນີດ ແລະ ການຂະຫຍາຍຕົວຂອງວັນນະຄະດີຂຽນຂອງລາວໃນສະໄໝກ່ອນກໍຄືປັດຈຸບັນ, ບົດວັນນະຄະດີພື້ນເມືອງລາວແມ່ນໝາກຜົນແຫ່ງການຄົ້ນຄິດປະດິດແຕ່ງແບບລວມໝູ່ຂອງປະຊາຊົນຜູ້ອອກແຮງງານລາວບັນດາເຜົ່າ, ສ່ວນຫຼາຍແມ່ນຊາວໄຮ່ນາ, ບົດວັນນະຄະດີພື້ນເມືອງລາວໄດ້ສ່ອງແສງວິຖີຊີວິດ ແລະ ແນວຄິດຈິດຕະສາດຂອງປະຊາຊົນລາວບັນດາເຜົ່າຢ່າງເລິກເຊິ່ງ. ດັ່ງນັ້ນ, ມັນຈຶ່ງມີຄວາມສຳຄັນທີ່ສຸດຕໍ່ກັບການດຳລົງຊີວິດ, ການຕໍ່ສູ້ຕ້ານກັບໄພທຳມະຊາດ ແລະ ສັງຄົມ.

### 3. ປະເພດ ແລະ ຄຸນຄ່າຂອງວັນນະຄະດີພື້ນເມືອງລາວ.

#### 3.1. ປະເພດຂອງວັນນະຄະດີພື້ນເມືອງລາວ:

ວັນນະຄະດີພື້ນເມືອງລາວແບ່ງອອກເປັນ 3 ປະເພດຄື: ປະເພດຄຳຮ້ອຍແກ້ວ, ຮ້ອຍກອງ ແລະ ການສະແດງເທິງເວທີ.

#### 3.1.1 ປະເພດຄຳຮ້ອຍແກ້ວ:

ປະເພດຄຳຮ້ອຍແກ້ວແມ່ນເລື່ອງເລົ່າພື້ນເມືອງປະເພດໜຶ່ງເຊິ່ງແມ່ນປະຊາຊົນຜູ້ອອກແຮງງານເປັນຜູ້ປະດິດຄິດແຕ່ງຂຶ້ນດ້ວຍການພັນລະນາເຫດການ ແລະ ການເຄື່ອນໄຫວຂອງຕົວລະຄອນເພື່ອສ່ອງແສງເຖິງແບບແຜນການດຳລົງຊີວິດ, ແນວຄິດຈິນຕະນາການຂອງຄົນລາວທີ່ປະກອບມີ: ເທບນິຍາຍ, ພື້ນສືບ, ນິທານອັດສະຈັນ, ນິທານຊວນຫົວ ແລະ ນິທານສັດ

#### 3.1.2 ປະເພດຄຳຮ້ອຍກອງ:

ປະເພດຄຳຮ້ອຍກອງແມ່ນວັນນະຄະດີພື້ນເມືອງປະເພດໜຶ່ງ ເຊິ່ງແມ່ນປະຊາຊົນຜູ້ອອກແຮງງານເປັນຜູ້ປະດິດຄິດແຕ່ງຂຶ້ນດ້ວຍກາບກອນມີການສຳຜັດກັນເກາະກ່າຍກັນທີ່ປະກອບມີ: ຄຳໂອ່ນ, ຄຳທວາຍ, ຄຳສຸພາສິດ, ຄຳຜະຫຍາ, ຂັບລຳ ແລະ ເຊີ້ງ.

### 3.1.3 ປະເພດການສະແດງເທິງເວທີ

ການສະແດງເທິງເວທີ ແມ່ນວັນນະຄະດີພື້ນເມືອງປະເພດໜຶ່ງ ເຊິ່ງແມ່ນປະຊາຊົນຜູ້ອອກແຮງເປັນຜູ້ປະດິດຄິດແຕ່ງຂຶ້ນດ້ວຍວິທີນຳເອົາບົດເລື່ອງ ແລະ ການກອນພື້ນເມືອງມາປະສົມກັບສິລະປະເທິງເວທີເຊັ່ນ ແສງ, ສີ, ສຽງ ແລະ ທ່າທີກິລິຍາຂອງຕົວລະຄອນທີ່ສະອາດງາມຕາຕາມສະຖານທີ່ຕ່າງໆ, ວັນນະຄະດີປະເພດນີ້ມີ: ລຳເລື່ອງ, ລະຄອນກ້ອມ, ລະຄອນເວົ້າ, ລະຄອນຕຸກກະຕາ, ລະຄອນໃບ້, ລະຄອນເພງ ແລະ ອື່ນໆ...

## 3.2 ຄຸນຄ່າຂອງວັນນະຄະດີພື້ນເມືອງລາວ :

- ມີຄຸນຄ່າທາງດ້ານເນື້ອໃນ ແລະ ສິລະປະທີ່ດີເດັ່ນ ສາມາດສະໜອງຄວາມຮູ້ ໃນດ້ານການປະດິດຄິດແຕ່ງວັນນະຄະດີໃຫ້ແກ່ພວກເຮົາ.
- ສະໜອງຄວາມຮູ້ທາງດ້ານປະຫວັດສາດ ເຊິ່ງເປັນເອກະສານສຳລັບຄົ້ນຄ້ວາເຖິງປະຫວັດສາດການເຄື່ອນໄຫວຂອງສັງຄົມມະນຸດ ແລະ ປະຫວັດສາດຄວາມເປັນມາຂອງຊາດ, ຂອງປະຊາຊົນບັນດາເຜົ່າໃນລາວ.
- ສະໜອງຄວາມຮູ້ກ່ຽວກັບຄວາມອຸດົມຮັ່ງມີ ແລະ ຄວາມສວຍງາມຂອງປະເທດຊາດ, ບ້ານເມືອງເຊິ່ງໄດ້ພັນລະນາເຖິງ ພາບທຳມະຊາດເຊັ່ນ: ພູຜາປ່າດົງ, ຫ້ວຍນ້ຳລຳເຊ...
- ສຶກສາອົບຮົມແນວຄິດ ຄຸນສົມບັດ ບຸກລະດົມນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ຮັກດິນດອນຕອນຫຍ້າ, ພູຜາປ່າດົງ, ມີຄວາມດຸໝັ່ນໃນການອອກແຮງງານ.
- ໃຫ້ຕຳລາບົດຮຽນຊີວິດ, ບົດຮຽນຄວາມຮູ້ທາງດ້ານທຳມະຊາດ, ສັງຄົມ, ການເພີ່ມພູນຜະລິດຜົນຕະຫຼອດເຖິງຮີດຄອງປະເພນີແກ່ປະຊາຊົນລາວບັນດາເຜົ່າ.

### ຄຳຖາມ

1. ວັນນະຄະດີພື້ນເມືອງລາວມີຄວາມໝາຍແນວໃດ?
2. ວັນນະຄະດີພື້ນເມືອງລາວມີຄວາມສຳຄັນ ແລະ ມີຄຸນຄ່າແນວໃດ?
3. ວັນນະຄະດີພື້ນເມືອງລາວມີຈັກປະເພດ? ປະເພດໃດແດ່?

# ບົດທີ 2
# ວັນນະຄະດີພື້ນເມືອງລາວປະເພດຄຳຮ້ອຍແກ້ວ

## 1. ເທບນິຍາຍ

### ກ. ຄວາມໝາຍ

ເທບນິຍາຍແມ່ນເລື່ອງເລົ່າພື້ນເມືອງປະເພດຄຳຮ້ອຍແກ້ວທີ່ເກີດຂຶ້ນທຳອິດໃນລະບອບສັງຄົມປະຖົມບູຮານ, ເຊິ່ງມີເນື້ອໃນພັນລະນາເຖິງການປະພຶດ, ການເຄື່ອນໄຫວຂອງຕົວລະຄອນເຊັ່ນ: ຄົນ, ແຖນ, ອິນ, ພົມ ແລະ ຜີໃນສະໄໝນັ້ນ, ແມ່ນໝາກຜົນແຫ່ງການປະດິດຄິດສ້າງວັດທະນະທຳທາງດ້ານຈິດໃຈຂອງຄົນ, ຮູບການປະດິດຄິດແຕ່ງຕິດພັນຢ່າງສະໜິດແໜ້ນກັບທຳມະຊາດ, ການເຄື່ອນໄຫວວຽກງານຕົວຈິງ, ການດຳລົງຊີວິດ, ການເຊື່ອຖືຮີດຄອງປະເພນີ ແລະ ຄວາມມຸ້ງມາດປາຖະໜາຂອງຊາວບູຮານ.

### ຂ. ໝາກເຕົ້າປຸງ

ເທບນິຍາຍ "ໝາກນ້ຳເຕົ້າປຸງ" ແຕ່ກ່ອນໂລກທີ່ເຮົາຢູ່ນີ້ຍັງເປັນດິນເປັນຫຍ້າຢູ່ ແລະ ມີຟ້າມີແຖນ, ເຊື່ອກັນວ່າ ແຖນຢູ່ເມືອງບົນຄົນຢູ່ເມືອງລຸ່ມ ແຕ່ລະຫ່ວາງຄົນກັບແຖນທ່ຽວໄປຫາກັນໄດ້ໂດຍອາໃສເຄືອເຂົາກາດພາດແຕ່ເມືອງລຸ່ມຂຶ້ນເມືອຮອດເມືອງແຖນ, ຢູ່ເມືອງແຖນພຸ້ນ ມີພະຍາແຖນຫຼວງເປັນເຈົ້າໃຫຍ່ມີອຳນາດເໜືອຄົນ ແລະ ແຖນທັງຫຼາຍ, ຄົນທີ່ຢູ່ເມືອງລຸ່ມ ກໍຕ້ອງຂຶ້ນກັບແຖນ, ປາງນັ້ນແຖນໃຫຍ່ໄດ້ສົ່ງຂຸນໃຫຍ່ສາມຂຸນລົງມາສ້າງເມືອງລຸ່ມ, ຜູ້ໜຶ່ງ ຊື່ວ່າ ປູລາງເຊີງ, ຜູ້ສອງຊື່ ຂຸນເດັດ, ຜູ້ສາມຊື່ ຂຸນຄານ. ພະຍາແຖນຫຼວງສັ່ງໃຫ້ຄົນທັງຫຼາຍກ່ອນຈະກິນເຂົ້າຕ້ອງບອກແຖນຫຼືເອີ້ນແຖນລົງມາກິນນຳ, ອັນໃດແຊບໆກໍແບ່ງສ່ວນສົ່ງໃຫ້ແຖນ ຕໍ່ມາຄົນທັງຫຼາຍພັດລືມ. ຄຳສັ່ງຂອງແຖນ, ກິນເຂົ້າ, ມີຂອງກິນແຊບໆກໍບໍ່ເອີ້ນແຖນກິນນຳ ເມື່ອນັ້ນພະຍາແຖນຈິ່ງບັນດານ ໃຫ້ນ້ຳຖ້ວມເມືອງລຸ່ມຈົນເຮັດໃຫ້ຄົນຕາຍໄປໝົດ ຍັງເຫຼືອແຕ່ຂຸນທັງສາມທີ່ພະຍາແຖນຫຼວງສົ່ງລົງມານັ້ນເຂົາເຈົ້າໄດ້ເອົາໄມ້ແຕ່ງເປັນແພເພື່ອອາໄສຢູ່ ເມື່ອມີລົມພັດມາຈິ່ງເຮັດໃຫ້ແພຂອງເຂົາເຈົ້າລ່ອງລອຍຂຶ້ນ ເມືອຮອດເມືອງແຖນ ພະຍາແຖນຈິ່ງຖາມຂຸນທັງສາມວ່າ" ສູເຈົ້າຂຶ້ນມາຫາຕູເຮັດຫຍັງ? ສູເຈົ້າຫາກບໍ່ຟັງຄວາມຕູ ຈັກເປັນສັນໃດກໍຢ່າສູແລ. ເມື່ອນັ້ນສູທັງສາມ ຈິ່ງເລົ່າເຫດການ ໃຫ້ແຖນຫຼວງຟັງທຸກປະການ. ຫຼັງຈາກນັ້ນພະຍາແຖນຈິ່ງໃຫ້ທັງສາມຂຸນໄປພັກຢູ່ດອນກາງບຶງແຫ່ງໜຶ່ງໃນເມືອງແຖນ ຊື່ວ່າ "ດອນບຶງແຖນລໍ" ເປັນການຊົ່ວຄາວ.

ເມື່ອນ້ຳບົກແຫ້ງລົງແລ້ວພວກຂຸນທັງສາມກໍຄິດຮອດເມືອງລຸ່ມຈິ່ງພາກັນໄປຫາພະຍາເວົ້າວ່າ "ຕູນີ້ຢູ່ເມືອງບົນບໍ່ແກ່ວນແລ່ນເມືອງຟ້າບໍ່ເປັນຕູຂ້ອຍຂໍຄືນເມືອສ້າງເມືອງລຸ່ມກິນປາເຮັດນາ

ເມືອງລຸ່ມກິນເຂົ້າດັ່ງເກົ່າເຫຼົ່າສອງທີເຫັ້ນພະຍາແຖນເຫັນດີໃຫ້ຂຸນທັງສາມລົງມາສ້າງເມືອງລຸ່ມອີກ, ພະຍາແຖນໄດ້ໃຫ້ຄວາຍຜູ້ໃຫຍ່ຕົວໜຶ່ງເພື່ອໃຊ້ໃນການເຮັດນາ. ເມື່ອລົງມາຮອດກໍພາກັນຖາງປ່າຫຍ້າເຮັດນາໃສ່ດິນແຫ່ງໜຶ່ງໂດຍອາໄສຄວາຍຕູ້ທີ່ພະຍາແຖນໃຫ້ນັ້ນ ພວກເຂົາໄດ້ພາກັນໄຖຊ່າວໃຫ້ເປັນນາ, ດິນແຫ່ງນັ້ນມີຊື່ວ່າ "ນານ້ອຍອ້ອຍໜູ" ສືບມາ. ຕົກມາຮອດ 3 ປີ ຄວາຍຕູ້ເລີຍຕາຍ, ເຂົາໄດ້ປະສາກຄວາຍໄວ້ທີ່ນານ້ອຍອ້ອຍໜູ. ຕໍ່ມາໄດ້ມີເຄືອນ້ຳເຕົ້າປົ່ງອອກມາຈາກຮູດັງຄວາຍແລ້ວເກີດເປັນໝາກໃຫຍ່ໜ່ວຍໜຶ່ງທໍ່ກັບຮືນເຂົ້າເອີ້ນວ່າ "ໝາກນ້ຳເຕົ້າປຸງ" ຢູ່ພາຍໃນໝາກເຕົ້ານັ້ນມີຄົນເວົ້າຈາຮ້ອງໂຮດັງກ້ອງຢູ່ຂຸນທັງສາມເຫັນ, ດັ່ງນັ້ນ ກໍມີຄວາມປະຫຼາດໃຈດັ່ງນັ້ນປູລາງເຊີງຈຶ່ງດັງໄຟຂຶ້ນເຜົາເຫຼັກຊີຈົນແດງຊີໜ່ວຍໝາກນຳເຕົ້າປຸງນັ້ນພໍຊີເຂົ້າຮອດແລ້ວກໍມີຄົນບຸບຽດກັນອອກມາເທື່ອເລັກເທື່ອນ້ອຍ, ອອກມາດ້ວຍຄວາມລຳບາກ ແລະ ຊ້ານານເນື່ອງຈາກຮູຊີນ້ອຍໂພດ. ເມື່ອເຫັນແນວນັ້ນຂຸນຄານຈຶ່ງເອົາສິ່ວໄປເຈາະຕື່ມໃຫ້ຮູໃຫຍ່ກ່ວາເກົ່າຄົນຈຶ່ງອອກມາຫຼາຍມີທັງຍິງທັງຊາຍ, ພ້ອມດ້ວຍສິມບັດເຂົ້າຂອງເງິນທອງ, ງົວ, ຄວາຍ, ຊ້າງ, ມ້າ, ໝູ, ໝາ, ເປັດ, ໄກ່ ຫຼຸຫຼັ່ງອອກມາສາມມື້ສາມຄືນຈຶ່ງໝົດ, ພໍໝົດແລ້ວຂຸນທັງສາມຈຶ່ງຈັດແບ່ງຄົນເຫຼົ່ານັ້ນອອກເປັນໝູ່ໆເອີ້ນຊື່ຕ່າງກັນເພື່ອບໍ່ໃຫ້ສັບສົນ. ຈຳພວກຄົນທີ່ອອກຮູຊີນັ້ນແມ່ນເຜົ່າຂະມຸ, ປັນເປັນສອງໝູ່ ໝູ່ໜຶ່ງເອີ້ນວ່າ " ໄທລົມ" (ຊາວລົມ) " ໝູ່ໜຶ່ງເອີ້ນວ່າ " ໄທວີ "(ຊາວວີ). ສ່ວນທີອອກຕາມຮູສິ່ວນັ້ນ ເປັນເຜົ່າໄທລາວ. ປັນອອກເປັນສາມໝູ່ ໝູ່ທີໜຶ່ງເອີ້ນວ່າ "ໄທເລີງ" ໝູ່ສອງເອີ້ນວ່າ "ໄທລໍ່" ໝູ່ສາມເອີ້ນວ່າ "ໄທຄວາງ", ເມື່ອຈັດຕັ້ງແລ້ວປູລາງເຊີງໄດ້ບອກສອນໃຫ້ຄົນທັງຫຼາຍໄດ້ຮັກແພງກັນ, ນັບຖືເປັນອ້າຍເປັນນ້ອງ ແລະ ໃຫ້ຖືວ່າເປັນຄົນຊາດດຽວກັນ, ຍ້ອນຄົນທັງໝົດເກີດຈາກໝາກເຕົ້າປຸງໜ່ວຍດຽວກັນກໍເໝືອນເກີດຈາກທ້ອງແມ່ດຽວກັນ, ຜູ້ອອກກ່ອນໃຫ້ຖືເປັນອ້າຍ ແລະ ເອື້ອຍ, ຜູ້ອອກລຸນໃຫ້ຖືເປັນອ້າຍຕາມລຳດັບ. ນອກນັ້ນ, ປູ່ລາງເຊີງຍັງໄດ້ບອກສອນໃຫ້ຄົນທັງຫຼາຍຮູ້ຈັກທຳມາຫາກິນລ້ຽງຊີບ, ຮູ້ຈັກສ້າງບ້ານແປງເຮືອນ ແລະ ສ້າງຄອບຄົວມີຜົວເມຍ. ຕໍ່ນັ້ນມາຄົນຈຶ່ງມີລູກຍິງ, ລູກຊາຍຢ່າງຫຼວງຫຼາຍຂຶ້ນ. ປູ່ລາງເຊີງໄດ້ບອກສອນໃຫ້ລູກຫຼານໃຫ້ຮັກພໍ່ແມ່, ຮັກປູ່ຍ່າ, ຕານາຍ ແລະ ຮູ້ຮັກມູນມັງທີ່ພໍ່ແມ່ ແລະ ຕານາຍໄດ້ສ້າງເອົາໄວ້ໃຫ້.

ຕໍ່ມາຄົນທັງຫຼາຍກໍນັບມື້ນັບຂະຫຍາຍອອກຢ່າງກ້ວາງຂວາງ ບາງຄາວກໍເຕົ້າໂຮມກັນເຂົ້າເປັນເອກະພາບ, ບາງຄາວກໍແຍກກັນອອກເປັນຫຼາຍຈຸຫຼາຍເຫຼົ່າຫຼາຍເຜົ່າຫຼາຍກໍເຖິງຈະຕົກໄປຢູ່ແຫ່ງຫົນໃດ ຄົນເຫຼົ່ານັ້ນກໍຍັງນັບຖືກັນວ່າເປັນອ້າຍ ເປັນນ້ອງເຊື້ອສາຍດຽວກັນເຊັ່ນ: ເຜົ່າຂະມຸຖືເປັນອ້າຍກົກ, ເຜົ່າໄທລາວເປັນນ້ອງກາງ, ເຜົ່າມົ້ງເປັນນ້ອງຫຼ້າ ເຊິ່ງປະຊາຊົນລາວຕາມທ້ອງຖິ່ນຕ່າງໆຍັງໄປມາຫາສູ່, ຊຶ່ງກັນ ແລະ ກັນ, ກິນເຂົ້າເຊົາເຮືອນ ໂດຍບໍ່ຄິດຄ່າລາຄາໃດໆໝົດ, ມີວຽກກໍຊ່ວຍເຫຼືອກັນ, ມີບຸນສິນ ກິນທານ ແລະ ພິທີການຕ່າງໆກໍບອກເລົ່າກັນ.

## 2. ພື້ນສືບ

**ກ. ຄວາມໝາຍ**

ພື້ນສືບແມ່ນນິດເລົ່າພື້ນເມືອງປະເພດໜຶ່ງ ເຊິ່ງມີເນື້ອໃນເວົ້າເຖິງບຸກຄົນ ຫຼື ເຫດການທີ່ຕິດພັນກັບປະຫວັດສາດ, ໃນເບື້ອງຕົ້ນພື້ນສືບເປັນນິດເລົ່າກ່ຽວກັບບຸກຄົນໃດໜຶ່ງ ຫຼື ເຫດການໃດໜຶ່ງທີ່ມີຈິງໃນຈຸ້ມເຈື້ອເຊື້ອສາຍຂອງຄົນເຮົາ; ຕໍ່ມານິດເລື່ອງເຫຼົ່ານັ້ນໄດ້ຖືກເລົ່າຕໍ່ໆກັນມາຢ່າງກວ້າງຂວາງ

**ຂ. ເລື່ອງ "ສີໂຄດຕະບອງ"** ໃນບາງກ່ອນມີຄອບຄົວໜຶ່ງທີ່ທຸກຍາກ, ມີລູກຊາຍຄົນໜຶ່ງ ຊື່ວ່າ ທ້າວສີ ເຊິ່ງເປັນຄົນສະຫຼາດສະຫຼຽວ. ເຖິງພໍ່ແມ່ຈະທຸກຍາກແຕ່ກໍເປັນຫ່ວງນຳອະນາຄົດຂອງລູກຊາຍ, ຈຶ່ງໄດ້ນຳເອົາລູກຊາຍໄປບວດຢູ່ວັດແຕ່ອາຍຸໄດ້ 10 ປີ ຈົນຮອດ 20 ປີ ສິກອອກວັດມາກາຍເປັນຊຽງ.

ຫຼັງຈາກນັ້ນ, ພໍ່ແມ່ໄດ້ນຳເອົາໄປຮັບໃຊ້ພະຍາໃນເມືອງ ເຊິ່ງເປັນໜ້າຮັບຜິດຊອບລ້ຽງຊ້າງມ້າ ແລະ ໄປຕັກນ້ຳມັນຍາງມາເຮັດກະບອງໄດ້. ບາງມື້ກໍຖືກສັ່ງໄປຕັດຫຍ້າມາລ້ຽງຊ້າງມ້າ, ບາງມື້ຖືກໃຊ້ໄປຕັດເອົາຟືນຢູ່ປ່າດົງ, ບາງມື້ກໍຖືກໜຶ້ງເຂົ້າແຕ່ງກິນ.

ເຂົ້າໜຶ້ງແຕ່ລະເທື່ອກໍພຽງພໍໃຫ້ທຸກຄົນໄດ້ກິນຈົນອີ່ມ. ຊຽງສີຄິດວ່າຖ້າເອົາເຂົ້າທີ່ດໍາໄປຖິ້ມເຂົ້າທີ່ເຫຼືອກໍຈະບໍ່ພໍກັນກິນຊຽງສີຈຶ່ງຕັດສິນໃຈກິນເຂົ້າດໍາປັ້ນນັ້ນ. ພໍແຕ່ຊຽງສີກິນເຂົ້າດໍາປັ້ນນັ້ນໝົດກໍຮູ້ສຶກວ່າຮ່າງກາຍເກີດມີກຳລັງມັງຊາຢ່າງໜ້າແປກປະຫຼາດ ຈຶ່ງລອງເອົາໄມ້ກະດ້າມລຳເທົ່າແຂນນັ້ນມາຫັກເບິ່ງກໍເຫັນວ່າຫັກໄດ້ໂດຍງ່າຍ, ຈາກນັ້ນລອງຍູ້ຕົ້ນໄມ້ລຳເທົ່າຄົນເບິ່ງກົກໄມ້ກໍລົ້ມລົງຢ່າງງ່າຍດາຍ; ຊຽງສີດີໃຈຫຼາຍຈຶ່ງລອງດຶງງ່າຍາງໃຫຍ່ຢູ່ໃກ້ຫັ້ນ.ໃກ້ນັ້ນເບິ່ງກົກຍາງທັງຕົ້ນກໍກ່ອງລົງມາຈຶ່ງຄິດຢາກຢອກໝູ່ ຊຽງສີ   ຈຶ່ງກ່ອງກົກຍາງລົງແລ້ວເອົາຕົບເຂົ້າຫ້ອຍໄວ້ປາຍຍາງໃຫຍ່ສູງຈົນແຫງນຄໍຕິດຫຼັງ, ຈາກນັ້ນຊຽງສີກໍແຕ່ງຢູ່ຄືວກິນຖ້າໝູ່, ພໍໝູ່ພາກັນຫາບໄມ້ຍາງ ແລະ ຫາບນ້ຳມັນຍາງມາແລ້ວກໍກຽມຕົວກິນເຂົ້າ,ຊຽງສີແຕ່ງອາຫານແຕ່ບໍ່ມີຕົບເຂົ້າໃຫຍ່ທີ່ທຸກຄົນເຄີຍຈົກກິນເຂົ້າ ຈຶ່ງຖາມທ້າວຊຽງສີ, ຊຽງສີທັງຫົວທັງຊີ້ມືຂຶ້ນປາຍຍາງທຸກຄົນແນມຂຶ້ນໄປເຫັນຕົບເຂົ້າຫ້ອຍຢູ່ປາຍຍາງໃຫຍ່ກໍຕົກໃຈ.  ໃນຂະນະທີ່ໝູ່ຄູ່ທັງຕົກໃຈທັງແປກໃຈຢູ່ນັ້ນ. ຊຽງສີ ກໍໃຊ້ມືກ່ອງກົກຍາງລົງມາຈົນປາຍເຖິງດິນແລ້ວຈັບເອົາຕົບເຂົ້າມາສູ່ໝູ່ກິນ.

ຕັ້ງແຕ່ນັ້ນມາ ຊື່ສຽງຂອງຊຽງສີກໍດັງໄປທົ່ວເມືອງ ຈົນເຮັດໃຫ້ພະຍາສົນໃຈ. ພະຍາໄດ້ພາຊຽງສີໄປຄ້ອງຊ້າງນຳພໍເຫັນຊ້າງປ່າຊຽງສີກໍອອກໄປຈັບຊ້າງມາມອບໃຫ້ພະຍາໂດຍງ່າຍຈົນພະຍາຄິດວ່າຊຽງສີບໍ່ແມ່ນຄົນທຳມະດາຈຶ່ງນຳເອົາເລື່ອງນີ້ຂຶ້ນໄປກາບທູນເຈົ້າແຜ່ນດິນຢູ່ວຽງຈັນ ເຊິ່ງໃນເວລານັ້ນເສິກຊ້າງພວມທຳລາຍມ້າງເພຢູ່ນະຄອນຫຼວງວຽງຈັນພໍດີ, ມີຊ້າງຈຳນວນລ້ານຕົວອາລະວາດມ້າງເພເຮືອນຊານ ແລະ ໄລ່ຂ້າປະຊາລາຊະດອນໄປທົ່ວເມືອງ.

ຊຽງສີຈຶ່ງຂານອາສາໄປປາບຊ້າງແຕ່ກ່ອນຈະຂຶ້ນໄປວຽງຈັນຊຽງສີໄດ້ເຂົ້າໄປປ່າ, ໄປເອົາງ່າໄມ້ດຳທີ່ໃຊ້ເຮັດໄມ້ກະດ້າມນັ້ນມາເຮັດເປັນໄມ້ຄ້ອນຕະບອງຖືເປັນອາວຸດປະຈຳຕົວ. ຊຽງສີສູ້ກັບຊ້າງນັບເປັນລ້ານຕົວຢູ່ນະຄອນວຽງຈັນ, ສຽງບາດຄ້ອນຂອງ ຊຽງສີຟາດໃສ່ຫົວຊ້າງດັງປານສຽງພູຜາຖະຫຼົ່ມປານຟ້າຮ້ອງ ເມື່ອຖືກຊ້າງຕົວໃດກໍ່ຟົ້ງໄປທົ່ວທິບ ບາງຕົວກໍ່ຟົ້ງຂ້າມນ້ຳຂອງໄປກໍ່ມີ.

ຫົວໜ້າຊ້າງເຫັນແນວນັ້ນຈຶ່ງສັ່ງໃຫ້ຝູງຊ້າງຢຸດ ແລະ ຈ່າຫົວໜ້າຝູງຊ້າງຈຶ່ງເຂົ້າສູ້ກັບທ້າວຊຽງສີ 3 ວັນ3 ຄືນຫົວໜ້າຊ້າງຈຶ່ງຕາຍ ແລະ ພວກຊ້າງທີ່ຍັງເຫຼືອກໍ່ພາກັນແຕກເຂົ້າປ່າບໍ່ອອກມາອາລະວາດບ້ານເມືອງອີກ.

ເຈົ້າແຜ່ນດິນວຽງຈັນພໍໃຈກັບຄວາມເກັ່ງກ້າສາມາດຂອງ ຊຽງສີຫຼາຍຈຶ່ງຍົກລູກສາວໃຫ້ ແລະແຕ່ງໃຫ້ ຊຽງສີຂຶ້ນເປັນພະຍາ ສີໂຄດຕະບອງທັງມອບເມືອງທີ່ຊຽງສີຢູ່ໃຫ້ເປັນເມືອງສີໂຄດຕະບອງແຕ່ບັດນັ້ນ.

ເມື່ອພະຍາຄົນເກົ່າຖືກປົດອຳນາດກໍ່ມີຄວາມເສຍໃຈແລ້ວເກີດມີຄວາມອາຄາດພຸກພະຍາບາດຕໍ່ພະຍາສີໂຄດຕະບອງຫຼາຍ ຈຶ່ງຂຶ້ນໄປວຽງຈັນລະດົມໝູ່ຄູ່ທີ່ເຄີຍເປັນພະຍາດ້ວຍກັນວ່າ: ດຽວນີ້ພະຍາສີໂຄດຕະບອງອ້າງວ່າເປັນຜູ້ເກັ່ງກ້າຈຶ່ງເຝິກແອບກຳລັງເພື່ອຈະຂຶ້ນມາຕີເອົາເມືອງພໍ່ຕາຢູ່ວຽງຈັນ ເມື່ອເລື່ອງນີ້ເຂົ້າໄປເຖິງຫູຂອງເຈົ້າແຜ່ນດິນວຽງຈັນຈຶ່ງເກີດມີຄວາມຢ້ານກົວຫຼາຍ ຈຶ່ງເອີ້ນເອົາລູກສາວທີ່ເປັນເມຍຂອງພະຍາສີໂຄດຕະບອງຂຶ້ນເມືອປຶກສາ.

ເພື່ອເອົາໃຈພະຍາສີໂຄດຕະບອງເຈົ້າແຜ່ນດິນວຽງຈັນຈຶ່ງປ່ຽນຊື່ນະຄອນຫຼວງວຽງຈັນມາເປັນ “ນະຄອນລ້ານຊ້າງວຽງຈັນ” ເພາະລູກເຂີຍປາບຊ້າງໄດ້ຫຼາຍລ້ານໂຕພໍເມຍຂອງພະຍາສີໂຄດຕະບອງກັບມາຢູ່ນຳຜົວໄດ້ສໍ້ຖາມຜົວວ່າ: ພະຍາມີຄວາມເກັ່ງກ້າສາມາດຫຼາຍບໍ່ຮູ້ວ່າມີອັນໃດເປັນຈຸດອ່ອນເພາະນາງຈະເປັນຜູ້ລະວັງໄພຊ່ວຍ, ພະຍາສີໂຄດຕະບອງບອກວ່າ ອັນວ່າຕົວເຮົານີ້ບໍ່ມີອັນໃດຈະທຳລາຍໃຫ້ຕາຍໄດ້, ປືນຜາໜ້າໄມ້, ປືນໄຟ ຫຼື ເອົາຈົມນ້ຳກໍ່ເຮັດໃຫ້ເຮົາຕາຍບໍ່ໄດ້ເວັ້ນເສຍແຕ່ຈະຫຼອງເຂົ້າຮູເກົ່າ.

ພໍຮູ້ແນວນັ້ນນາງຊຽວອ້ອມຜູ້ເປັນເມຍຈຶ່ງຟ້າວຂຶ້ນໄປກາບທູນໃຫ້ບິດາຊົງຊາບ ພະເຈົ້າແຜ່ນດິນວຽງຈັນຈຶ່ງແຕ່ງໃຫ້ເສນາອາມາດແປງຫ່ວງຍົນ “ຫ້າງຫອກຢູ່ຫ້ອງຖ່າຍໜັກ” ພໍກ້ອນອາຈົມຕົກລົງຖືກສາຍຫ່ວງຍົນລູກຫ່ວງກໍ່ຈະພຸ່ງຂຶ້ນສຽບຮູທວນທັນທີ. ພໍຫ້າງຫາກະກຽມຄັກແນ່ແລ້ວກໍ່ອັນເຊີນລູກເຂີຍ ພະຍາສີໂຄດຂຶ້ນໄປຢ້ຽມຢາມທັງຈັດຫ້ອງນອນ, ຫ້ອງກິນ, ຫ້ອງຖ່າຍພິເສດໃຫ້.

ຕອນເຊົ້າພະຍາສີໂຄດຕະບອງເຂົ້າຫ້ອງຖ່າຍໜັກ ລູກຍົນກໍ່ພຸ່ງເຂົ້າຮູທວນຈົນຮອດຄໍຫອຍກ່ອນພະຍາສີໂຄດຕະບອງຈະຂາດໃຈຕາຍກໍ່ໄດ້ຊາບແຊ່ງໄວ້ວ່າ: ເມື່ອໃດພວກຄົນລາວບໍ່ສ້າງເມືອງສີໂຄດຕະບອງໃຫ້ຮຸ່ງເຮືອງວຽງຈັນກໍ່ຮຸ່ງເຮືອງບໍ່ໄດ້ ແລະ ຂໍໃຫ້ເມືອງລາວນີ້ຮຸ່ງເທົ່າ ຊ້າງພັບຫູ ຮຸ່ງ

ເທົ່າງູແລບລີ້ນເທົ່ານັ້ນ. ຈາກນັ້ນພະຍາສີໂຄດຕະບອງກໍຂາດໃຈຕາຍແລ້ວເສນາອາມາດຈຶ່ງນຳສົບລ່ອງແພໄປເມືອງສີໂຄດເພື່ອຄົບງັນ ແລະ ມ້ຽນເຜົາ.

ຄຳທີ່ວ່າ "ເມືອງສີໂຄດຕະບູນ" ຄົນລາວຢູ່ທາງຝັ່ງຊ້າຍເອີ້ນວ່າ "ເມືອງສີໂຄດຕະບອງ" ກໍເພາະລະນຶກເຖິງທ້າວ ຊຽງສີ ຊຶ່ງແມ່ນຄົນທຳມະດາແຕ່ມີຄວາມສາມາດເກັ່ງກ້າໄດ້ຂຶ້ນເປັນພະຍາ ແລະ ມີຄ້ອນຕະບອງເພັດເປັນອາວຸດ. ສ່ວນຄົນລາວຢູ່ຝັ່ງຂວາເອີ້ນວ່າ " ເມືອງສີໂຄດ " ກໍເພື່ອລະເຖິງບຸນຄຸນເພິ່ນ. ສ່ວນຕະບູນກໍຍ້ອນວ່າທີ່ຕັ້ງຂອງເມືອງຢູ່ກ້ອງນ້ຳຫີນບູນ, ຢູ່ໃນຕຳນານແລ້ວວ່າ " ສີໂຄດຕະບອງ " ແມ່ນນິທານປະຮຳປະຮາກ່າວຕໍ່ກັນມາບໍ່ແມ່ນບໍ່ແມ່ນປະຫວັດສາດ ແລະ ບໍ່ມີຢູ່ໃນພົງສາວະດານລາວ.

ນັບແຕ່ນັ້ນມາຊາວເມືອງສີໂຄດຕະບອງຈຶ່ງໄດ້ພ້ອມພຽງກັນສ້າງທາດສີໂຄດຕະບອງຂຶ້ນເພື່ອລະນຶກເຖິງຄຸນງາມຄວາມດີຂອງເພິ່ນຈົນຮອດທຸກວັນນີ້.

## 3. ນິທານ:

**ກ. ຄວາມໝາຍ.**

ນິທານແມ່ນເລື່ອງທີ່ປະຊາຊົນຜູ້ອອກແຮງງານປະດິດຄິດແຕ່ງຂຶ້ນ, ຢູ່ໃນລະບອບສັງຄົມທີ່ມີຊົນຊັ້ນ. ເນື້ອໃນຕົ້ນຕໍຂອງນິທານແມ່ນສ່ອງແສງເຖິງການຕໍ່ສູ້ຊົນຊັ້ນແລະບັນຫາສັງຄົມອື່ນໆ ເຊັ່ນ: ປະຫວັດສາດ, ການດຳລົງຊີວິດ ແລະ ຄວາມປາຖະໜາຂອງປະຊາຊົນ. ຕົວລະຄອນຂອງນິທານແມ່ນຄົນ, ສັດສາວາສິ່ງ ແລະ ອື່ນໆ ທີ່ມີລັກສະນະເພັດເພີນຈິດເຫຼືອເຊື່ອ.

**ຂ. ເລື່ອງ "ພູທ້າວພູນາງ"**

ຢູ່ເທິງບ້ານຊຽງແມນ ຝັ່ງຂວາຂອງແມ່ນ້ຳຂອງຕໍ່ໜ້ານະຄອນຫຼວງພະບາງຍັງມີພູສອງໜ່ວຍທີ່ມີຮູບຄືຄົນນອນຫງາຍຢ່າງໜ້າອັດສະຈັນ. ເຊິ່ງເອີ້ນກັນວ່າພູທ້າວ ແລະ ພູນາງນິທານຫຍໍ້ພູສອງໜ່ວຍນີ້ ລາວບູຮານໄດ້ເລົ່າຕໍ່ໆກັນມາວ່າ: ແຕ່ຄັ້ງກ່ອນຢູ່ບໍລິເວນອິນຖະປັດຖາມີຄົນຕັດຟືນທີ່ທຸກຍາກຜູ້ໜຶ່ງ, ຊາຍຜູ້ນີ້ ມີເມຍໜຶ່ງຄົນ ແລະ ລູກສາວສິບສອງຄົນ ຍ້ອນຄວາມທຸກຍາກນັ້ນຈຶ່ງເອົາລູກສາວທັງສິບສອງຄົນໄປໂຜດໄວ້ຢູ່ກາງປ່າ. ນາງທັງສິບສອງຄົນຈຶ່ງເດີນໄປຕາມພູຜາປ່າໃຫຍ່ຈຶ່ງໄປພົບກັບນາງຍັກຕົວໜຶ່ງຊື່ວ່າ: ສູນທະລາ ມີລູກສາວຄົນໜຶ່ງຊືວ່າ ນາງກັງຣີ. ນາງຍັກແມ່ໝ້າຍໄດ້ເອົານາງສິບສອງຄົນນັ້ນໄປຢູ່ໃນພະລາຊະວັງ ເພື່ອໃຫ້ຢູ່ກິນກັບລູກສາວຂອງຕົນ.

ນາງທັງສິບສອງຄົນໄດ້ຢູ່ໃນວັງກັບນາງຍັກແມ່ໝ້າຍເປັນເວລາຫຼາຍປີຈົນໃຫຍ່ຂຶ້ນມາພໍສອນສາວ. ເຖິງວັນໜຶ່ງນາງທັງສິບສອງເລີຍພາກັນລັກໜີ. ນາງຍັກກໍຕິດຕາມໄປຈວນຈະພົບແຕ່ນາງທັງສິບສອງກໍເຂົ້າໄປລີ້ຢູ່ໃນປາກຂອງພະຍາງົວຕົວໜຶ່ງ, ເມື່ອຍັກກັບຄືນແລ້ວ ພວກນາງສິບສອງຈຶ່ງ

ພວກນາງຈຶ່ງອອກເດີນທາງຕໍ່ໆໄປ. ຕໍ່ມານາງສິບສອງໄປເຖິງນະຄອນຫຼວງ ເຊິ່ງເປັນເມືອງຂອງປາລຸທະເສນ, ພະຍາອົງນີ້ເຫັນນາງທັງສິບສອງມີຮູບຮ່າງຈົບງາມກໍເອົາຂຶ້ນເປັນມະເຫສີ. ນາງແມ່ໝ້າຍເມື່ອໄດ້ຊາບຂ່າວວ່ານາງສິບສອງເປັນເທວີຂອງພະຍາປາລຸທະເສນແລ້ວກໍຕາມໄປ.

ເມື່ອປ່ຽນເພດເປັນນາງມະນຸດທີ່ມີເນື້ອກາຍໜຸ່ມນ້ອຍ ແລະ ງົດງາມທີ່ສຸດແລ້ວກໍເຂົ້າໄປໃນພະລາຊະວັງພະຍາເຫັນນາງກໍຫຼົງຮັກຄໍຍົກຂຶ້ນເປັນອັກເອກຄະມະເຫສີ. ຕໍ່ນັ້ນມາບໍ່ນານນາງຍັກກໍແກ້ງເຈັບປ່ວຍບໍ່ກິນເຂົ້າບໍ່ກິນນ້ຳຈົນຮ່າງກາຍຈ່ອຍຜອມຫ່ຽວແຫ້ງລົງຈຶ່ງແນະນຳໃຫ້ພະຍາໄປນຳເອົາໝໍໂຫນ, ນາງຍັກກໍກັບກາຍເປັນແມ່ໝໍໄປຢູ່ຂ້າງໜ້າ. ເມື່ອໝໍດູເບິ່ງແລ້ວບອກວ່າພວກນາງສິບສອງເປັນຄົນເຂັດຂວງ ຖ້າລັບໄລ່ນາງສິບສອງໜີຈາກພະລາຊະວັງ ແລະ ເຈາະເອົາຕາເຂົາທັງມວນມາສູ່ຂ້ວນນາງສູນທະລາຜູ້ເປັນອັກຄະມະເຫສີ ພະຍາດນາງຈຶ່ງຈະຫາຍ ບໍ່ດັ່ງນັ້ນນາງຈັກຕາຍໄປ.

ດ້ວຍຄວາມຫຼົງຮັກນາງຍັກພະຍາຈຶ່ງສັ່ງໃຫ້ບ່າວໄພ່ເຈາະຕານາງສິບສອງແລ້ວເອົາໄປໄວ້ຖ້ຳເລິກແຫ່ງໜຶ່ງ. ນາງຍັກເມື່ອເອົາຕາຂອງນາງສິບສອງມາສູ່ຂວັນແລ້ວກໍສົ່ງເມືອໃຫ້ລູກສາວຂອງຕົນຮັກສາໄວ້ທີ່ເມືອງໄວຍະລັບປະຕິ. ນາງສິບສອງເມື່ອໄດ້ຈາກລາຊະວັງໄປແລ້ວແຕ່ລະຄົນກໍຕັ້ງຄັນ (ມີລູກ) ດ້ວຍການອຶດຫິວເມື່ອມີຜູ້ອອກລູກມາກໍຈົກປັນກັນກິນ. ສ່ວນນາງຫຼ້າບ່າວໄພ່ໄດ້ເຈາະຕາເບື້ອງຊ້າຍເທົ່ານັ້ນຈຶ່ງຫຼຽວເຫັນເວລາພວກເອື້ອຍໆອອກລູກຈົກແບ່ງກັນກິນນັ້ນນາງໄດ້ແບ່ງເຊື່ອງໄວ້ ເມື່ອນາງອອກລູກກໍເອົາຊິ້ນທີ່ນາງແບ່ງປັນໄວ້ນັ້ນໃຫ້ພວກເອື້ອຍໆກິນ ສ່ວນລູກຂອງນາງກໍເອົາເຊື່ອງໄວ້ ຕໍ່ຈາກນັ້ນ ແມ່ໄກ່ປ່າຕົວໜຶ່ງມີຄວາມເມດຕາກໍຊອກຫາເຂົ້າເປືອກມາລ້ຽງທ້າວນ້ອຍ ແລະນາງສິບສອງພໍບໍ່ໃຫ້ຕາຍ.

ເມື່ອທ້າວນ້ອຍໃຫຍ່ຂຶ້ນມານາງຫຼ້າກໍບອກເລົ່າແກ່ພວກເອື້ອຍວ່າ:ລູກຂອງຕົນຍັງຢູ່. ທ້າວນ້ອຍອອກຈາກຖ້ຳໄປທ່ຽວຕາມບ້ານໃກ້ຄຽງໂດຍໄດ້ຈັບເອົາໄກ່ເຖື່ອນຕົວແຂງແຮງໄປຕີກັບໄກ່ເດັກນ້ອຍຊາວບ້ານ, ພໍຕີກແລງຝຸງເດັກນ້ອຍກໍເອົາເຂົ້າ ແລະ ນ້ຳໃຫ້ແລ້ວກໍຫາບມາສູ່ນາງສິບສອງກິນ.

ວັນໜຶ່ງທ້າວນ້ອຍໄດ້ໄປຫຼິ້ນໝາກຣຸກໝາກສະກາໃນນະຄອນຫຼວງເຊິ່ງເປັນເມືອງພະຍາພໍ່ຂອງຕົນ. ເມື່ອພະຍາໄດ້ຊາບວ່າທ້າວນ້ອຍມີຄວາມຊຳນານໃນການຫຼິ້ນຈຶ່ງເອີ້ນທ້າວນ້ອຍມາຫຼິ້ນໝາກຣຸກ, ໝາກສະການຳ. ພະອົງໄດ້ໄຕ່ຖາມເຖິງໂຄດວົງທ້າວນ້ອຍໄດ້ທູນຕອບວ່າຕົນເປັນລູກຂອງນາງຈັນທະປະທຸມນ້ອງຫຼ້າຂອງນາງສິບເອັດພະຍາຈຶ່ງຮູ້ວ່າເປັນລູກຂອງຕົນ.ນັບແຕ່ວັນນັ້ນພະຍາຈຶ່ງຊັກຊວນທ້າວນ້ອຍເຂົ້າມາຢູ່ໃນພະລາຊະວັງນຳພະອົງ. ທ້າວນ້ອຍກໍມາຕາມຄວາມປະສົງຂອງພະຍາແຕ່ທ້າວກໍໄດ້ລັກເອົາເຂົ້າປາອາຫານໄປລ້ຽງນາງສິບສອງຢູ່ບໍ່ຂາດວັນ. ພະຍາປາລຸທະເສນໄດ້ຕັ້ງຊື່ໃຫ້ທ້າວນ້ອຍວ່າ: ພຸດທະເສນ ຕໍ່ມາບໍ່ນານນາງຍັກກໍຮູ້ວ່າທ້າວພຸດທະເສນເປັນລູກຂອງນາງຫຼ້າຈຶ່ງຊອກຂ້າທ້າວນ້ອຍດ້ວຍອຸບາຍເລ່ກົນນາງຈຶ່ງແກ້ງທຳທ່າປ່ວຍຢ່າງໜັກອີກແລ້ວທູນ

ພະຍາຜູ້ເປັນຜົວວ່າມີແຕ່ຢາທີ່ຢູ່ໃນເມືອງໄວຍະລັບປະຕິ ຄືເມືອງເດີມຢ່າງດຽວຂອງນາງທີ່ຈະເອົາຊີວິດນາງໄວ້ໄດ້ ແລະ ຜູ້ທີ່ຈະໄປເອົາຢານັ້ນມີແຕ່ທ້າວພຸດທະເສນຄົນດຽວເທົ່ານັ້ນ. ພະຍາຈຶ່ງໃຊ້ໃຫ້ທ້າວພຸດທະເສນໄປເອົາຢາຕາມຄຳປະສົງຂອງນາງຍັກ.

ທ້າວພຸດທະເສນເລືອກເອົາມ້າຕົວໜຶ່ງແຂງແຮງທີ່ສຸດເຫາະເຫີນເດີນອາກາດໄດ້. ກ່ອນຈະອອກເດີນທາງໄປນາງຍັກໄດ້ມອບໜັງສືສະບັບໜຶ່ງໃຫ້ທ້າວພຸດທະເສນ ແລະ ບອກວ່າ: ໃຫ້ເຈົ້າເອົາໜັງສືສະບັບນີ້ເມືອໃຫ້ນາງກັງຣີ ເມື່ອນາງໄດ້ຮັບແລ້ວເຈົ້າຈະໄດ້ຮັບສິ່ງທີ່ເຈົ້າເພິງໃຈດ້ວຍ.

ທ້າວພຸດທະເສນຮັບເອົາໜັງສືແລ້ວເອົາມັດແຂວນຄໍມ້າແລ້ວກໍອອກເດີນທາງໃນວັນໜຶ່ງໃກ້ຈະເຖິງເມືອງໄວຍະລັບປະຕິຍ້ອນການເດີນທາງໄກທ້າວອິດອ່ອນແຮງເມື່ອຮອດອາສົມບົດພະລືສີທ້າວພຸດທະເສນລົງພັກຜ່ອນເຊົາເມື່ອຍຢູ່ກ້ອງຕົ້ນໂພໄຊ ແລ້ວທ້າວ ແລະ ມ້າກໍກັນຫຼັບໄປ.

ລືສີໄດ້ມາພົບ ແລະ ເຫັນກັບໜັງສືແຂນຄໍມ້າກໍມີຄວາມສົນໃຈຈຶ່ງຕັດເຊືອກເອົາໜັງສືອອກມາອ່ານມີໃຈຄວາມວ່າ:"ດູລານາງກັງຣີ ຄັນເມື່ອຊາຍນ້ອຍຜູ້ນີ້ໄປຮອດໄປເຖິງເມື່ອໃດມຶງນາງຈົ່ງກິນຊາຍນ້ອຍຜູ້ນີ້ເສຍຢ່າໄວ້ "ລືສີເຫັນໄພອັນຕະລາຍຈະມາເຖິງທ້າວນ້ອຍຈຶ່ງລົບເນື້ອຄວາມທີ່ກ່າວແລ້ວຂຽນເນື້ອຄວາມໃໝ່ວ່າ:"ຊາຍນ້ອຍຜູນີ້ເປັນລູກຂອງນາງສູນທະລາຫາກໄດ້ສົ່ງມາໃຫ້ເປັນຜົວແຫ່ງມຶງນາງຄັນຫາກທ້າວມາເຖິງເມື່ອໃດໃຫ້ມຶງນາງແຕ່ງແປງຕ້ອນຮັບແລ້ວໃຫ້ມຶງນາງອະພິເສກເອົາທ້າວເປັນຜົວໂດຍສະຫວັດດີເທີ້ນ. ທ້າວພຸດທະເສນເດີນທາງໄປຮອດເມືອງໄວລັບປະຕິນາງກັງຣີເປີດໜັງສືຂອງແມ່ອອກອ່ານແລ້ວກໍຮັບເອົາທ້າວພຸດທະເສນດ້ວຍຄວາມພໍໃຈເພາະທ້າວພຸດທະເສນເປັນຊາຍມີຮູບໂສມສວຍງາມຫຼາຍເວລາເອົາກັນແລ້ວນາງກັງຣີກໍພາຜົວໄປຊົມສວນອຸດທິຍານ ແລະ ແນະນຳໃຫ້ຮູ້ສິ່ງວິເສດທຸກສິ່ງ ເປັນຕົ້ນແມ່ນຫວ້ານຫຼາຍຊະນິດເມື່ອຂ່ວາງໄປເປັນປ່າໝາມ, ເປັນໜອງ, ເປັນໄພເຜົາແຜ່ນດິນ ເປັນແມ່ນ້ຳໃຫຍ່ ແລະ ອື່ນໆ..

ເມື່ອຮູ້ຈັກແລ້ວທ້າວພຸດທະເສນກໍດີໃຈຈຶ່ງຊອກຊ່ອງທາງຈະລັກໜີຈາກນາງກັງຣີກັບໄປນະຄອນຫຼວງ. ວັນໜຶ່ງທ້າວພຸດທະເສນໄດ້ສັ່ງໃຫ້ນາງກັງຣີຈັດການຫຼິ້ນມະໂຫລະສົບຄົບງັນໃຫ້ບ່າວໄພ່ທັງເມືອງໄດ້ຊຸມເຂົ້າ, ຊຸມເຫຼົ້າມ່ວນຊື່ນ. ສ່ວນທ້າວກໍເອົາເຫຼົ້າເກືອນາງກັງຣີຫຼາຍໆ ເມົາເຫຼົ້າແລ້ວກໍພາກັນນອນຫຼັບໄປຢ່າງບໍ່ຮູ້ເມື່ອຄືງ. ທ້າວພຸດທະເສນເມື່ອເຫັນນາງກັງຣີ ແລະ ໄພ່ພົນຍັກນອນງຽບສະຫງັດແລ້ວ ທ້າວກໍເຂົ້າເອົາກົງໃຈນາງຍັກສິນທະລາ, ເອົາຕານາງສິບສອງ ເອົາໝາກເວີ່ຮູ້ຫາວໝາກນາວຮູ້ໂຫ່ ແລະ ຫວ້ານດີວິເສດຫຼາຍຊະນິດແລ້ວກໍຂຶ້ນຂີ່ມ້າລັກໜີໄປໃນກາງຄືນ. ເມື່ອນາງກັງຣີຊ່ວງເຫຼົ້າຮູ້ສຶກຄືນມາຊອກຫາຜົວບໍ່ເຫັນກໍຟ້າວເອົາລິພົນອອກຕິດຕາມ ທ້າວພຸດທະເສນເຫັນດັ່ງນັ້ນກໍເອົາຫວ້ານວິເສດຂ່ວາງໄປເກີດເປັນປ່າໄຜ່ໝາມ, ເປັນໜອງ ເປັນໄຟເຜົາແຜ່ນດິນຕັນທາງທີ່ນາງຈະຕິດຕາມນຳມາ. ນາງກໍເອົານິພົນຟັນປ່າໄຜ່ໝາມ, ຖົມໜອງ ແລະ ມອດໄຟຕິດຕາມມາ

ໄດ້. ທ້າຍສຸດ ທ້າວກໍເອົາຫ້ວານຊະນິດໜຶ່ງຂ່ວາງໄປ ເປັນແມ່ນ້ຳໃຫຍ່ມີພູເໜືອນແປວໄຟຟອງຟາດ. ນາງກັງຣີ ເມື່ອມາເຖິງແມ່ນ້ຳໃຫຍ່ກໍຕິດຕາມໄປບໍ່ໄດ້ນາງຈຶ່ງເອີ້ນໃສ່ຜົວໃຫ້ກັບຄືນດ້ວຍຄວາມສະເໜຫາຮັກແຕ່ທ້າວບໍ່ຍອມກັບນາງຈຶ່ງເອົາໄພ້ພົນກັບຄືນແຫ່ງເມືອງແຫ່ງຕົນ ນາງມີຄວາມໂທມະນັດຂັດແຄ້ນແໜັນໃຈຫຼາຍທີ່ສຸດບໍ່ກິນເຂົ້ານ້ຳ ແລະ ອາຫານກໍເລີຍຕາຍໄປ. ກ່ອນໃຈຈະຂາດນາງໄດ້ໄຫວ້ວອນເທວະດາຂໍຜູກກຳໝາຍເວນແກ່ຜົວ, ຂໍໃຫ້ທ້າວຈຶ່ງຕາຍດ້ວຍຄວາມສະເໜຫາຮັກຄືກັນກັບນາງ.

ທ້າວພຸດທະເສນກັບເມືອຮອດນະຄອນຫຼວງແລ້ວກໍໄປຫາແມ່ ແລະ ພວກປ້າຂອງຕົນ. ເອົາໝາກເວີ່ຮູ້ຫາວ ໝາກນາວຮູ້ໂຫ່ບີບໃສ່ໜ່ວຍຕານາງສິບສອງແລ້ວກໍຮຸ່ງແຈ້ງດັ່ງເດີມ. ເສັດແລ້ວທ້າວກໍເຂົ້າໄປໄຫວ້ພະຍາພໍ່ແຫ່ງຕົນໃນພະລາຊະວັງ. ນາງຍັກມາບເຫັນ ທ້າວກໍອັດສະຈັນເພາະວ່າຕົນໄດ້ຂຽນໃຫ້ນາງກັງຣີຈົກກິນເຈົ້າແລ້ວເປັນປະການໃດຈຶ່ງບໍ່ກິນ ແລະ ກັບຄືນມາໄດ້ ດ້ວຍຄວາມພິໂລດໂກດແຄ້ນ ນາງຈຶ່ງການເປັນຮູບຍັກເໝືອນເດີມແລ້ວກໍໂດດໄປຈະຈົກກິນທ້າວພຸດທະເສນ. ທ້າວພຸດທະເສນກໍເອົາດາບຕັດກົງໃຈຂອງນາງຍັກໃຫຍ່ໃຫ້ຂາດ, ນາງຍັກຈຶ່ງລົ້ມຕາຍໃນຂະນະນັ້ນ.

ເມື່ອນາງຍັກຕາຍແລ້ວທ້າວພຸດທະເສນກໍໄປເອີ້ນເອົາແມ່ ແລະ ພວກປ້າກັບເຂົ້າມາຢູ່ລາຊະວັງນຳພະຍາປາລຸທະເສນທີ່ເປັນພໍ່ດັ່ງເດີມ. ເສັດແລ້ວທ້າວກໍລາພະຍາພໍ່ແມ່ ແລະ ປ້າກັບຄືນເມືອຫານາງກັງຣີຜູ້ເປັນເມຍ. ພໍໄປເຖິງເມືອງໄວຍະລັບປະຕິກໍເຫັນນາງກັງຣີຕາຍຢູ່. ດ້ວຍຄວາມຜູກກຳໝາຍເວນຂອງນາງກັງຣີ ທ້າວກໍເກີດຄວາມສະເໜຫາ ຮັກນາງຢ່າງທີ່ສຸດ ມີຄວາມຄັບແຄ້ນແໜັນໃຈເລີຍຂາດໃຈຕາຍນຳນາງກັງຣີ.

ເມື່ອທ້າວພຸດທະເສນຕາຍໄປນັ້ນໄດ້ເອົາຫົວໝູນຕີນນາງກັງຣີຢູ່ເມື່ອເທບໄທ້ຢູ່ເທິງສະຫວັນຫຼັງເຫັນ. ດັ່ງນັ້ນ, ຈຶ່ງເຫັນວ່າເປັນຂອງບໍ່ຄວນໃນຕໍ່ໄປພາຍໜ້າຜູ້ຍິງຈະຂົ່ມເຫງຜູ້ຊາຍເກີນໄປ ຈຶ່ງລົງມາຕ່າວສິບຂອງທ້າວພຸດທະເສນ. ລາວບູຮານຈຶ່ງໄດ້ເລົ່ານິທານສືບຕໍ່ກັນມາວ່າສິບທ້າວພຸດທະເສນ ແລະ ນາງກັງຣີໄດ້ກາຍເປັນພູທ້າວ ແລະ ພູນາງ.

## ຄຳຖາມ

1. ເທບນິຍາຍ ມີຄວາມໝາຍແນວໃດ?
2. ເທບນິຍາຍເລື່ອງ “ໝາກນ້ຳເຕົ້າປຸງ “ມີເນື້ອໃນຫຍໍ້ແນວໃດ?
3. ພື້ນສືບ ມີຄວາມໝາຍແນວໃດ? ເລື່ອງສີໂຄດຕະບອງມີເນື້ອໃນຫຍໍ້ແນວໃດ?
4. ນິທານມີຄວາມໝາຍແນວໃດ? ຈົ່ງເລົ່າເລື່ອງນິທານພູທ້າວພູນາງໂດຍຫຍໍ້?

# ບົດທີ 3
# ວັນນະຄະດີພື້ນເມືອງລາວປະເພດຄຳຮ້ອຍກອງ

## ▸ ວັນນະຄະດີພື້ນເມືອງລາວປະເພດຄຳຮ້ອຍກອງ:

### ກ. ຄຳໂສກ

ຄຳໂສກແມ່ນວັນນະຄະດີພື້ນເມືອງລາວປະເພດຄຳກອນເຊິ່ງມີເຄົ້າກຳເນີດມາແຕ່ສະໄໝບູຮານຕອນນັ້ນເຕັກນິກວິທະຍາສາດບໍ່ທັນຂະຫຍາຍຕົວສູງ, ຊາວບູຮານຖືກຂົ່ມຂູ່ຢ່າງໜັກໜ່ວງຈາກໄພທຳຊາດ ຈິ່ງເຮັດໃຫ້ເຂົາເຈົ້າເຊື່ອຖືງມງວາຍນົບໄຫວ້ວິງວອນຂໍສິ່ງສັກສິດໃຫ້ຄຸ້ມຄອງ ແລະຮັກສາ.

ຍ້ອນແນວນັ້ນເມື່ອຊາວບູຮານຢາກໄດ້ຫຍັງ, ຢາກທຳສິ່ງໃດສິ່ງໜຶ່ງຂຶ້ນມາ ກໍຕ້ອງຈັດພິທີນົບໄຫ້ວວິງວອນນຳສິ່ງສັກສິດສາກ່ອນ. ກ່ອນຈະລົງມືປູກຝັງ ຫຼື ປູກສ້າງເຮືອນຊານເພິ່ນໄດ້ເລືອກມື້ເລືອກຍາມສ່ຽງໂຊກຊາຕາ, ນັບ ຫຼື ວັດແທກຢ່າງຄັກແນ່ຈຸດປະສົງຢາກໃຫ້ຜົນແຫ່ງການອອກແຮງງານໄດ້ຕາມເປົ້າໝາຍທີ່ຕັ້ງເອົາໄວ້.

ດັ່ງນັ້ນ, ຈິ່ງໄດ້ປະດິດຄິດແຕ່ງຄຳໂສກຫຼາຍຊະນິດຂຶ້ນຫຼາຍຮູບແບບແຕກຕ່າງກັນຄື: ໂສກຄ້ອງ, ໂສກກອງ, ໂສກປືນ, ໂສກກອນເຮືອນ, ໂສກກາບທອດ, ໂສກເລົ້າເຂົ້າ, ໂສກແມ່ຄັນໃດ, ໂສກຄົນ,ໂຊກຕາຊັ່ງ ແລະ ອື່ນໆ.

ຕົວຢ່າງ: ຄຳໂສກກ່ຽວກັບການປູກຝັງ

ທິດ ເປັນຮາກເຫົ້າງາທົວດີ
ຈັນ ເຄືອຍາວຮີບໍ່ມົ້ວ
ຄານ ເປັນພົ້ວໝາກດົກໜາ
ພຸດ ມີມາລາບໍ່ເສົ້າ
ພະຫັດ ໝາກແຕ່ເຄົ້າເຖິງປາຍ
ສຸກ ເປືອກໜາຫຼາຍສຸດຍິ່ງ
ເສົາ ມີກ້ານກິ່ງລຳງາມ

## ຂ. ຄຳທວາຍ

ຄຳທວາຍແມ່ນວັນນະຄະດີພື້ນເມືອງປະເພດໜຶ່ງທີ່ມີລັກສະນະແຕກຕ່າງຈາກວັນນະຄະດີພື້ນເມືອງ ປະເພດ ຄຳຜະຫຍາ, ຄຳສຸພາສິດ, ກາບກອນ ແລະ ອື່ນໆ, ຄຳທວາຍ ແມ່ນການຕັ້ງບັນຫາກ່ຽວກັບວັດຖຸສິ່ງຂອງໃດໜຶ່ງທີ່ຢູ່ອ້ອມຂ້າງ, ປະກົດການທີ່ມີຈິງຢູ່ໃນທຳມະຊາດ ແລະ ສັງຄົມ ຊຶ່ງຕິດພັນກັບການການອອກແຮງງານ, ການດຳລົງຊີວິດປະຈຳວັນຂອງປະຊາຊົນຕາມທ້ອງຖິ່ນຕ່າງໆ, ເຂົາເຈົ້ານຳມາທວາຍເພື່ອຢາກໃຫ້ຜູ້ອື່ນຄົ້ນຄິດ, ກະຕວງ, ຄາດຄະເນ ແລະ ແກ້ບັນຫາ, ລັກສະນະຕົ້ນຕໍໃນການປະດິດແຕ່ງຄຳທວາຍນັ້ນ ຜູ້ແຕ່ງເວລາໃດກໍປິດບັງຄວາມໝາຍຂອງວັດຖຸ ຫຼື ເຫດການໄວ້ ຄຳທວາຍສ່ວນຫຼາຍເປັນຄຳກອນ, ສ່ວນຜູ້ແກ້ຕອບເປັນຄຳເວົ້າທຳມະດາເຊັ່ນ:

- ໄປທົ່ງນາ ມາທົ່ງກ້ອນເສົ້າແມ່ນຫຍັງ?

ຄຳຕອບ = ແຫ

- ກົກມັນທົ່ງລຳຫຼຽນ ໃບມັນທົ່ງດົ້ງທົ່ງບຽນ

ໝາກມັນລຽນຊ້າຍລ້າຍແມ່ນຫຍັງ?

ຄຳຕອບ = ໃບບົວ

- ຜີບ້າໄປກ່ອນ ຫູໜວກຢູ່ກາງ ຕາຟາງນຳກົ້ນ ແມ່ນຫຍັງ?

ຄຳຕອບ = ຄວາຍ, ໄຖ ແລະ ຄົນໄຖນາ

- ເຮືອນເສົາດຽວມີແສນຫ້ອງ ແຕ່ລະຫ້ອງມີຜູ້ເຝົ້າເຮືອນ ແມ່ນຫຍັງ?

ຄຳຕອບ = ຮັງເຜິ້ງ

## ຄ. ຄຳໂອມ

ຄຳໂອມແມ່ນກາບກອນພື້ນເມືອງລາວປະເພດໜຶ່ງຊຶ່ງປະຊາຊົນຜູ້ອອກແຮງງານເປັນຜູ້ປະດິດຄິດແຕ່ງຂຶ້ນ, ຈຸດປະສົງເພື່ອໃຫ້ຄົນເຊື່ອຖືຕາມຮີດຄອງປະເພນີ ແລະ ສາສະໜາໃນສະໄໝກ່ອນ, ຍ້ອນການດຳລົງຊີວິດໃນສະໄໝນັ້ນຂຶ້ນກັບເງື່ອນໄຂທຳມະຊາດປາກົດການຂອງທຳມະຊາດສ່ວນຫຼາຍເປັນໜ້າຢ້ານກົວເຊັ່ນ: ຟ້າຮ້ອງ, ຟ້າຜ່າ, ຟ້າແມບເຫຼື້ອມ ຫຼື ນ້ຳຖ້ວມ, ຟ້າແລ້ງ ລົມແດງ ແລະ ສັດຮ້າຍ.

ໂດຍອີງໃສ່ເຫດການດັ່ງກ່າວການປະດິດຄິດແຕ່ງຄຳໂອມຈຶ່ງປາກົດມີຄຳເວົ້າອ່ອນຫວານ, ອ້ອນວອນ ແລະ ມີຫຼາຍແບບໃນການຮ້ອງຂໍຄວາມເຫັນໃຈ ແລະ ການຊ່ວຍເຫຼືອຕ່າງໆ ຈາກສິ່ງສັກສິດ.

ຕົວຢ່າງ: ຄຳໂອມ ຍໍຂັນໝາກໄປສູ່ລຸງຕາ

ຊອບໜຶ່ງວ່າແລ້ວ ຫາມື້ໄດ້ມື້ສັນ
ຫາວັນໄດ້ວັນຊອບ ມື້ປະກອບວັນດີ
ວັນລິຖືໄຊຍະມຸຕະໂຊກ ຍິກວ່າໄດ້ເປັນມື້ວັນມັງຄະລະມຸງຄຸນ
ພໍ່ແມ່ອ້າຍນ້ອງ ຂັ້ນສູງລຸງຕາ
ສິບຊາວທ້າວພະຍາ ລຸງຕາທາງເບື້ອງລ່ຳກ້ຳພຸ້ນ
ຈິ່ງຕັດຫາດໃສ່ຂັນທອງ ຮອງພູໃສ່ອຸບແກ້ວ
ມີທັງຫາດພູຫຼວງ ພູຈວງບ້ານຖິ່ນ
ໝາກຖິ່ນແກ້ວ ສີສຽດວຽງຈັນ
ຢາຕອງຄວັນຊອກແຕ່ມື້ລີ້ ບໍ່ໄດ້ຊື້ປະສິງສູ່ລຸງຕາ
ຕົ້ນພູຢູ່ເມືອງຍາກ ຕົ້ນໝາກຢູ່ເມືອງໄກ
ຜູ້ໄທບໍ່ມາຄ້າ ພໍ່ຄ້າບໍ້ມາຂາຍຈຶ່ງຂືນຂວາຍຫາໄດ້
ຫຍ້າກະຕ້າງແລະກະຕ່ອຍ ໝາກຂ່ອຍແລະພູວັນ
ໝາກຂ່ອຍຕັ້ງເທິງຂັນ ພູວັນຕັ້ງເທິງຢ່ອງ
ສ່ວຍພູສ່ວຍນ້ຳມັດ ພັດພູພັດນ້ຳຂອງ
ສອງມືຕ້ອງໂອທອງດັ່ງກ່ອງ ແຕ່ຄ້ອງແລ້ວໃສ່ຂັນຍໍມາ
ສູ່ຫາພໍ່ແມ່ອ້າຍນ້ອງ ຂັ້ນສູງລູງຕາ
ສິບຊາວທ້າວພະຍາ ລຸງຕາທາງເບື້ອງລ່ຳກ້ຳພີ້
ຄ້ຽວພູໃຫ້ຫອມປາກ ຄ້ຽວໝາກໃຫ້ຫອມຄໍ
ຄ້ຽວພູແລ້ວຊິຂໍປາກ ຄ້ຽວໝາກແລ້ວຊິຂໍລົມ
ຂໃຫ້ພໍ່ແມ່ຍ້ອມໃຫ້ມັນແດງ ແປງໃຫ້ມັນຂື້ນແດ່ຂະໝ່ອມທ້ອນ.

## ໆ. ຄຳສຸພາສິດ

ຄຳສຸພາສິດແມ່ນຄຳເວົ້າທີ່ຈົບງາມ ແລະ ຖືກຕ້ອງ, ເປັນຄຳເວົ້າສັ້ນແຕ່ມີຄວາມໝາຍເລິກເຊິ່ງໂດຍແມ່ນປະຊາຊົນຜູ້ອອກແຮງງານເປັນຜູ້ປະດິດຄິດແຕ່ງຂື້ນເພື່ອເປັນຄຳສັ່ງສອນ ແລະ ຄະຕິເຕືອນໃຈໃຫ້ແກ່ຊາວຜູ້ອອກແຮງງານໄດ້ປະຕິບັດຕົນຢ່າງຖືກຕ້ອງ ແລະ ສອດຄ່ອງເໝາະສົມກັບການດຳລົງຊີວິດໃນສັງຄົມ. ຄຳສຸພາສິດແມ່ນຄຳກອນພື້ນເມືອງປະເພດໜຶ່ງທີມີຮູບການແຕ່ງສຳຜັດເກາະກ່າຍກັນຢ່າງຄ່ອງແຄ້ວ, ໃຊ້ຄຳເວົ້າສັ້ນ, ກະທັດຮັດ, ໜັກແໜ້ນ, ເຂົ້າໃຈງ່າຍ, ເຂົ້າໃຈໄດ້ໄວ ແລະ ທັງມີຄວາມໝາຍເນື້ອໃນເລິກເຊິ່ງຄົບຖ້ວນ. ເມື່ອອ່ານແລ້ວກໍສາມາດເຂົ້າໃຈຄວາມໝາຍ,

ສາມາດຖອດເອົາມາເປັນບົດຮຽນ ແລະ ຄຳສອນແກ່ຕົນເອງໄດ້

ຕົວຢ່າງ: ຄຳສຸພາສິດທີ່ເວົ້າເຖິງການຕໍ່ສູ້ດັດແປງທຳມະຊາດ ແລະ ການອອກແຮງງານ

| | |
|---|---|
| ຝົນຊິຕົກຟ້າແຈ້ງ | ຟ້າຊິແລ້ງຟ້າມືດຟ້າມົວ |
| ຢາກຮູ້ນາງາມ | ໃຫ້ເບິ່ງກຳກ້າ |
| ຫຼື ສິບຕົ້ນຫຼ້າ | ບໍ່ທໍ່ຕົ້ນທົວປີ |

**ຈ. ກອນຜະຫຍາ:**

ກອນຜະຫຍາມີລັກສະນະສັງລວມກ່ຽວກັບກາບກອນພື້ນເມືອງລາວ. ສັງຄົມລາວຮີດຄອງປະເພນີແນວຄິດຈິດຕະສາດຂອງປະຊາຊົນໃນສະໄໝກ່ອນ, ໄດ້ສະແດງໃນກອນຜະຫຍາຢ່າງຈະແຈ້ງ ແລະ ຄົບຖ້ວນ, ຜະຫຍາໃຊ້ສັບພາສາພື້ນເມືອງທີ່ເສາະໃສ ແລະ ມີລັກສະນະຊາດສູງ.

ກອນຜະຫຍາແມ່ນກາບກອນພື້ນເມືອງປະເພດໜຶ່ງທີ່ບ່າວສາວຂັບລຳຕໍ່ແຍ, ໂຈດຖາມ ແລະ ແກ້ກັນກ່ຽວກັບບັນຫາຄວາມຮູ້ຮອບຕົວ, ທັດສະນະຄຸນສົມບັດ ແລະ ຄວາມຮັກມັກທີ່ມີຕໍ່ກັນ ແລະ ສ່ວນໜຶ່ງຂອງຄວາມຮູ້, ຄວາມສະຫຼາດຫຼັກແຫຼມ ແລະ ພົກໄຫວຂອງປະຊາຊົນຜູ້ອອກແຮງງານ.

ກອນຜະຫຍາແຕກຕ່າງຈາກຄຳທວຍ,ຄຳສຸພາສິດ ແລະ ກາບກອນສ່ວນຫຼາຍມັກເວົ້າເຖິງການພົວພັນລະຫວ່າງບ່າວສາວ, ບໍ່ມີລະບຽບກົດເກນແນ່ນອນມີທັງກາບ ແລະ ກອນປະສົມກັນໄປ.

**ຕົວຢ່າງ:** ກອນຜະຫຍາລະຫ່ວາງບ່າວ-ສາວເວົ້າສຽດກັນ.

| | | |
|---|---|---|
| ຊາຍ | ອ້າຍນີ້ເກີດແຕ່ນ້ອຍ | ບໍ່ມີແຜ່ນພໍມີນ |
| | ອ້າຍຜູ້ເກີດເປັນຄົນ | ບໍ່ມີເຄືອກ້ຽວ |
| | ມີແຕ່ເຄືອສ້ຽວຮ້າຍ | ມາກ້ຽວກຳເລົ່າມາຍ |
| | ມີແຕ່ເຄືອຫວາຍຮ້າຍ | ເຄືອຫວາຍຊ້ຳພັດໂດກ |
| ຍິງ: | ນ້ອງນີ້ຄືດັ່ງກົກຕານເຖົ້າ | ກາງນາຕາກແດດ |
| | ເຄືອບໍ່ມີແປດກ້ຽວ | ຕາຍແລ້ງແດດເຜົາ ແຫ້ແລ້ວ |
| ຫຼື | ນ້ອງນີ້ປຽບດັ່ງໂພໄຊຕົ້ນ | ໃບບໍ່ດົກນົກບໍ່ແກ່ວນ |
| | ອວດແຕ່ຊືລືແຕ່ຕົ້ນ | ຜົນໄດ້ບໍ່ມີອ້າຍເອີຍ |

# ຄຳຖາມ

1. ຄຳໂສກມີຄວາມໝາຍແນວໃດ?
2. ຄຳທວາຍ ແລະ ຄຳໂອມມີຄວາມໝາຍແນວໃດ?
3. ຄຳສຸພາສິ ມີຄວາມໝາຍ ແນວໃດ?
4. ກອນຜະຫຍາ ມີຄວາມໝາຍແນວໃດ?

# ພາກທີ II
# ວັນນະຄະດີລາວ ໃນສະຕະວັດທີ XIV - XVII
# ບົດທີ 4
# ອານາຈັກລາວລ້ານຊ້າງກັບການກຳເນີດວັນນະຄະດີຊຽນ

## 1. ສະພາບປະຫັວດສາດ ແລະ ວັດທະນາທຳ.

### 1.1 ສະພາບປະຫັວດສາດ

ອານາຈັກລາວລ້ານຊ້າງກຳເນີດຂຶ້ນໃນກາງສະຕະວັດທີ XIV (ຄ.ສ 1353) ຢູ່ໃນດິນແດນແຫຼມ ສຸວັນນະພູມ ທີ່ຄົງຕົວມາແລ້ວປະມານ 2500 ກວ່າປີ. ກ່ອນການສະຖາປະນາເປັນອານາຈັກລາວລ້ານຊ້າງເອກະພາບ, ຢູ່ບົນດິນແດນແຫ່ງນີ້ມີເມືອງ ຕ່າງໆໃນສະໄໝບູຮານຕັ້ງຢູ່ຢ່າງກະແຈກກະຈ່າຍ ແລະ ເມືອງເຫຼົ່ານັ້ນ ມີຄວາມຈະເລີນຮຸ່ງເຮືອງຫຼາຍສົມຄວນເຊັ່ນ: ເມືອງນ່ານເຈົາ (ເມືອງໜອງແສ), ເມືອງຊວາ (ຕໍ່ມາເອີ້ນວ່າເມືອງຊຽງທອງ), ເມືອງປະກັນ (ຕໍ່ມາເອີ້ນເມືອງພວນ), ເມືອງສີໂຄດຕະບອງ, ເມືອງຈຳປາສັກ ແລະ ອື່ນໆ. ບັນດາເມືອງດັ່ງກ່າວສ້າງຕັ້ງຂຶ້ນໃນລະຫວ່າງສະຕະວັດທີ I - VIII.

ກ່ອນສະຕະວັດທີ XIV ຊາດລາວດຳລົງຊີວິດຕາມທຳມະຊາດ ແລະ ກະແຈກກະຈາຍ, ມີຫຼາຍຫົວເມືອງນ້ອຍຫົວເມືອງໃຫ່ຍປົກຄອງທີ່ເປັນເອກະລາດ (ຄ້າຍຄືກັບວ່າເປັນປະເທດໜຶ່ງ) ໂດຍມີເຈົ້າປົກຄອງເປັນອິດສະຫຼະເຊິ່ງເບື້ອງຕົ້ນເອີ້ນວ່າຂຸນ, ຕໍ່ມາເອີ້ນວ່າທ້າວ ແລະ ຕໍ່ມາຈິ່ງເອີ້ນວ່າ ພະຍາ, ພ້ອມນັ້ນບັນດາເມືອງຕ່າງໆ ກໍ່ມີການຍາດຊີງລະຫວ່າງຫົວເມືອງຕ່າງໆ ເພື່ອເອົາຫົວເມືອງຢູ່ອອ້ມຂ້າງມາຂຶ້ນກັບເມືອງຂອງຕົນ, ຖ້າເມືອງໃດນ້ອຍ ແລະ ອ່ອນເພຍກໍ່ເສຍໃຫ້ເມືອງໃຫ່ຍທີ່ມີອຳນາດເຂັ້ມແຂງ.

ຮອດກາງສະຕະວັດທີ XIV ເຈົ້າຟ້າງຸ່ມຈິ່ງໄດ້ນຳພາປະຊາຊົນຕໍ່ສູ້ ແລະ ທ້ອນໂຮມເມືອງຕ່າງໆເຂົ້າເປັນອັນດຽວກັນ. ນັບແຕ່ນັ້ນມາຈິ່ງເອີ້ນວ່າອານາຈັກລາວລ້ານຊ້າງ, ມີນະຄອນຫຼວງຊື່ວ່າ: " ຊຽງທອງ”, ເມື່ອສຳເລັດແລ້ວ ເຈົ້າຟ້າງຸ່ມໄດ້ຈັກຕັ້ງພິທີສະຫຼອງຂຶ້ນຢູ່ວຽງຈັນຢ່າງຄຶກຄື້ນ.

ໃນສະຕະວັດທີ XVI ເຊິ່ງເປັນລາສະການຂອງເຈົ້າໂພທິລາດ ແລະ ເຈົ້າໄຊຍະເຊດຖາທິລາດ, ອານາຈັກລາວລ້ານຊ້າງຈະເລີນຮຸ່ງເຮືອງ. ອຳນາດການປົກຄອງເຂັ້ມງວດ ແລະ ເດັດຂາດບັນດາກະສັດໄດ້ນຳພາປະຊາຊົນຕໍ່ສູ້ພາຍນອກເຊັ່ນ: ສັກດີນາພະມ້າ ແລະ ສັກດີນາສະຫຍາມ.

ເຈົ້າຟ້າງຸ່ມແມ່ນກະສັດອົງໜຶ່ງ ທີ່ນຳພາປະຊາຊົນຕໍ່ສູ້ເພື່ອທ້ອນໂຮມເປັນອານາຈັກລາວລ້ານຊ້າງເອກະພາບ, ພະອົງຍັງເປັນຜູ້ນຳເອົາ ສາສະໜາພຸດມາເຜີຍແຜ່ຢູ່ໃນອານາຈັກລາວລ້ານຊ້າງ ແລະ ເປັນຜູ້ໃຫ້ກຳເນີດວັນນະຄະດີຊຽນບົດທຳອິດຂອງຊາດ.

## 1.2 ສະພາບວັດທະນະທຳ

ໃນສະໄໝນີ້ວຽກງານວັດທະນະທຳກໍ່ໄດ້ເຕີບໃຫ່ຍຂະຫຍາຍຕົວເປັນກ້າວໆ ຊຶ່ງນັບແຕ່ເຈົ້າຟ້າງຸ່ມນຳເອົາສາສະໜາພຸດມາຈາກປະເທດຂະເໝນ (ກຳປູເຈຍ) ເຂົ້າມາເຜີຍແຜ່ຢູ່ປະເທດລາວ, ສາສະໜາພຸດເປັນສາສະໜາປະຈຳຊາດ. ການສ້າງວັດວາອາຣາມ, ພະທາດເຈດີເພື່ອເປັນບ່ອນທຳບຸນປະເພນີທາງສາສະໜາບາງຢ່າງກໍ່ກາຍມາເປັນປະເພນີ ແລະ ວັດທະນະທຳຂອງຊາດຈົນເຖິງທຸກວັນນີ້.

ເມື່ອເວົ້າເຖິງວິທະຍາສາດໃນການຫຼໍ່ໂລຫະກໍ່ມີການຂະຫຍາຍຕົວເຊັ່ນ: ຫຼໍ່ພະພຸດທະຮູບອົງຕື້ເຮັດດ້ວຍທອງເຊິ່ງເປັນພະພຸດທະຮູບທີ່ໃຫ່ຍກໍ່ມີຜົນສຳເລັດຢ່າງໜ້າພໍໃຈ. ນອກຈາກນີ້ກໍ່ມີການຄົວດລວດລາຍລະບາຍສີ, ຕີຂັນ, ຕີໂອ, ການຜະລິດເຄື່ອງໃຊ້ດ້ວຍໂລຫະໄດ້ກາຍມາເປັນມໍລະດົກວັດທະນະທຳອັນລ້ຳຄ່າຂອງຊາດ. ສ່ວນວຽກງານດ້ານຫັດທະກຳເຊັ່ນ: ຕຳ່ຫູກທໍໄໝ, ຕຳ່ແຜ່ນ ແລະເຄື່ອງດົນຕີພື້ນເມືອງເຊັ່ນ: ຄ້ອງ, ກອງ, ແຊ່ງ, ປີ່, ຊໍ, ລະນາດ ແລະ ອື່ນໆ...ອັນເປັນເອກະລັກຂອງຊາດລາວ.

ໜຶ່ງໃນຜົນງານທີ່ເດັ່ນ ແລະ ຂຶ້ນຊື່ລືນາມກໍ່ແມ່ນການສ້າງເມືອງວຽງຈັນເປັນນະຄອນຫຼວງຂອງລາວ ໃນສະຕະວັດ ທີ XVI X (1560), ສ້າງພະທາດຫຼວງວຽງຈັນໃນປີ ຄ.ສ 1566, ສ້າງຫໍພະແກ້ວໃນປີ ຄ.ສ 1565 ແລະ ອື່ນໆ...

ຮອດສະຕະວັດທີ XVII ອານາຈັກລາວລ້ານຊ້າງ ໄດ້ກ້າວເຂົ້າສູ່ ຄວາມຈະເລີນຮຸ່ງເຮືອງສູງສຸດໃນປະຫັວດສາດເປັນໃຈກາງທາງດ້ານວັດທະນາທຳ, ສາສະໜາພຸດຈົນເຮັດໃຫ້ແຂກຕ່າງປະແທດ ແລະ ພະສົງສາມະເນນມາສຶກສາຮ່ຳຮຽນ, ຈາກສະພາບດັ່ງກ່າວນີ້ໄດ້ສົ່ງຜົນສະທ້ອນ ແລະ ອຳນວຍຄວາມສະດວກໃຫ້ແກ່ການກຳເນີດວັນນະຄະດີຊຽນ.

## 2. ການກຳເນີດ ແລະ ວິວັດທະນາການຂອງວັນນະຄະດີຊຽນ.

ວັນນະຄະດີຊຽນຂອງລາວກຳເນີດ ແລະ ຂະຫຍາຍຕົວຜ່ານມາເປັນເວລາດົນນານແລ້ວແຕ່ບົດວັນນະຄະດີທີ່ແຕ່ງຂຶ້ນໃນສະໄໝອານາຈັກລາວລ້ານຊ້າງຮຸ່ງເຮືອງ ທີ່ເຮົາເຫັນໃນປັດຈຸບັນລ້ວນແຕ່ເປັນບົດທີ່ໄດ້ຈົດກ່າຍຄືນບໍ່ຈັກວ່າເທົ່າໃດເທື່ອ ເພາະບົດວັນນະຄະດີນັ້ນເພິ່ນໄດ້ຊຽນໃສ່ໃບລານ, ເຮັດເປັນຜູກ ເປັນມັດເອີ້ນວ່າໜັງສືຜູກ ຫຼື ໜັງສືໃບລານ ແລະ ໄດ້ຮັກສາໄວ້ຕາມວັດວາອາຮາມຕ່າງໆ.

ບັນດານັກຄົ້ນຄ້ວາວັນນະຄະດີລາວໄດ້ຢັ້ງຢືນຊົ່ວຄາວວ່າ ບົດວັນນະຄະດີຊຽນສະບັບທຳອິດຂອງລາວແມ່ນ:"ຄຳໂອວາດຂອງເຈົ້າຟ້າງຸ່ມ" ພະອົງໄດ້ກ່າວຕໍ່ປະຊາຊົນໃນໂອກາດສະຫຼອງໄຊຊະນະຢູ່ທີ່ວຽງຈັນ.

ສະຕະວັດທີ XV ສະພາບປະຫັວດສາດ ແລະ ສັງຄົມລາວໄດ້ກ້າວສູ່ໄລຍະການປັບປຸງປະເທດໃຫ້ເຂັ້ມແຂງທຸກດ້ານ.ສະນັ້ນ, ສາສະໜາພຸດທີ່ເຈົ້າຟ້າງຸ່ມນຳມາເຜີຍແຜ່ໄດ້ຮັບການສືບທອດ ແລະ ຂະຫຍາຍຕົວຢ່າງກ້ວາງຂວາງຄຳພີຕ່າງໆ ຈຳນວນໜຶ່ງ ກໍ່ຖືກແປອອກເປັນພາສາລາວເຊັ່ນ:

ພະມະຫາເທບຫຼວງໄດ້ແປເລື່ອງ ມະຫາຊາດ (ພະເວດສັນດອນ).

ສະຕະວັດທີ XVI ນີ້ພະມະຫາເທບຫຼວງ ກໍ່ສຳເລັດການແຕ່ງນິທານເລື່ອງ "ຂຸນບູລົມ", ພະສັງຄະລາດແປເລື່ອງ"ນາງຕັນໄຕ", ພະອະລິຍະວັງໂສແຕ່ງນິທານພະແກ້ວ, ນິທານພະບາງ, ນິທານພະແຊກຄຳ, ນິທານພະແກ່ນຈັນ ແລະ ນິທານຂຸນບູລົມສະບັບທີ 2.

ສະຕະວັດທີ XVII ແມ່ນໄລຍະແຫ່ງການຂະຫຍາຍຕົວຂຶ້ນສູ່ຍອດສູງຂອງວັນນະຄະດີຂຽນ. ບັນດານັກປະພັນ ແລະ ນັກກະວີຂອງລາວໄດ້ປະດິດແຕ່ງບົດວັນນະຄະດີປະເພດຄຳຮ້ອຍກອງເຊັ່ນ: ເລື່ອງ ສິນໄຊ, ນາງແຕງອ່ອນ, ທ້າວຮຸ່ງ-ທ້າວເຈືອງ, ຈັນທະຄາດ, ກາລະເກດ, ສິນໄຊ, ກາບປູ່ສອນຫຼານ, ຫຼານສອນປູ່, ອິນທິຍານສອນລູກ ແລະ ອື່ນໆ...ສ່ວນປະເພດທີ່ແຕ່ງເປັນຄຳຮ້ອຍແກ້ວເຊັ່ນ: ເລື່ອງສຽວສະຫວາດ, ນາງຕັນໄຕ, ມະໂຫສົດ...ບົດວັນນະຄະດີທີ່ກ່າວມານີ້ມີບາງເລື່ອງກໍ່ຢືມ ແລະ ລອກແບບບາງຢ່າງຈາກວັນນະຄະດີ ອິນເດຍບູຮານແລ້ວມາສ້າງເປັນເລື່ອງໃໝ່ໃຫ້ເໝາະກັບຊີວິດຕົວຈິງຂອງລາວເຊັ່ນ: ເລື່ອງ “ພະລັກພະລາມ".

## 3. ປະເພດວັນນະຄະດີຂຽນ

ບົດວັນນະຄະດີຕ່າງໆທີ່ກຳເນີດ ແລະ ຂະຫຍາຍຕົວຢູ່ໃນສະໄໝອານາຈັກລາວລ້ານຊ້າງຈະເລີນຮຸ່ງເຮືອງນັ້ນມີຈຳນວນຫຼວງຫຼາຍ, ມີຫຼາຍເນື້ອໃນ ແລະ ຫຼາຍປະເພດບົດຕ່າງກັນ. ອີງຕາມຫົວບົດ ແລະ ເນື້ອໃນຂອງບົດປະພັນອາດແບ່ງອອກເປັນ 4 ພາກສ່ວນໃຫ່ຍຄື:

3.1. "ວັນນະຄະດີປະຫວັດສາດ" ແມ່ນບົດວັນນະຄະດີມີຫົວເລື່ອງ ແລະ ເນື້ອໃນກ່ຽວກັບປະຫວັດສາດຂອງຊາດລາວ.

3.2. "ວັນນະຄະດີສາສະໜາ" ແມ່ນບົດວັນນະຄະດີທີ່ມີເນື້ອໃນຮັບໃຊ້ການເຜີຍແຜ່ສາສະໜາພຸດ.

3.3. "ວັນນະຄະດີຄຳສອນ"ແມ່ນບົດວັນນະຄະດີທີ່ມີເນື້ອໃນສຶກສາອົບຮົມສິດສອນຫຼັກທຳມະຈະລິຍາຕ່າງໆ.

3.4. "ກະວີນິຍາຍ" ແມ່ນບົດວັນນະຄະດີທີ່ແຕ່ງເປັນຄຳຮ້ອຍກອງ (ຄຳກອນ), ນິຍາຍເພີນຈິດແບບບູຮານ.

ວັນນະຄະດີແຕ່ລະປະເພດກ່າວມາຂ້າງເທິງນີ້ຕ່າງກໍມີລັກສະນະພິເສດທາງດ້ານເນື້ອໃນ, ຮູບການປະດິດແຕ່ງແຕ່ມີການພົວພັນກັນຢ່າງສະໜິດແໜ້ນ ແລະ ມີຜົນສະທ້ອນເຊິ່ງກັນ ແລະ ກັນຢ່າງເລິກເຊິ່ງ.

## 4. ຄຸນຄ່າຂອງວັນນະຄະດີຂຽນສະໄໝອານາຈັກລາວລ້ານຊ້າງ

### 4.1. ຄຸນຄ່າທາງດ້ານເນື້ອໃນ

ວັນນະຄະດີລ້ານຊ້າງເປັນວັນນະຄະດີທີ່ເກົ່າແກ່ ແລະ ກຳເນີດມາເປັນເວລາດົນນານແລ້ວ, ແຕ່ລະບົດລ້ວນແຕ່ມີຄຸນຄ່າຢ່າງໃຫ່ຍຫຼວງ, ເລິກເຊິ່ງ ແລະ ອຸດົມສົມບູນທາງເນື້ອໃນເປັນຕົ້ນບົດວັນນະຄະດີສ່ອງແສງເຖິງປະຫວັດສາດສັງຄົມໃນສະໄໝສັກດີນາ, ສ່ອງແສງເຖິງວັດທະນະທຳຮີດຄອງປະເພນີ ແລະ ການດຳລົງຊີວິດຕົວຈິງໃນສັງຄົມສະໄໝນັ້ນ, ວັນນະຄະດີລ້ານຊ້າງເປັນແຫຼ່ງ

ເອກະສານ, ຕຳລາ ແລະ ເປັນຄັງສາງແຫ່ງຄວາມຮູ້ດ້ວຍລາຍລັກອັກສອນໂດຍຜ່ານເນື້ອໃນຂອງບົດວັນນະຄະດີດັ່ງກ່າວ, ຄົນໃນສະໄໝປັດຈຸບັນຈຶ່ງຮູ້ຈັກລະດັບຊີວິດການເປັນຢູ່ໃນສັງຄົມ ແລະ ຄວາມອະລິຍະທຳທາງດ້ານວັດຖຸ ແລະ ຈິດໃຈທີ່ມີຫຼາຍສີສັນຂອງຄົນລາວໃນສະໄໝບູຮານ, ຍ້ອນວັນນະຄະດີລ້ານຊ້າງມີເນື້ອໃນອຸດົມສົມບູນຕິດພັນກັບມູນເຊື້ອວັດທະນາທຳອັນດີງາມຂອງຊາດຈຶ່ງຖືກຮັກສາໄວ້ຢູ່ໃນຄັງສາງວັນນະຄະດີຂຽນຂອງຊາດຕະຫຼອດມາ.

## 4.2. ຄຸນຄ່າທາງດ້ານສິລະປະ

ວັນນະຄະດີລ້ານຊ້າງທີ່ຂຽນເປັນຄຳຮ້ອຍກອງ ແລະ ຮ້ອຍແກ້ວກໍ່ລ້ວນແຕ່ມີຄຸນຄ່າທາງດ້ານສິລະປະດີເດັ່ນເຊັ່ນ: ພາສາທີ່ນັກແຕ່ງເລື່ອງເພັ້ນເປັນພາຫະນະໃນການປະພັນແມ່ນພາສາບູຮານ, ມ່ວນອອນຊອນ, ມີມະໂນພາບຢ່າງເລິກເຊິ່ງ ແລະ ມີຫຼາຍແບບຫຼາຍວິທີທີ່ໜ້າຈັບອົກຈັບໃຈ. ສະນັ້ນ, ມັນຈຶ່ງໃຫ້ຄຸນຄ່າສູງແກ່ຜູ້ອ່ານ ແລະ ຜູ້ຟັງທຸກຍຸກທຸກສະໄໝຈົນເຖິງປັດຈຸບັນ. ອີກອັນໜຶ່ງວັນນະຄະດີລ້ານຊ້າງໄດ້ກາຍເປັນບົດຮຽນ ແກ່ການປະດິດແຕ່ງບົດປະພັນວັນນະຄະດີໃນສະໄໝໃໝ່ເປັນຕົ້ນແມ່ນບົດຮຽນການແຕ່ງປະເພດຄຳຮ້ອຍກອງເຊິ່ງນັກແຕ່ງສະໄໝໃໝ່ໄດ້ຮໍ່າຮຽນເອົາເປັນແບບຢ່າງ.

### ຄຳຖາມ

1. ເຫດການປະຫວັດສາດໃນສະໄໝອານາຈັກລາວລ້ານຊ້າງໃນສະຕະວັດທີ XIV-XVII ມີຫຍັງພົ້ນເດັ່ນ?
2. ວັນນະຄະດີຂຽນໃນສະໄໝອານາຈັກລາວລ້ານຊ້າງກຳເນີດແລະຂະຫຍາຍຕົວແນວໃດ?
3. ວັນນະຄະດີຂຽນແບ່ງອອກເປັນຈັກປະເພດ? ປະເພດໃດແດ່?
4. ຄຸນຄ່າຂອງວັນນະຄະດີຂຽນໃນສະໄໝອານາຈັກລາວລ້ານຊ້າງມີຫຍັງແດ່?

# ບົດທີ 5
# ວັນນະຄະດີປະຫັວດສາດ

## 1. ຄວາມໝາຍ ແລະ ຄວາມເປັນມາ

### 1.1 ຄວາມໝາຍ

ວັນນະຄະດີປະຫັວດສາດແມ່ນພາກສ່ວນໜຶ່ງຂອງວັນນະຄະດີຊຸງນສະໄໝອານາຈັກລາວລ້ານຊ້າງ ເຊິ່ງລວມມີບົດປະພັນຕ່າງໆ ທີ່ມີທິວເລື່ອງເວົ້າເຖິງປະຫັວດສາດຂອງຊາດລາວບົດປະພັນເຫຼົ່ານັ້ນແມ່ນບົດບັນທຶກ, ບົດສະເໜີເຫດການປະຫັວດສາດໃດໜຶ່ງ ຫຼື ບາງເທື່ອກໍ່ສະເໜີປະຫັວດສາດຕ່າງໆ ຢ່າງຕໍ່ເນື່ອງກັນ. ບົດປະພັນຕ່າງໆ ໃນສະໄໝນັ້ນຜູ້ແຕ່ງໄດ້ສ້າງຮູບພາບແບບວັນນະຄະດີຂຶ້ນລ້ວນແຕ່ສ່ອງແສງເຖິງຊີວິດຕົວຈິງ, ເຊິ່ງໃນນັ້ນມີທັງຄວາມເປັນຈິງໃນປະຫັວດສາດ, ມີທັງຄວາມສຳນຶກຂອງຜູ້ແຕ່ງ, ບາງເທື່ອກໍ່ມີຮູບພາບແບບມະຫັດສະຈັນຂອງເທບນິຍາຍ ແລະ ພື້ນສືບທີ່ມີມາແຕ່ບູຮານນະການ.

### 1.2 ຄວາມເປັນມາ

ບົດວັນນະກຳທີ່ເກົ່າແກ່ ແລະ ລືຊື່ບົດໜຶ່ງ ໃນປະຫັວດສາດນີ້ ເຄີຍຖືກັນວ່າແມ່ນ" ຄຳໂອວາດຂອງເຈົ້າຟ້າງຸ່ມ” ຕາມການສັນນິຖານຂອງ ມະຫາສີລາ ວິລະວົງ " ໂອວາດຂອງເຈົ້າຟ້າງຸ່ມ” ນີ້ແມ່ນເຈົ້າຟ້າງຸ່ມເອງເປັນຜູ້ແຕ່ງຂຶ້ນຢູ່ວຽງຈັນໃນລະຫ່ວາງປີ 1357 ຕໍ່ມາ ພະມະຫາເທບຫຼວງໄດ້ແຕ່ງ " ນິທານຂຸນບູລົມ " ຂຶ້ນ ເປັນເທື່ອທຳອິດ, ສະບັບທີສອງແຕ່ງໃນສະໄໝພະເຈົ້າໄຊເສດຖາທິລາດ ແລະ ສະໄໝຂອງພະມະຫາແສນສຸລິນ ຜູ້ແຕ່ງແມ່ນຄົນໃດບໍ່ຮູ້, ສະບັບທີສາມແຕ່ງປີ1627 ຜູ້ແຕ່ງແມ່ນ ພະສີສຸທາ ຊົມາລັງກາ, ສະບັບທີສີ່ແຕ່ງໃນສະໄໝຂອງພະເຈົ້າເສດຖາທິລາດທີສອງຄືພະອົງເວ້ (ປີ1708) ແລະ ສະບັບທີຫ້າແຕ່ງໃນສະໄໝປະເທດລາວເສຍອິດສະຫຼະພາບໃຫ້ແກ່ສັກດີນາສະຫຍາມ.

ນອກຈາກ " ຄຳໂອວາດຂອງເຈົ້າຟ້າງຸ່ມ “ແລະ” ນິທານຂຸນບູລົມ " ແລ້ວຍັງມີບົດວັນນະກຳອີກຫຼາຍບົດທີ່ມີທິວເລື່ອງ ແລະ ເນື້ອໃນທາງປະຫັວດສາດເຊັ່ນ:"ຕຳນານເມືອງຊວາຫຼວງພະບາງ", “ຕຳນານເມືອງພວນ”, “ຕຳນານເມືອງວຽງຈັນ”, “ຕຳນານເມືອງຈຳປາສັກ”...ນອກນີ້ຍັງມີບົດວັນນະກຳທີ່ເວົ້າເຖິງປະຫັວດສາດຂອງວັດຖຸບູຮານທີ່ເປັນມໍລະດົກອັນລ້ຳຄ່າຂອງລາວເຮົາເຊັ່ນ: “ພື້ນພະແກ້ວ”, “ພື້ນພະບາງ” ແລະ ອື່ນໆ.

## 2. ເນື້ອໃນ

ຄຳໂອວາດຂອງເຈົ້າຟ້າງຸ່ມເປັນວັນນະຄະດີທີ່ສັ້ນ, ຮູບການປະດິດແຕ່ງກໍ່ງ່າຍດາຍ, ແຕ່ມີເນື້ອໃນເລິກເຊິ່ງໄດ້ສ່ອງແສງໃຫ້ເຫັນໝາກຜົນແຫ່ງໄຊຊະນະຂອງການຕໍ່ສູ້ທ້ອນໂຮມປະເທດເຊິ່ງເຈົ້າຟ້າງຸ່ມໄດ້ຢືນຢັນເຖິງຄຸນຄ່າ ແລະ ບົດບາດຂອງຄົນໂດຍສະເພາະແມ່ນຄົນຜູ້ອອກແຮງງານ,

ສະແດງໃຫ້ເຫັນມູນເຊື້ອທີ່ເປັນພື້ນຖານຂອງຊາດລາວເຮົາຄືການປົກປັກຮັກສາ ແລະ ນັບຖືການອອກແຮງງານ, ນ້ຳໃຈຮັກຊາດ ແລະ ກຽມພ້ອມຮ່ວມກັນປົກປັກຮັກສາປະເທດຊາດ, ນ້ຳໃຈສາມັກຄີເປັນປຶກແຜ່ນແໜ້ນໜາຢູ່ພາຍໃນຊາດ, ນ້ຳໃຈມະນຸດສະທຳ ແລະ ຮັກຫອມຄວາມເປັນທຳຢູ່ໃນສັງຄົມ. ການຢູ່ຮ່ວມກັນໂດຍສັນຕິທັງເຄົາລົບຕໍ່ຫຼັກການບ້ານເມືອງດ້ວຍຄວາມຊື່ສັດບໍລິສຸດ, ບັນຫານີ້ເປັນເນື້ອໃນຕົ້ນຕ ແລະ ເປັນພື້ນຖານໃຫ້ແກ່ແນວທາງການປົກຄອງຂອງລະບອບສັກດີນາທີ່ເຈົ້າຟ້າງຸ່ມວາງອອກ.

## 3. ຄຸນຄ່າດ້ານປະຫັວດສາດ

ບົດວັນນະກຳ ໃນວັນນະຄະດີປະຫັວດສາດມີຄວາມໝາຍ ແລະ ມີບົດບາດສຳຄັນໃນການຢືນຢັນຄວາມເປັນເອກະລາດ, ເອກະພາບຂອງຊາດລາວເຮົາທີ່ລວມມີຫຼາຍຊົນເຜົ່າ, ຫຼາຍເຂດແຄ້ວນ ແລະ ຫຼາຍຕົວເມືອງ. ເມື່ອອ່ານວັນນະຄະດີປະຫັວດສາດ ພາໃຫ້ຄົນລາວເຮົາມີຄວາມເອກອ້າງທະນົງໃຈຕໍ່ຄວາມເປັນເອກະລາດ ແລະ ເອກະພາບຂອງຊາດມາແຕ່ດຶກດຳບັນ. ວັນນະຄະດີປະຫັວດສາດ ຍັງເຕືອນໃຫ້ຄົນລາວເຮົາທຸກຄົນ ມີຄວາມສາມັກຄີເຄົາລົບນັບຖືເຊິ່ງກັນ ແລະ ກັນ. ພ້ອມກັນປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ຖະນຸທະໜອມມູນເຊື້ອອັນດີງາມຂອງຊາດ ແລະ ປົກປັກຮັກສາວັດຖຸບູຮານຕ່າງໆ ທີ່ປູ່ຍ່າຕາຍາຍຂອງພວກເຮົາໄດ້ສ້າງຂຶ້ນມາໄວ້ໃຫ້ຢືນນານຕະຫຼອດໄປ.

## 4. ຄຸນຄ່າທາງດ້ານການປົກຄອງ

ບົດວັນນະຄະດີປະຫັວດສາດ ສ່ອງແສງໃຫ້ເຫັນການຈັດຕັ້ງ ການປົກຄອງ ແລະ ຄຸ້ມຄອງລັດເອກະລາດ ຂອງບັນດາອິງກະສັດລາວໃນສະໄໝບູຮານ, ຢືນຢັນເຖິງບົດບາດ ແລະ ຄຸນຄ່າຂອງຜູ້ປົກຄອງບ້ານເມືອງຕໍ່ກັບປະຊາຊົນຜູ້ອອກແຮງງານ. ຄວາມເຄົາລົບນັບຖືເຊິ່ງກັນ ແລະ ກັນພ້ອມກັນປະຕິບັດຕາມລະບຽບການບ້ານເມືອງ. ປົກປັກຮັກສາເຂດນ້ຳແດນດິນ ອັນສັກກາລະບູຊາເພື່ອບໍ່ໃຫ້ສັດຕູມາບຽດບຽນ ດັ່ງຕອນໜຶ່ງຂອງ " ຄຳໂອວາດຂອງເຈົ້າຟ້າງຸ່ມ " ທີ່ວ່າ ເຈົ້າທັງຫຼາຍ ຮັກສາບ້ານເມືອງ ຢ່າໃຫ້ມີຂ້າລັກຄົນໂຈນ ອັນໜຶ່ງຢ່າໄດ້ຂ້າຟັນກັນ... ສົມບັດອັນເກີດມາແຜ່ນດິນນີ້ຄົນມີສົມບັດກໍ່ຈິ່ງມີ ຄັນບໍ່ມີຄົນສົມບັດເຂົ້າຂອງກໍ່ຫາບໍ່ໄດ້ແລ..."

ຕົວຢ່າງທີ່ກ່າວມານີ້ລ້ວນແຕ່ສະແດງໃຫ້ເຫັນຄຸນຄ່າທາງດ້ານການປົກຄອງ ແລະ ຄຸ້ມຄອງບ້ານເມືອງຂອງບັນດາກະສັດລາວໃນສະໄໝປະຫັວດສາດໃດໜຶ່ງ, ມີຄຸນປະໂຫຍດໃນການປຸກລະດົມຈິດໃຈຮັກຊາດ ແລະ ໃຫ້ຮູ້ຈັກເອກອ້າງທະນົງໃຈທີ່ໄດ້ເກີດມາເປັນຄົນລາວ.

## ຄຳຖາມ ແລະ ບົດເຝິກຫັດ

1. ເປັນຫຍັງຈິ່ງເອີ້ນວ່າ "ວັນນະຄະດີປະຫັວດສາດ"?
2. "ວັນນະຄະດີປະຫັວດສາດ" ມີເນື້ອໃນເວົ້າເຖິງຫຍັງແດ່?

3. “ວັນນະຄະດີປະຫັວດສາດ” ມີຄຸນຄ່າແນວໃດ?
4. “ວັນນະຄະດີປະຫັວດສາດ” ມີຄຸນຄ່າທາງດ້ານການປົກຄອງແນວໃດ?

# ບົດທີ 6

# ວັນນະຄະດີສາສະໜາ

## 1. ຄວາມໝາຍ ແລະ ຄວາມເປັນມາ

### 1.1 ຄວາມໝາຍ

ວັນນະຄະດີສາສະໜາເປັນບົດວັນນະຄະດີທີ່ມີລັກສະນະໂຄສະນາ ແລະ ຍ້ອງຍໍສັນລະເສີນຄຸນງາມຄວາມດີຂອງສາສະໜາພຸດໂດຍກົງ ແລະ ໂດຍທາງອ້ອມ ເຊິ່ງມີຫຼາຍປະເພດບົດຕ່າງກັນ. ບົດວັນນະຄະດີດັ່ງກ່າວນີ້ໄດ້ກ່າຍ, ແປງ, ລື້ມຄືນໃນບັນດາປະເພດກະວີນິຍາຍເລື່ອງຕ່າງໆ ແລະກໍ່ແມ່ນບົດວັນນະຄະດີທີ່ແປງອອກມາຈາກຊຸດເລື່ອງ “ຊາດົກ” ເຊັ່ນ: ເລື່ອງ “ພະເວດສັນດອນ” ເລື່ອງ “ ທ້າວສີທົນ” ແລະ ເລື່ອງອື່ນໆ...ທີ່ຢູ່ໃນສະໄໝອານາຈັກລາວລ້ານຊ້າງຮຸ່ງເຮືອງ.

### 1.2 ຄວາມເປັນມາ

ຫຼັງຈາກທີ່ໄດ້ເຕົ້າໂຮມເອົາບັນດາຫົວເມືອງລາວບູຮານຕ່າງໆເຂົ້າມາເປັນອານາຈັກລາວລ້ານຊ້າງເອກະພາບແລ້ວ. ເຈົ້າຟ້າງຸ່ມໄດ້ນຳເອົາສາສະໜາພຸດ ເຂົ້າມາເຜີຍແຜ່ຢ່າງກ້ວາງຂວາງໃນທົ່ວອານາຈັກ. ເມື່ອຮອດສະຕະວັດທີ XVI ອານາຈັກລາວລ້ານຊ້າງໄດ້ຮັບການພັດທະນາຂຶ້ນສູ່ຍອດສູງ ແລະ ສາສະໜາພຸດກໍ່ໄດ້ແຜ່ຂະຫຍາຍນັບມື້ຈະເລີນຮຸ່ງເຮືອງ ແລະໄດ້ກາຍເປັນໃຈກາງຂອງຄວາມສີວິໄລທາງດ້ານສາສະໜາພຸດ. ຈາກສະພາບດັ່ງກ່າວນີ້ໄດ້ນຳເອົາຄວາມອຸດົມຮັ່ງມີມາສູ່ພາສາລາວ. ອາດເວົ້າໄດ້ວ່າສາສະໜາພຸດໄດ້ມີບົດບາດອັນສຳຄັນຍິ່ງໃນການກຳເນີດ ແລະ ການຂະຫຍາຍຕົວຂອງວັນນະຄະດີຂຽນຂອງລາວໃນສະໄໝອານາຈັກລາວລ້ານຊ້າງ. ບົດວັນນະຄະດີສາສະໜາ ຈຳນວນຫຼວງຫຼາຍ ແມ່ນໄດ້ແປ ຫຼື ແຕ່ງແປງຈາກເລື່ອງ " ຊາດົກ " ເຊິ່ງຂຽນເປັນພາສາບາລີ ແລະ ອັກສອນທຳ.

## 2. ເນື້ອໃນ

ເນື້ອໃນຕົ້ນຕໍຂອງບົດວັນນະຄະດີສາສະໜານີ້ແມ່ນການຍົກຍ້ອງສັນລະເສີນຄຸນຄວາມດີຂອງພະພຸດທະເຈົ້າໂດຍຜ່ານການດຳລົງຊີວິດຂອງພະອົງຢູ່ໃນຊາດຕ່າງໆມາແລ້ວ. ສ່ວນເນື້ອໃນຕົ້ນຕໍຂອງເລື່ອງ “ພະເວດສັນດອນ” ແມ່ນການຍົກຍ້ອງຄຸນງາມຄວາມດີຂອງພະເວດສັນດອນທີ່ມີຈິດໃຈກວ້າງຂວາງເພື່ອແຜ່, ມີຄວາມເມດຕາກະລຸນາສູງ ແລະ ໄດ້ບຳເພັນປາລະມີຈົນເຖິງຂັ້ນສູງສຸດເຊິ່ງບໍ່ມີສາມັນຊົນທຳມະດາຄົນໃດເຮັດໄດ້ເປັນຕົ້ນແມ່ນການໃກ້ທານວັດຖຸສິ່ງຂອງທຸກສິ່ງຢ່າງແກ່ຄົນອື່ນສິ່ງດັ່ງກ່າວມັນໄດ້ສະແດງອອກຢ່າງຄົບຖ້ວນໃນການດຳລົງຊີວິດຂອງພະເວດນັ້ນເອງ.

## 3. ຄຸນຄ່າ

### 3.1 ຄຸນຄ່າທາງດ້ານສາສະໜາ

ວັນນະຄະດີສາສະໜາທຸກບົດລ້ວນແຕ່ສ່ອງແສງໃຫ້ເຫັນກ່ຽວກັບການດຳລົງຊີວິດໃນຊາດຕ່າງໆ ຂອງພະພຸດທະເຈົ້າ ດັ່ງນັ້ນ, ມັນຈິ່ງມີຄຸນຄ່າສຳຄັນເປັນຕົ້ນແມ່ນການໂຄສະນາເຜີຍແຜ່

ຄຸນງາມຄວາມດີ, ຫຼັກທຳຄຳສັ່ງສອນຂອງພຸດທະເຈົ້າເພື່ອໃຫ້ຄົນເຮົາຮູ້ຈັກເຄົາລົບນັບຖືສາສະໜາພຸດ ແລະ ໃຫ້ຮູ້ວ່າສາສະໜາພຸດເປັນສາສະໜາປະຈຳຊາດທັງໄດ້ຕິດພັນກັບປະຫັວດສາດຂອງຊາດລາວມາເປັນເວລາດົນນານ.

### 3.2 ຄຸນຄ່າທາງດ້ານແນວຄິດ

ວັນນະຄະດີສາສະໜາໄດ້ຕິດພັນຢ່າງສະນິດກັບແນວຄິດຈິດໃຈ ແລະ ສຶກສາໃຫ້ຄົນເຮົາມີແນວຄິດປອດໃສຂາວສະອາດ, ດຳລົງຊີວິດຢ່າງຖືກຕ້ອງເປັນທຳ, ມີຄວາມເມດຕາກະລຸນາ ສາມັກຄີຮັກແພງຊ່ວຍເຫຼືອຊຶ່ງກັນ ແລະ ກັນ. ຊ່ວຍໃຫ້ຄົນເຮົາຮູ້ຈັກປະພຶດຕົນແຕ່ສິ່ງທີ່ດີງາມມີປະໂຫຍດ, ຫຼີກເວັ້ນຄວາມຊົ່ວໃນສັງຄົມ ຈຶ່ງຈະເຮັດໃຫ້ສັງຄົມມີຄວາມສະຫງົບສຸກທັງເຮັດໃຫ້ແນວຄິດຈິດໃຈມີສັດທາເຫຼື້ອມໃສ ໃນພຸດທະສາສະໜາອີກດ້ວຍ.

### 3.3 ຄຸນຄ່າທາງດ້ານຮີດຄອງປະເພນີ

ວັນນະຄະດີສາສະໜາໄດ້ຕິດພັນກັບວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດລາວມາເປັນເວລາດົນນານ. ບົດວັນນະຄະດີສາສະໜາຕ່າງໆເປັນຕົ້ນແມ່ນເລື່ອງ “ພະເວດສັນດອນ” ຍັງໄດ້ນຳມາເທດ, ອ່ານ ໃນໂອກາດວັນບຸນ ຫຼື ທຳສິນກິນທານຢູ່ຕາມວັດວາອາຮາມ ທ້ອງຖິ່ນຕ່າງໆໃນທົ່ວປະເທດ. ສະນັ້ນ, ບຸນພະເວດຈຶ່ງເປັນບຸນປະເພນີປະຈຳຊາດອັນໜຶ່ງທີ່ສຳຄັນທີ່ສືບມາຈົນເຖິງທຸກວັນນີ້.

### 3.4 ຄຸນຄ່າທາງດ້ານພາສາ

ນອກຈາກຄຸນຄ່າຕ່າງໆ ທີ່ກ່າວມາຂ້າງເທິງແລ້ວ. ວັນນະຄະດີສາສະໜາຍັງມີຄຸນຄ່າສຳຄັນຢ່າງໃຫ່ຍຫຼວງຕໍ່ກັບການກຳເນີດ ແລະ ຂະຫຍາຍຕົວຂອງພາສາ. ອັກສອນລາວໂດຍສະເພາະແມ່ນນຳເອົາຄວາມອຸດົມສົມບູນທາງດ້ານພາສາວັນນະຄະດີ ແລະ ຮູບແບບຂອງການປະດິດແຕ່ງ.

ບົດ ວັນນະຄະດີຕ່າງໆ ຂອງລາວ ໃນສະໄໝອານາຈັກລາວລ້ານຊ້າງ ກໍ່ໄດ້ແປ ຫຼື ແຕ່ງແປງເອົາມາຈາກພາສາປາລີ-ສັນສະກິດ ຫຼື ອັກສອນທຳມາເປັນພາສາ ແລະ ອັກສອນລາວພ້ອມນັ້ນວັນນະຄະດີສາສະໜາຍັງໄດ້ຖ່າຍທອດບົດຮຽນທາງດ້ານພາສາວັນນະຄະດີ ແລະ ການປະດິດແຕ່ງທີ່ມີຫຼາຍສີສັນ ໃຫ້ແກ່ວັນນະຄະດີຊຽນຂອງຊາດ ໃນໄລຍະຕໍ່ມາອີກດ້ວຍ.

ມາເຖິງປັດຈຸບັນ ບົດວັນນະຄະດີດັ່ງກ່າວມານີ້, ຈຳນວນໜຶ່ງກໍ່ຖືກນຳມາຄົ້ນຄ້ວາ, ສຶກສາຮ່ຳຮຽນຢູ່ຕາມໂຮງຮຽນສາມັນ ແລະ ສະຖາບັນການສຶກສາຕ່າງໆທັງນີ້ກໍ່ເພື່ອຜັນຂະຫຍາຍຄຸນຄ່າຂອງບົດວັນນະກຳເຫຼົ່ານັ້ນໃຫ້ເກີດປະໂຫຍດແກ່ສັງຄົມ.

## ຄຳຖາມ

1. ວັນນະຄະດີສາສະໜາ ແມ່ນແນວໃດ? ແລະ ມີຄວາມເປັນມາຄືແນວໃດ?
2. ເນື້ອໃນ ວັນນະຄະດີສາສະໜາ ເວົ້າເຖິງບັນຫາໃດແດ່?

# ບົດທີ 7
# ວັນນະຄະດີຄຳສອນ

## 1. ຄວາມໝາຍ ແລະ ຄວາມເປັນມາ

### 1.1 ຄວາມໝາຍ

ວັນນະຄະດີຄຳສອນເປັນວັນນະຄະດີເຜີຍແຜ່ຫຼັກສິນທຳ, ທຳມະຈະລິຍາຂອງສັງຄົມ ສັກດີນາໂດຍອີງໃສ່ຫຼັກຄຳສອນຂອງສາສະໜາພຸດ ຫຼື ພາມແລ້ວຜູ້ແຕ່ງໄດ້ອະທິບາຍດ້ວຍການຍົກ ຫຼັກຄຳສອນມາເວົ້າ, ມາປຽບທຽບກັບຫຼາຍບັນຫາຢູ່ໃນບົດປະພັນວັນນະຄະດີທີ່ມ່ວນອ່ອນຊອນຈິນ ເປັນທີ່ດຶງດູດຈິດໃຈແກ່ຜູ້ອ່ານ ແລະ ຜູ້ຟັງທັງສາມາດນຳເອົາຫຼັກຄຳສອນນັ້ນໆມາປະພຶດປະຕິບັດ ໃຫ້ເກີດປະໂຫຍດຊ່ວຍຫຼຸດຜ່ອນຄວາມວຸ້ນວາຍໃນສັງຄົມພ້ອມທັງເປັນການເພີ່ມພູນລະເມືອງດີ ຂອງຊາດອີກດ້ວຍ.

### 1.2 ຄວາມເປັນມາ

ວັນນະຄະດີຄຳສອນກໍ່ຄືກັບປະເພດວັນນະຄະດີຊຽນອື່ນໆ. ເມື່ອສາສະໜາພຸດຂະ ຫຍາຍຕົວກໍ່ໄດ້ສິ່ງຜົນສະທ້ອນເຖິງວັນນະຄະດີຊຽນແຕ່ລະປະເພດໃນລະດັບຕ່າງກັນທາງດ້ານເນື້ອ ໃນແລະຮູບການ, ວັນນະຄະດີປະເພດນີ້ໄດ້ຮັບການຂະຫຍາຍຕົວຢ່າງກ້ວາງຂວາງເພາະເປັນປະ ເພດບົດ ວັນະຄະດີທີ່ອ່ານມ່ວນ ສາມາດດຶງດູດຈິດໃຈຜູ້ອ່ານໄດ້ດີ. ເມື່ອຮອດສະຕະວັດທີ XVI - XVII ອານາຈັກລາວລ້ານຊ້າງຈະເລີນຮຸ່ງເຮືອງສູ່ລະດັບສູງຍິ່ງເປັນເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ປະເພດວັນນະຄະດີຄຳສອນໄດ້ກຳເນີດຢ່າງຫຼວງຫຼາຍເຊັ່ນ: ເລື່ອງ “ນາງຕັນໄຕ”, ເລື່ອງ “ສຽວ ສະຫວາດ” ປູ່ສອນຫຼານ - ຫຼານສອນປູ່, ອິນທິຍານສອນລູກ ແລະ ເລື່ອງອື່ນໆ...

ບົດວັນນະຄະດີທີ່ມີລັກສະນະເປັນຄຳສອນນີ້ມີບາງເລື່ອງກໍ່ແປເອົາມາຈາກພາສາອື່ນ, ບາງເລື່ອງກໍ່ແຕ່ງແປງເອົາ ຫຼື ປະດິດແຕ່ງຂຶ້ນມາເອງ. ແຕ່ເຖິງຢ່າງໃດກໍ່ຕາມເລື່ອງຕ້ອງອີງຕາມ ແນວທຳຄຳສອນແຫ່ງສາສະໜາ ເພື່ອດຶງດູດຈິດໃຈແກ່ຜູ້ອ່ານ ແລະ ຜູ້ຟັງ.

## 2. ເນື້ອໃນ

ວັນນະຄະດີຄຳສອນມີເນື້ອໃນສ່ອງແສງຄວາມຈິງຫຼາຍບັນຫາຢູ່ໃນສັງຄົມແຕ່ເຮົາສາ ມາດແຍກອອກເປັນສອງເນື້ອໃນດັ່ງລຸ່ມນີ້:

### 2.1 ເນື້ອໃນຄຳສອນທີ່ໃຫ້ຄົນເຮົາປະຕິບັດຕາມ

ວັນນະຄະດີຄຳສອນທີ່ມີເນື້ອໃນໃຫ້ຄົນເຮົາທຸກເພດໄວ, ທຸກຊັ້ນຄົນຢູ່ໃນສັງຄົມໃຫ້ມີສະ ຕິລະວັງຕົວ ແລະ ປະພຶດຕົວໃຫ້ຖືກຕ້ອງສອດຄ່ອງກັບວັດທະນະທຳ ຮີດຄອງປະເພນີຂອງສັງຄົມ. ໃຫ້ຄົນເຮົາມີຄວາມສາມັກຄີ ຮັກແພງຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ຮູ້ຈັກບຸນຄຸນພໍ່ແມ່, ຄູບາອາຈານ ແລະ ອື່ນໆ ເພື່ອເຮັດໃຫ້ການດຳລົງຊີວິດຂອງຄົນເຮົາເປັນໄປດ້ວຍຄວາມຖືກຕ້ອງເປັນທຳທັງຮູ້ຈັກ

ຄວາມຖືກ ຄວາມຜິດ ອັນຈະພາໃຫ້ສັງຄົມນັ້ນໆ ມີແຕ່ຄວາມສຸກຕະຫຼອດໄປ.

**ຕົວຢ່າງ:**

| | |
|---|---|
| " ອັນໜຶ່ງພໍ່ແມ່ນີ້ | ຄຸນມາກເຫຼືອຫຼາຍ |
| ໃຫ້ຄ່ອຍຢຳແຍງນົບ | ຢ່າໃຫ້ມີຄຳຄ້ານ..." |
| " ອັນໜຶ່ງໂຕບໍ່ຮູ້ | ຫາເພິ່ນຄູສອນ |
| ຫາວິຊາຮຽນ | ຊູ່ອັນຈຳໄວ້ |
| ອັນໃດໂຕບໍ່ຮູ້ | ໃຫ້ຖາມເພິ່ນພໍ່ຄວາມ ກໍດີ |
| ເຂົານັ້ນຊື່ວ່າເປັນຄູບາ | ແຫ່ງຕົນສອນໃຫ້ |
| ຄັນໄດ້ຍິນເຂົາຕ້ານ | ຈາກັນໃຫ້ຈຳຈື່ເອົາເນີ |
| ຮຽກວ່າຄູສິ່ງໃຫ້ | ຄຳຮູ້ກໍ່ຈິ່ງມີ " |

### 2.2 ເນື້ອໃນຄຳສອນທີ່ໃຫ້ຄົນເຮົາງົດເວັ້ນບໍ່ເຮັດຕາມ

ແມ່ນບໍ່ໃຫ້ຄົນເຮົາປະພຶດຕົນໄປຕາມທາງທີ່ຜິດພາດ, ບໍ່ຂົ່ມເພິ່ນຍໍໂຕ, ບໍ່ປະພຶດລ່ວງລະເມີດຕໍ່ຮີດຄອງປະເພນີຂອງສັງຄົມ, ຮູ້ແລ້ວບໍ່ຕ່າວພາໂລ, ບໍ່ໃຫ້ສໍ້ໂກງເອົາຂອງຄົນອື່ນມາເປັນຂອງໂຕ.

ຕົວຢ່າງ:

| | |
|---|---|
| "ອະທິນາໂລບເອົາຂອງທ່ານ | ໃຫ້ເຈົ້າຢ້ານໜີຫຼີກໄປໄກ |
| ໃຜທຳໄປພາຕົນຕ່ຳຄ້ອຍ | ພາເປັນຂ້ອຍຂອບຈິດໃຈໂຕ |
| ໃຈໂມໂຫພາໂລມັກມາກ | ໄປປາກຕ້ານເອົາສິ່ງຂອງເຂົາ |
| ເອົາເງິນຄຳຂອງເພິ່ນໄປຄ້າ | ໜີເມືອໜ້າມັນຫູບມັນຈົມ..." |
| "ເງິນເຕັມຖົງ | ຢ່າໄດ້ອິ່ງອວດອ້າງ |
| ຜູ້ເພິ່ນກ້ວາງ | ມີມາກກ່ວາໂຕ |
| ໃຈໂມໂຫ | ໂລພາມັກມາກ |
| ປາກໄປກ່ອນ | ມັນບໍເປັນທຳ " |

## 3. ຄຸນຄ່າ

### 3.1 ຄຸນຄ່າທາງດ້ານການສຶກສາອົບຮົມຄຸນສົມບັດ:

ວັນນະຄະດີຄຳສອນເປັນວັນນະຄະດີເກົ່າແກ່ທີ່ຖືກຮັກສາໄວ້ຢູ່ໃນສາງວັນນະຄະດີຊຽນຂອງຊາດຈົນເຖິງທຸກວັນນີ້ ແລະ ຍັງມີຄຸນຄ່າອັນມະຫາສານ ເຊິ່ງພວກເຮົາຕ້ອງໄດ້ນຳເອົາວັນນະຄະດີຄຳສອນຕ່າງໆມາຮ່ຳຮຽນເພື່ອເປັນການສຶກສາອົບຮົມແນວຄິດຄຸນສົມບັດພ້ອມທັງພັດທະນາຕົນເອງ ໃຫ້ສອດຄ່ອງກັບແນວຄິດຄຸນສົມບັດຂອງຍຸກສະໄໝໃໝ່.

### 3.2 ຄຸນຄ່າທາງດ້ານພາສາ:

ວັນນະຄະດີຄຳສອນເປັນວັນນະຄະດີທີ່ມ່ວນອອນຊອນ, ສາມາດດູດດຶງຈິດໃຈຂອງຜູ້ອ່ານ

ແລະ ຜູ້ຟັງ ພາສາທີ່ນັກແຕ່ງເລືອກເພັ້ນມາໃຊ້ໃນນິດວັນນະຄະດີນັ້ນ ເປັນສັບພາສາທີ່ມີລັກສະນະ ຮູບພາບປຽບທຽບບັນຫາ, ປະກົດການຢູ່ໃນທຳມະຊາດ ແລະ ສັງຄົມ ດ້ວຍຈິດສຳນຶກສູງ. ເມື່ອຄົນ ເຮົາໄດ້ອ່ານຫຼືໄດ້ຟັງ ນິດວັນນະຄະດີຄຳສອນ ຈະຮູ້ສຶກມີອາລົມມ່ວນຊື່ນ, ສະເທືອນໃຈເປັນພິເສດ. ສະນັ້ນ, ສັບພາສາຢູ່ໃນນິດວັນນະຄະດີຄຳສອນໃນສະໄໝອານາຈັກລາວລ້ານຊ້າງຈຶ່ງມີຄຸນຄ່າສູງ ສົ່ງຕໍ່ຜູ້ອ່ານ ພ້ອມນັ້ນ ຍັງເປັນນິດຮຽນທີ່ດີ ໃຫ້ແກ່ບັນດານັກແຕ່ງ, ນັກຂຽນນິດວັນນະຄະດີຕ່າງໆ ຢູ່ ໃນຍຸກສະໄໝຕໍ່ມາເອົາເປັນແບບຢ່າງອີກດ້ວຍ.

## ນິທານ "ສຽວສະຫວາດໂດຍຫຍໍ້ "

ຢູ່ນະຄອນພະລານະສີນີເສດຖີຜົວເມຍຄູ່ໜຶ່ງເຊິ່ງມີລູກຊາຍສອງຄົນ, ຜູ້ອ້າຍຊື່ວ່າສີສະຫຼຽວຜູ້ ນ້ອງຊື່ວ່າສຽງສະຫວາດເມື່ອທ້າວສຽວສະຫວາດໃຫ່ຍຂຶ້ນມາໄດ້ 16 ປີ, ພໍ່ເຫັນວ່າຕົນເອງເຖົ້າແກ່ ຫຼາຍແລ້ວຈຶ່ງເອີ້ນລູກຊາຍທັງສອງມາສັ່ງສອນ. ເມື່ອເວລາຕໍ່ມາພໍ່ແມ່ຕາຍປະ, ສອງອ້າຍນ້ອງກໍ່ໄດ້ ສືບຕໍ່ແທນເຮືອນຈາກນັ້ນກໍ່ມີພໍ່ຄ້າຊາວເມືອງຈຳປາເອົາເຮືອສະເພົາມາຈອດຢູ່ທ່ານ້ຳໃກ້ບ້ານ, ທ້າວ ສຽວສະຫວາດຈຶ່ງໄປທຳຄວາມລຶ້ງເຄີຍກັບນາຍສະເພົາຄົນນັ້ນ. ເມື່ອນາຍສະເພົາຈະກັບຄືນເມືອ ເມືອງທ້າວສຽວສະຫວາດກໍ່ຂໍໄປນຳນາຍສະເພົາຍິນດີຮັບເອົາທ້າວສຽວສະຫວາດໄປເປັນລູກຮັກ ແລ້ວກໍ່ກັບເມືອເມືອງ. ໃນເວລາທີ່ໄປຕາມທາງທ້າວສຽວສະຫວາດໄດ້ສໍ້ຖາມນາຍສະເພົາຫຼາຍສິ່ງ ຫຼາຍຢ່າງຄື: ໄປເຫັນແກ້ງທ້າວກໍ່ຖາມວ່າແກ້ງນີ້ມີຫີນບໍ່? ເມື່ອໄປເຫັນດົງກໍ່ຖາມວ່າດົງນີ້ມີໄມ້ບໍ່? ໄປເຫັນບ້ານກໍ່ຖາມວ່າບ້ານນີ້ມີຄົນບໍ່? ເມື່ອໄປເຫັນເມືອງກໍ່ຖາມວ່າເມືອງນີ້ມີເຈົ້າບໍ່? ໄປເຫັນວັດກໍ່ ຖາມວ່າວັດນີ້ມີພິກຂຸສັງຄະເຈົ້າ? ດັ່ງນີ້ເປັນຕົ້ນ. ຈົນນາຍສະເພົາຄິດວ່າທ້າວສຽວສະຫວາດເປັນບ້າ ຈາກນັ້ນຈຶ່ງຫ້າມບໍ່ໃຫ້ຖາມອີກ.

ພໍກັບຄືນໄປຮອດເມືອງຂອງຕົນແລ້ວນາຍສະເພົາກໍ່ເລົ່າເລື່ອງທີ່ທ້າວສຽວສະຫວາດຖາມ ມານັ້ນສູ່ລູກສາວຟັງລູກສາວເປັນຄົນທີ່ມີປັນຍາສະຫຼາດຫຼັກແຫຼມຈຶ່ງເວົ້າຂຶ້ນວ່າຄຳທີ່ຖາມມານັ້ນ ເປັນບັນຫາ. ພ້ອມນັ້ນນາງກໍ່ແກ້ບັນຫາຕ່າງໆ ທີ່ທ້າວຖາມມາສູ່ພໍ່ຟັງຂໍ້ທີ່ທ້າວຖາມວ່າແກ້ງນີ້ມີຫີນບໍ່ ນັ້ນແມ່ນທ້າວຖາມວ່າຢູ່ໃນແກ້ງນີ້ມີເພັດນິນຈິນດາບໍ່, ຂໍ້ທີ່ຖາມວ່າດົງນີ້ມີໄມ້ບໍ່ແມ່ນທ້າວຖາມຫາໄມ້ ຈວງໄມ້ຈັນທີ່ມີລາຄາດັ່ງນີ້ເປັນຕົ້ນ. ເມື່ອນາຍສະເພົາຮັບຮູ້ແຈ້ງດັ່ງນັ້ນຈຶ່ງເຂົ້າໃຈວ່າທ້າວສຽວສະ ຫວາດເປັນຜູ້ມີປັນຍາເປັນເລີດ ເລີຍເອົາລູກສາວຂອງຕົນໃຫ້ເປັນເມຍ ຂອງທ້າວສຽວສະຫວາດ.

ທ້າວສຽວສະຫວາດຢູ່ນຳພໍ່ເຖົ້າຜູ້ເປັນນາຍສະເພົານັ້ນເປັນເວລາ3 ປີ.ໃນຄາວນັ້ນພະຍາ ຈຳປານະຄອນຜູ້ເປັນເຈົ້າແຜ່ນດິນປົກຄອງບ້ານເມືອງບໍ່ມີຄວາມຍຸດຕິທຳຈຶ່ງເກີດເຫດຮ້າຍຕ່າງໆ ຫຼາຍປະການ. ສ່ວນເທວະດາໝູ່ໜຶ່ງມາດົນສັນດານໃຫ້ພະຍາເກີດມີຄວາມໂກດກ້າ, ເປັນດັ່ງຄົນຂ້າ ເສິກທຽວໄປມາຢ່າງລັບໆລີ້ໆ. ບາດວ່າເບິ່ງໃຫ້ຄັກໆແທ້ພັດບໍ່ເຫັນ. ອາການເປັນດັ່ງນີ້ພະຍາກໍ່ມີ

ຄວາມສະທ້ານຢ້ານຕໍ່ຄວາມເປັນອັນຕະລາຍທີ່ຈະເກີດຂຶ້ນ. ສະນັ້ນຈຶ່ງໃຫ້ພວກເສນາອາມາດເອົາຄົນທັງຫຼາຍມານອນຍາມຄືນລະຫ້າຮ້ອຍຄົນ. ພວກທີ່ມານອນຍາມນັ້ນເທວະດາກໍບັນດານໃຫ້ນອນຫຼັບສະໜິດທັງໝົດທຸກຄົນ, ຄັນເມື່ອເຖິງຍາມເດິກພະຍາຈຶ່ງສະເດັດອອກມາກວດເບິ່ງພວກນອນຍາມໃນເມື່ອເຫັນພວກນອນຍາມນອນຫຼັບໝົດທຸກຄົນແລ້ວກໍມີໃຈໂກດກ້າຈຶ່ງຂ້າພວກນອນຍາມນັ້ນຈົນຕາຍໝົດທຸກຄົນ.

ອາການເປັນດັ່ງນີ້ຕໍ່ມາທຸກວັນ, ເຖິງວັນໜຶ່ງຖືກຝຽນຂອງນາຍສະເພົາຈະຕ້ອງຖືກບັງຄັບໃຫ້ໄປນອນເຝົ້າຍາມໂຮງຂອງພະຍາ. ນາຍສະເພົາຮູ້ສຶກວ່າຕົນຈະຕ້ອງຕາຍວັນນີ້ຢ່າງຫຼີກບໍ່ໄດ້ຈຶ່ງຕັດສິນໃຈສັ່ງລາລູກເມຍ ແລະ ລູກເຂີຍດ້ວຍຄຳປະລິຍາຍຕ່າງໆ. ເມື່ອທ້າວສຽວສະຫວາດຜູ້ເປັນລູກເຂີຍໄດ້ຍິນຄຳດັ່ງນັ້ນແລ້ວຈຶ່ງຂັນອາສາໄປຕາງດ້ວຍຄຳເວົ້າທີ່ວ່າຊິ້ນບໍ່ຂາດບໍ່ໃຫ້ຄຸງຊຽງການເມືອງມີຂ້າຂໍໄປຄ້ຳນ້ຳພຽງຄໍຂໍຢັ່ງນ້ຳພຽງຝັ່ງຂໍລອຍດັ່ງນີ້ແລ້ວກໍອອກໄປນອນຍາມຢູ່ທີ່ໂຮງຂອງພະຍາ. ເຖິງເວລາເດິກທ່ຽງຄືນ, ພະຍາຈຳປານະຄອນກໍສະເດັດອອກມາກວດເບິ່ງຄົນນອນຍາມ, ໃນເວລານັ້ນຄົນນອນຍາມທັງຫຼາຍໃຜໆ ກໍພວມນອນຫຼັບທັງໝົດຍັງເຫຼືອແຕ່ທ້າວສຽວສະຫວາດຄົນດຽວ. ເມື່ອທ້າວສຽວສະຫວາດໄດ້ຍິນພະຍາໄຂປະຕູອອກມາ, ທ້າວກໍຟ້າວເຮັດສຽງອະຮື່ອະແຮ່ມຂຶ້ນແລ້ວກໍກ່າວຄາຖາບົກໜຶ່ງວ່າ “ຄະເຕສິຄະເຕສິກິງກະລະນັງອະຫັງປິຕັງຊານາມິ” ເມື່ອພະຍາໄດ້ຍິນກໍຕົກພະໄທຈາກນັ້ນກໍສະເດັດກັບຄືນ. ເຖິງຍາມຖ້ວນສອງຈຶ່ງສະເດັດອອກມາອີກ, ທ້າວສຽວສະຫວາດກໍເຮັດອະຮື່ອະແຮ່ມຂຶ້ນແລ້ວກ່າວວ່າ “ອັດສະຈັນໃຈໂອ້ ໂອນໍສັງເວດສັງມາເປັນດັ່ງນີ້ເປັນໜ້າຍາກຫົວແທ້ນໍ” ເມື່ອພະຍາໄດ້ຍິນດັ່ງນັ້ນກໍສະເດັດກັບຄືນ. ເຖິງຍາມຖ້ວນສາມກໍສະເດັດອອກມາອີກ, ທ້າວສຽວສະຫວາດເຮັດອະແຮ່ມຂຶ້ນແລ້ວກ່າວວ່າ“ເພິ່ງຈາບໍ່ເພິ່ງຈາໃຫ້ລັກຂະນາໃນໃຈຮູ້ແລ້ວຢ່າເມີຢ່າເມີ ” ພະຍາໄດ້ຍິນດັ່ງນັ້ນແລ້ວກໍສະເດັດກັບຄືນພໍດີເຖິງເວລາຮຸ່ງແຈ້ງ. ພວກນອນຍາມກໍພົ້ນຈາກຄວາມຕາຍໝົດສູ່ຄົນຈາກນັ້ນກໍພາກັນກັບຄືນເຮືອນຂອງໃຜລາວ.

ສ່ວນພະຍາຈຳປາຄັນຮຸ່ງສວາຍມາແລ້ວ ຈຶ່ງໃຫ້ອາມາດໄປຫັນເອົາພວກທີ່ມານອນຍາມໃນຄືນແລ້ວມານັ້ນສືບຖາມເບິ່ງວ່າແມ່ນໃຜມານອນຢູ່ບ່ອນຫີນທາງລີ່ງ, ທ້າວສຽວສະຫວາດກໍທູນຮັບວ່າແມ່ນຕົນເອງ, ພະຍາຈຶ່ງຖາມຫາເຫດແຫ່ງຂໍ້ຄວາມທີ່ທ້າວເວົ້າມານັ້ນວ່າເປັນປະການໃດ. ສ່ວນທ້າວສຽວສະຫວາດກໍໄດ້ເຈລະຈາໃຫ້ພະຍາຟັງທຸກປະການດ້ວຍການຊັກນິທານຕ່າງໆມາປຽບທຽບ; ພະຍາມີຄວາມເຫຼື້ອມໃສຍິນດີເປັນອັນມາກຈຶ່ງຕັ້ງທ້າວສຽວສະຫວາດໃຫ້ເປັນລາຊາບັນດິດປະຈຳພະອົງ. ແຕ່ນັ້ນມາທ້າວກໍສັ່ງສອນພະຍາ ແລະ ເສນາອາມາດທັງຫຼາຍໃຫ້ຕັ້ງຢູ່ໃນຮີດຄອງອັນດີ ແລະ ເມືອງຈຳປານະຄອນກໍມີແຕ່ຄວາມຍຸດທິທຳຈະເລີນບໍ່ມີຂ້າເສິກສັດຕູມາບຽດບຽນໃນຕອນທ້າຍທ້າວສຽວສະຫວາດກໍຖືກເລື່ອນຂຶ້ນເປັນອັກຄະມະຫາເສນາບໍດີຜູ້ໃຫຍ່ໃນນະຄອນຈຳປາ.

# ຄຳຖາມ

1. ວັນນະຄະດີຄຳສອນມີຄວາມໝາຍ ແລະ ຄວາມເປັນມາແນວໃດແດ່?
2. ເນື້ອໃນວັນນະຄະດີຄຳສອນມີ ຫັຍງແດ່? ຈົ່ງອະທິບາຍ.
3. ວັນນະຄະດີຄຳສອນມີຄຸນຄ່າແນວໃດ?
4. ນິທານ " ສຽວສະຫວາດ “ມີເນື້ອໃນເວົ້າເຖິງຫັຍງ?

# ບົດທີ 8
# ກະວີນິຍາຍ

## 1. ຄວາມໝາຍ ແລະ ຄວາມເປັນມາ

### 1.1 ຄວາມໝາຍ

ກະວີນິຍາຍແມ່ນບັນດາເລື່ອງຍາວ ຫຼື ກະວີນິພົນທີ່ຂຽນເປັນກອນອ່ານທຳມະດາເຊິ່ງຄົນລາວເອີ້ນວ່າໜັງສືຜູກ ຫຼື ໜັງສືນິທານເຊັ່ນ: ໜັງສືນິທານທ້າວກາລະເກດ, ທ້າວສຸລິວົງ, ທ້າວສີທົນ, ສິນໄຊ, ນາງແຕງອ່ອນ...

ບົດປະພັນວັນນະຄະດີສ່ວນຫຼາຍໃນຄັງສາງວັນນະຄະດີຂຽນໃນສະໄໝອານາຈັກລາວລ້ານຊ້າງລ້ວນແຕ່ແມ່ນກະວີນິຍາຍຊຶ່ງເປັນເລື່ອງຍາວທີ່ເວົ້າເຖິງຊີວິດຂອງຕົວລະຄອນຕ່າງໆໂດຍມີຕົວລະຄອນເອກເປັນໃຈກາງ, ວິທີປະດິດແຕ່ງເວົ້າລວມແມ່ນແບບເພີ້ນຈິດ-ອະພິນິຫານ ແລະ ຂຽນເປັນກອນແຕ່ຕົ້ນຕະຫຼອດປາຍ.

### 1.2 ຄວາມເປັນມາ

ກະວີນິຍາຍໄດ້ກຳເນີດເກີດຂຶ້ນໃນສະໄໝອານາຈັກລາວລ້ານຊ້າງ ແລະ ມີວິວັດທະນາການຄືກັບວັນນະຄະດີຂຽນປະເພດອື່ນໆ ໃນໄລຍະປະຫັວດສາດອັນດຽວກັນເປັນເວລາເຫິງນານໂດຍສະເພາະຢູ່ໃນສະຕະວັດທີ XVI-XVII ເຊິ່ງເປັນໄລຍະທີ່ປະເທດຊາດມີຄວາມຮຸ່ງເຮືອງ, ພ້ອມກັນນັ້ນສາສະໜາກໍ່ໄດ້ສິ່ງຜົນສະທ້ອນໃຫ້ແກ່ການກຳເນີດວັນນະຄະດີປະເພດກະວີນິຍາຍ. ບັນດານັກປາດອາຈານລາວໄດ້ປະດິດແຕ່ງເລື່ອງຕ່າງໆ ຢ່າງຫຼວງຫຼາຍມີບາງເລື່ອງສ່ອງສຸງເຖິງສາສະໜາພຸດເຊັ່ນ: ເລື່ອງ ທ້າວຈັນທະຄາດ , ທ້າວກາລະເກດ, ຈຳປນສີ່ຕົ້ນ. ພະລັກພະລາມ...

ນອກຈາກນີ້ກໍ່ມີບາງເລື່ອງທີ່ແຕ່ງຂຶ້ນດ້ວຍການສຳນຶກຂອງຜູ້ແຕ່ງເອງໂດຍສົມທົບກັບເຫດການໃນປະຫັວດສາດ, ສະພາບຕົວຈິງໃນສັງຄົມ ແລະ ສົມທົບກັບເຄົ້າເລື່ອງຊາດົກຕ່າງໆ. ທີ່ໄດ້ມາຈາກວັນນະຄະດີພື້ນເມືອງຂອງອິນເດຍເພື່ອສ້າງເປັນຕົວລະຄອນ.ໃນນັ້ນເດັ່ນກ່ວາໝູ່ໃນປະເທດເຮົາແມ່ນ ເລື່ອງ ທ້າວຮຸ່ງ - ທ້າວເຈືອງ ແລະ ເລື່ອງ ສິນໄຊ...

## 2. ເນື້ອໃນ

ເນື້ອໃນຂອງເລື່ອງກະວີນິຍາຍນີ້ຜູ້ແຕ່ງສ້າງຂຶ້ນມາໂດຍອີງຕາມສະພາບສັງຄົມສັກດີນາໃນສະໄໝນັ້ນ ແລະ ສົມທົບກັບເຄົ້າເລື່ອງຊາດົກໂດຍຜ່ານທາງສາສະໜາ ແລະ ບາງເລື່ອງກໍ່ອີງໃສ່ເຫດການທາງປະຫັວດສາດລາວດັ່ງທີ່ກ່າວມາຂ້າງເທິງ. ສະນັ້ນ, ຈຶ່ງສັງລວມເນື້ອໃນຂອງກະວີນິຍາຍໄດ້ດັ່ງນີ້:

- ສ່ອງແສງເຖິງສະໄໝປະຫັວດສາດລາວທີ່ຍັງບໍ່ທັນເປັນສັກດີນາລວມສູນ ແລະ ມີການຍາດຊີງກັນຄວບຄຸມຫົວເມືອງຕ່າງໆທີ່ອ່ອນແອມາຂຶ້ນກັບຕົນ, ສ່ອງແສງເຖິງບົດບາດຂອງຕົວລະຄອນເປັນ

ບຸກຄົນປະຫັວດສາດທີ່ມີອຸດົມຄະຕິອັນດີເລີດຂອງຊົນຊັ້ນສັກດີນາ ແລະ ສ່ອງແສງເຖິງຮີດຄອງປະເພນີ, ພິທີການປະຕິສັນຖານຕ້ອນຮັບແຂກຂອງຊາວບູຮານຕະຫຼອດເຖິງມູນເຊື້ອວັດທະນະທຳອັນດີງາມຂອງຄົນລາວ. ສະແດງອອກຜ່ານພາສາຄຳເວົ້າທີ່ອຸດົມສົມບູນເປັນຕົ້ນແມ່ນກະວີນິຍາຍເລື່ອງທ້າວຮຸ່ງທ້າວເຈືອງ.

- ຍ້ອງຍໍສັນລະເສີນນ້ຳໃຈມະນຸດສະທຳ, ຄວາມສະຫຼຽວສະຫຼາດ, ຄວາມເກັ່ງກ້າສາມາດ ແລະ ຄຸນສົມບັດອັນດີເລີດ. ເວົ້າເຖິງຄຸນຄ່າ ແລະ ບົດບາດຂອງຜູ້ທຸກຈົນທີ່ສ້າງຄຸນງາມຄວາມດີຕໍ່ສັງຄົມຈົນເຖິງຂັ້ນສູງສຸດ. ສ່ອງແສງໃຫ້ເຫັນລັກສະນະປະຊາຊົນ ແລະ ການຕໍ່ສູ້ຊົນຊັ້ນທີ່ກົງກັນຂ້າມຢ່າງຈະແຈ້ງເດັ່ນກ່າວໝູ່ແມ່ນເລື່ອງ "ທ້າວຈັນທະຄາດ".
- ສ່ອງແສງເຖິງການຕໍ່ສູ້ເພື່ອຄວາມຮັກອັນບໍລິສຸດ, ຂໍຄວາມເປັນທຳຕໍ່ຄວາມຮັກເຊິ່ງຕ້ອງໄດ້ຜ່ານຜ່າອຸປະສັກນານາປະການຈຶ່ງສຳເລັດ. ກ່າວປະນາມຄວາມປ່າເຖື່ອນໄຮ້ເຫດຜົນ, ຂາດຄວາມຍຸຕິທຳຂອງຊົນຊັ້ນສັກດີນາ ແລະ ກ່າວປະນາມພວກເຈົ້າຂຸນມູນນາຍຢູ່ໃນພະລາຊາວັງທີ່ກົດຂີ່ຂູດຮີດລາສະດອນໂດຍສະເພາະແມ່ນເພດຍິງ. ສ່ອງແສງໃຫ້ເຫັນນ້ຳໃຈຮັກຫອມເຊິ່ງກັນ ແລະ ກັນລະຫ່ວາງຄົນໃນ  ສາຍເລືອດ ແລະ ວົງຕະກຸນດຽວກັນ. ສ່ອງແສງເຖິງຕົວລະຄອນພະຍາທີ່ເປັນຄົນບໍ່ສະຫຼາດໃນການພິຈາລະນາບັນຫາ ຂອງສັງຄົມ ເຊັ່ນ: ເລື່ອງ "ນາງແຕງອ່ອນ".
- ສ່ອງແສງເຖິງຄວາມອະທຳ ແລະ ຂໍ້ຂັດແຍ້ງໃນການຊີວິດຊີວິງເດັ່ນໃນສັງຄົມ, ສ່ອງແສງເຖິງການຕໍ່ສູ້ອຳນາດທີ່ອະທຳ ຫຼື ສັດຕູຜູ້ຮຸກຮານ, ການຕໍ່ສູ້ລະຫ່ວາງສິນທຳກັບອະທຳ. ການເຄົາລົບນັບຖືຕໍ່ມູນເຊື້ອວັດທະນາທຳ, ຮີດຄອງປະເພນີການສູ່ຂໍຄວາມເປັນຜົວເມຍ, ຜູ້ໃດລ່ວງລະເມີດຜູ້ນັ້ນຈະຖືກປະລາໄຊຕົວຢ່າງລະຄອນຍັກກຸມພັນ ແລະ ຕົວລະຄອນທ້າວຮາບພະນາສວນຢູ່ໃນເລື່ອງສິນໄຊ ແລະ ເລື່ອງພະລັກພະລາມ. ແຕ່ລະເນື້ອໃນດັ່ງກ່າວມານີ້ຜູ້ແຕ່ງໄດ້ເອົາສາສະໜາເຂົ້າມາແຊກຊ້ອນຢູ່ນຳເພື່ອໃຫ້ເກີດຄວາມສັກສິດຕໍ່ຜູ້ອ່ານຕາມຍຸກສະໄໝສັງຄົມນັ້ນ.

## 3. ຄຸນຄ່າ

### 3.1 ຄຸນຄ່າທາງດ້ານປະຫັວດສາດ

ກະວີນິຍາຍໄດ້ສ່ອງແສງເຖິງຄວາມເປັນມາຂອງຊາດລາວ ກ່ອນການສ້າງຕັ້ງອານາຈັກລາວລ້ານຊ້າງເອກະພາບ.ເຖິງວ່າຂໍ້ມູນຕ່າງໆທີ່ນັກແຕ່ງພັນລະນາຢູ່ໃນບົດກະວີນິຍາຍເລື່ອງບໍ່ແມ່ນຄວາມຈິງທີ່ແນ່ນອນກໍຕາມ, ແຕ່ມັນໄດ້ສ້າງຈິດສຳນຶກ ແລະ ສະຕິຊາດໃຫ້ແກ່ຄົນເຮົາ, ເຮັດໃຫ້ຄົນເຮົາຮູ້ຈັກສະພາບການທາງປະຫັວດສາດຂອງຊາດ ຢ່າງຕໍ່ເນື່ອງ ແລະ ມີລັກສະນະສືບທອດ ໂດຍຜ່ານທາງວັນນະຄະດີປະເພດກະວີນິຍາຍໃນລະດັບໃດໜຶ່ງຢ່າງແນ່ນອນ.

### 3.2 ຄຸນຄ່າທາງດ້ານພາສາວັນນະຄະດີ

ກະວີນິຍາຍເປັນວັນນະຄະດີຊຽນພາກສ່ວນໜຶ່ງທີ່ຖືກອະນຸລັກຮັກສາໄວ້ຢູ່ໃນຄັງສາງວັນນະຄະດີຊຽນຂອງລາວເປັນເວລາດົນນານ. ມາເຖິງປັດຈຸບັນຍັງຊົງຄຸນຄ່າສູງສົ່ງທາງດ້ານພາສາວັນນະຄະດີທີ່ນີ້ມນວນ, ລະອຽດເລິກເຊິ່ງ ແລະ ອຸດົມສົມບູນ, ສັບພາສາທີ່ນັກແຕ່ງນຳມາພັນລະນາຢູ່

ໃນກະວີນິຍາຍເລື່ອງຕ່າງໆ ເປັນສັບພາສາທີ່ມີຮູບພາບ, ມ່ວນອອນຊອນ, ຜູ້ອ່ານຜູ້ຟັງມີຄວາມປະທັບໃຈເກີດມີອາລົມມ່ວນຊື່ນ, ໂສກເສົ້ານຳຕົວລະຄອນໃນເຫດການຂອງເລື່ອງ ໂດຍຜ່ານສັບພາສາວັນນະຄະດີ. ສະນັ້ນ, ສັບພາສາວັນນະຄະດີທີ່ນັກແຕ່ງເລືອກເຟັ້ນເຂົ້າມາໃນບົດກະວີນິຍາຍໃນແຕ່ລະເລື່ອງ ຈຶ່ງໄດ້ຮັບຄວາມນິຍົມຊົມຊອບຈາກບັນດາຜູ້ອ່ານ ນັບແຕ່ສະໄໝບູຮານຈົນມາເຖິງປັດຈຸບັນ ເຊິ່ງນັກຂຽນຍັງໄດ້ນຳເອົາສັບພາສາວັນນະຄະດີເຫຼົ່ານັ້ນມາໃຊ້ເຂົ້າໃນການປະດິດແຕ່ງບົດກະວີ.

**3.3 ຄຸນຄ່າທາງດ້ານແນວຄິດສັງຄົມ**

ກະວີນິຍາຍມີບົດບາດທາງດ້ານການສຶກສາແນວຄິດຄົນແຕ່ລະຍຸກສະໄໝ. ຜ່ານການອ່ານເລື່ອງຕ່າງໆ ເຮັດໃຫ້ເຮົາສາມາດຮູ້ ແລະ ເຂົ້າໃຈບັນດາເນື້ອໃນແນວຄິດຕາມແບບສັງຄົມສັກດີນາສະໄໝນັ້ນ. ພ້ອມທັງສຶກສາອົບຮົມຜູ້ອ່ານໃຫ້ຮັກຄວາມເປັນທຳ ແລະ ກຽດຊັງສິ່ງອະທຳ; ມີຄວາມອົງອາດກ້າຫານ, ມີຄວາມຊື່ສັດຕໍ່ຄວາມຮັກເປັນຕົ້ນ.

**3.4 ຄຸນຄ່າທາງດ້ານສັນທະກະວີ**

ວັນນະຄະດີປະເພດກະວີນິຍາຍທຸກບົດລ້ວນແຕ່ມີຄຸນຄ່າຕໍ່ສັງຄົມໂດຍສະເພາະແມ່ນຄຸນຄ່າທາງດ້ານສັນທະກະວີມັນຊ່ວຍໃຫ້ເປັນພື້ນຖານໃນການປະດິດແຕ່ງວັນນະຄະດີປະເພດຄຳຮ້ອຍກອງໃນສະໄໝຕໍ່ມາ. ບັນດານັກແຕ່ງນັກກະວີທັງຫຼາຍ ໄດ້ສືບທອດວິທີການແຕ່ງກອນແບບມູນເຊື້ອດັ່ງກ່າວ. ໃນເລື່ອງ " ສິນໄຊ " ຖືໄດ້ວ່າເປັນນິຍາຍຄຳກອນຂັ້ນສຸດຍອດຂອງລາວທີ່ມີຫຼັກການ ການແຕ່ງກອນແບບເກາະກ່າຍລ່ຽນໄຫຼແຕ່ຕົ້ນຕະຫຼອດປາຍ ແລະ ຖືກຕ້ອງຕາມຫຼັກການສຳຜັດບໍ່ມີບ່ອນຜິດພາດ ເຊິ່ງພວກເຮົາຄວນນຳມາສຶກສາຮ່ຳຮຽນເພື່ອໃຫ້ເກີດປະໂຫຍດຕໍ່ໄປ.

## ເລື່ອງ ຈຳປາສີ່ຕົ້ນໂດຍຫຍໍ້

ມີເມືອງໜຶ່ງຊື່ວ່າ ປັນຈາ ປົກຄອງໂດຍພະຍາຈຸນລະນີ, ພະອົງມີມະເຫສີຊື່ວ່າ ນາງອັກຄີ ແລະ ມີເມືອງໜຶ່ງອີກຊື່ວ່າ ທານີ ຫຼື ຈັກຂິນ ມີພະຍາຈັກຂິນເປັນຜູ້ປົກຄອງ, ພະອົງມີມະເຫສີຊື່ວ່ານາງຈັນທາ; ພະຍາຈັກຂິນປົກຄອງບ້ານເມືອງມາເປັນເວລາຊ້ານານຈຶ່ງມີລູກສາວຜູ້ໜຶ່ງທີ່ມີຮູບໂສມອັນສວຍງາມຊື່ວ່າ ນາງປັດທຸມມາ ຫຼື ປະທຸມມາ.

ໃນເວລາຕໍ່ມາມີຮຸ້ງຍັກຜີວເມຍມາກິນຊາວເມືອງຈັກຂິນຈົນໝົດ.ເມື່ອເຫດການເປັນແນວນັ້ນ, ພະຍາຈັກຂິນ ແລະ ມະເຫສີກໍຮູ້ດີວ່າ ຕ້ອງຕາຍຍ້ອນຮຸ້ງຜີວເມຍນີ້. ດັ່ງນັ້ນ, ຈຶ່ງຕັດສິນໃຈເອົານາງປັດທຸມມາ ໄປເຊື່ອງໄວ້ຢູ່ໃນກອງໝ່ວຍໜຶ່ງໃນພະລາຊະວັງ. ຕໍ່ມາຮຸ້ງກໍມາກິນພະຍາ ຈັກຂິນກັບມະເຫສີ ຈົນຍັງເຫຼືອແຕ່ກະດູກປະໄວ້ຢູ່ໃນຫໍຜະສາດ.

ມື້ໜຶ່ງພະຍາຈຸນລະນີ ຜູ້ປົກຄອງເມືອງປັນຈາໄດ້ອອກເດີນດົງເດີນປ່າໄປຫາລ່າເນື້ອຈຶ່ງໄປພໍ້ກວາງຄຳໂຕໜຶ່ງເຊິ່ງແມ່ນເທວະດາກັບເພດເປັນ; ພະອົງໄລ່ຕິດຕາມກວາງຄຳໄປເລື້ອຍໆ.ເວລານັ້ນຄັນມໍ່ຈະຈັບໄດ້ກວາງຄຳກໍແລ່ນໄປໜ້າແລ້ວທຳທ່າເຮັດຂາຫັກແລ່ນຂະເຍັກຂະເຍັກໄປ; ພະ

ອິງໄລ່ຕາມຈົນຫຼົງປ່າ ແລະ ພັດພາກຈາກເສນາອາມາດ, ໃນທີ່ສຸດພະຍາຈຸນລະນີກໍເຂົ້າໄປໃນເມືອງຈັກຂິນທີ່ເປັນເມືອງເປົ່າຮ້າງມີແຕ່ກະດູກຄົນ ແລະ ກະດູກສັດກອງເດຍລະດາດຢູ່; ເມື່ອເລາະເຂົ້າໄປໃນຫໍຜາສາດ ຈຶ່ງເຫັນກອງໃຫ່ຍໜ່ວຍໜຶ່ງແຂວນຢູ່ພະອົງໄປເຄາະເບິ່ງ, ນາງປັດທຸມມາຄິດວ່າແມ່ນຮຸ້ງຍັກຈະມາກິນຈຶ່ງອອກປາກວ່າ:

| | |
|---|---|
| ມຶງຈິ່ງມາກິນທ້ອນ | ຜີເຢັນຮຸ້ງໃຫ່ຍ |
| ກູຈັກທານທອດໃຫ້ | ວາງເນື້ອແກ່ມຶງ ແທ້ແລ້ວ |
| ມຶງຈິ່ງໄຂກິນທ້ອນ | ຢ່ານານແວນຮີບ |
| ຕາງໃຫ້ດັບຊີ່ວຊ້ຳ | ນຳເຈົ້າພໍ່ກູ ທັ້ນທ້ອນ |

ພະຍາຈຸນລະນີຮູ້ວ່າຢູ່ໃນກອງນັ້ນມີຄົນຈຶ່ງເຈາະໜ້າກອງເອົານາງປັດທຸມມາອອກມາ ແລ້ວພາກັນກັບຄືນເມືອງປັນຈາອະພິເສກເປັນມະເຫສີໃສ່ຊື່ວ່ານາງຄຳກອງ.ຕໍ່ມານາງຄຳກອງປະສູດລູກເປັນຊາຍທັງສີ່,ໃນຄະນະນັ້ນນາງອັກຄີສັ່ງໃຫ້ຄົນເອົາໝານ້ອຍມາປ່ຽນແທນ,ສ່ວນກຸມມານທັງສີ່ ນາງອັກຄີສັ່ງໃຫ້ຄົນເອົາໃສ່ໄຫໄປໄຫຼນ້ຳ. ໄຫກຸມມານທັງສີ່ ໄຫຼໄປຄ້າງຢູ່ທ່າຂອງຢ່າຈຳສວນ, ຢ່າຈຳສວນຈຶ່ງນຳເອົາກຸມມານທັງສີ່ໄປລ້ຽງໄວ້.ເມື່ອນາງອັກຄີຮູ້ຂ່າວຈຶ່ງສັ່ງໃຫ້ຄົນເອົາງ້ວນໃສ່ເຂົ້າຕົ້ມມາເບື່ອກຸມມານທັງສີ່ຈົນກຸມມານທັງສີ່ຕາຍໝົດ.ຜົວເມຍເຖົ້າຈຳສວນຈຶ່ງເອົາກຸມມານທັງສີ່ໄປຝັງໄວ້ຢູ່ແຄມສວນ ເລີຍເກີດເປັນຕົ້ນດອກຈຳປາສີ່ ຕົ້ນ.

ເມື່ອນາງອັກຄີຮູ້ຂ່າວກໍບັງຄັບສອງເຖົ້າຈຳສວນຫຼົກໄປໄຫຼຖິ້ມໃສ່ນ້ຳ.ຕົ້ນຈຳປາທັງສີ່ໄຫຼໄປຄ້າງຢູ່ທ່າພະລືສີຕາໄຟ,ໃນຂະນະນັ້ນມີເນນລົງມາຕັກນ້ຳເຫັນດອກຈຳປາຈຶ່ງເດັດເອົາດອກໜຶ່ງເມືອຖວາຍແກ່ພະລືສີຕາໄຟ, ພະລືສີຕາໄຟ ຮູ້ວ່າ ບໍ່ແມ່ນດອກໄມ້ທຳມະດາຈຶ່ງເອົານ້ຳເຕົ້າແກ້ວທົດ, ຕົ້ນດອກຈຳປາກາຍເປັນທ້າວທັງສີ່ ຜູ້ອ້າຍຊື່ວ່າ: ທ້າວ ເສດຕະລາດ, ຜູ້ຕໍ່ມາຊື່ວ່າ:ທ້າວຈິດຕະລາດ, ທ້າວ ສຸວັນນະລາດ ແລະ ຜູ້ຫຼ້າຊື່ວ່າ ທ້າວ ເພັດຊະລາດ.

ຈາກນັ້ນພະລືສີກໍໄດ້ສິດສອນວິຊາອາຄົມໃຫ້ຈົນ ມີຄວາມເກັ່ງກ້າ ສາມາດຮອບດ້ານໂດຍສະເພາະແມ່ນທ້າວເພັດຊະລາດນ້ອງຊາຍຫຼ້າມີນິ້ວມືວິເສດ. ມີມື້ໜຶ່ງພະອິນກັບເພດເປັນຕາຜ້າຂາວມາບອກວ່າ ກຸມມານທັງສີ່ເປັນລູກຂອງພະຍາ ຈຸນລະນີ ແລະ ນາງ ຄຳກອງ ຢູ່ເມືອງປັນຈາ, ປັດຈຸບັນນີ້ນາງຄຳກອງຖືກຕົກທຸກໄດ້ຍາກຫຼາຍຍ້ອນຖືກນາງອັກຄີຫາເລື່ອງໃສ່.

ເມື່ອທ້າວທັງສີ່ຮູ້ເລື່ອງຄືດັ່ງນັ້ນແລ້ວຈຶ່ງໄປກາບລາພໍ່ລືສີ ແລະ ອອກເດີນທາງໄປເມືອງປັນຈາ; ນົບເສັ້ນທາງໄປທ້າວທັງສີ່ໄດ້ຕໍ່ສູ້ກັບພະຍາເມືອງຕ່າງໆ ແລະໄດ້ເອົາເມຍໄປຕາມທາງຍັງເຫຼືອແຕ່ທ້າວເພັດສະລາດຜູ້ດຽວ, ເມື່ອທ້າວທັງສີ່ເດີນທາງມາເຖິງເມືອງປັນຈາແລ້ວກໍເອົາສະເພົາຈອດໄວ້ຢູ່ທ່ານ້ຳ, ທ້າວເພັດສະລາດເຂົ້າໄປໃນເມືອງປັນຈາເພື່ອຊອກຫາແມ່, ພໍດີໄປເຫັນພະຍາຈຸນລະນີ ແລະ ນາງອັກຄີນອນຫຼັບສະນິດແລ້ວກໍຂຽນສານໄວ້ບອກໃຫ້ພະຍາຈຸນລະນີເອົາ ນາງຄຳກອງໄປສົ່ງໃຫຖ້າບໍ່ສົ່ງບ້ານເມືອງຈະພົບອັນຕະລາຍ ແລະໄ ດ້ແຕ້ມຮູບນຫູມີໃສ່ໜ້າຜາກພະຍາຈຸນລະນີແລະນາງອັກຄີແລ້ວກໍກັບຄືນກ. ຈາກນັ້ນທ້າວເພັດຊະລາດໄປພົບນາງຄຳກອງພວມຫາບບອນໄປເກືອໝູ. ໃນເມື່ອຮູ້ວ່າແມ່ນແມ່ ຂອງຕົນ, ທ້າວເພັດຊະລາດກໍເອົາແມ່ມາໄວ້ຢູ່ສະເພົານຳອ້າຍທັງ

ສາມຄົນ.

ເມື່ອພະຍາຈຸນລະນີຕື່ນມາເຫັນສານ ແລະ ຮູບແຕ້ມໃສ່ໜ້າຜາກກໍຄິດຢ້ານກົວຈຶ່ງໃຫ້ຄົນເອົາຜູ້ຍິງໃນໂຮງໄປສົ່ງໃຫ້ທ້າວຢູ່ສະເພົາແຄມທ່າເພື່ອເປັນການຫຼອກລວງ, ແຕ່ທ້າວຮູ້ຈັກວ່າບໍ່ແມ່ນແມ່ຜູ້ຊື່ຄໍາກອງ. ເມື່ອເປັນແນວນັ້ນ ທ້າວເພັດຊະລາດຈຶ່ງໄດ້ຕັກເຕືອນສັ່ງສອນໃຫ້ແກ່ພະຍາຈຸນລະນີພ້ອມດ້ວຍເສນາອາມາດທັງຫຼາຍໃຫ້ຢູ່ໃນຄວາມເປັນທໍາ. ສ່ວນພະຍາຈຸນລະນີເມື່ອຮັບຊາບທຸກສິ່ງຢ່າງຈາກເຫດການເປັນມາກໍໄດ້ລົງໂທດນາງອັກຄີໂດຍໃຫ້ໄປເປັນຄົນລ້ຽງໝູ ແລະ ກໍໄດ້ຮັບເອົານາງຄໍາກອງມາເປັນມະເຫສີຄືດັ່ງເກົ່າ. ເບື້ອງຕົ້ນນາງຄໍາກອງປະຕິເສດ, ແຕ່ຍ້ອນມີລູກທັງສີ່ເປັນຜູ້ອ້ອນວອນຈຶ່ງປະຕິເສດບໍ່ໄດ້.

ຫຼັງຈາກນັ້ນອ້າຍທັງສາມກໍກັບຄືນໄປເມືອງໃຜເມືອງລາວ. ສ່ວນທ້າວເພັດຊະລາດຢູ່ນໍາພໍ່ແມ່ຊົ່ວຄາວແລ້ວກໍອໍາລາພໍ່ແມ່ອອກໄປຊອກຫາເມຍ, ບິນເສັ້ນທາງໄປກໍໄດ້ຕໍ່ສູ້ກັບພະຍາທອນພ້ອມດ້ວຍຝູງຍັກຝູງມານຕ່າງໆ ແລ້ວທ້າວກໍໄປໄດ້ກັບນາງ ປະທຸມມາໄກສອນ ຢູ່ນໍາພະລືສີກາງປ່າແຫ່ງໜຶ່ງ. ຈາກນັ້ນກໍພາເມຍກັບຄືນເມືອງ ປັນຈາ, ໃນຂະນະທີ່ພັກເຊົາຢູ່ກາງ ປ່ານັ້ນ ກໍຖືກຍັກລັກເອົານາງປະທຸມມາໄກສອນໄປ. ທ້າວເພັດຊະລາດ ຈຶ່ງອອກຕິດຕາມຫາເມຍຈົນໄປເຖິງເມືອງເຂົາຂຶງ ຈຶ່ງໄປໄດ້ກັບນາງອັດສະມາລາແກ້ວເປັນເມຍຕື່ມອີກ. ຈາກນັ້ນ ທ້າວເພັດຊະລາດ ຈຶ່ງເດີນທາງໄປຕາມຫານາງປະທຸມມາໄກສອນ, ເມື່ອພົບກັບນາງປະທຸມມາໄກສອນແລ້ວ ທັງສາມ ຈຶ່ງພ້ອມກັນກັບເມືອງປັນຈາ, ທ້າວເພັດຊະລາດມີລູກຊາຍສອງຄົນ ຜູ້ໜຶ່ງຊື່ວ່າ ທ້າວສຸວັນນະໄກສອນ ທີ່ເກີດຈາກນາງປະທຸມມາ ໄກສອນ ແລະ ອີກຜູ້ໜຶ່ງຊື່ວ່າ ທ້າວອັດສະລາດທີ່ເກີດຈາກນາງອັດສະມາລາແກ້ວ.

ສ່ວນອ້າຍຂອງທ້າວເພັດຊະລາດທັງສາມຄົນນັ້ນກໍໄດ້ກັບໄປຄອງເມືອງຂອງພວກເຂົາຢ່າງມີຄວາມສຸກ ແລະ ມີລູກຊາຍຜູ້ລະຄົນ.ຢູ່ຕໍ່ມາອ້າຍທັງສາມຄິດຮອດພໍ່ແມ່ແລ້ວຈຶ່ງພາກັນໄປຢາມພໍ່ແມ່ຢູ່ເມືອງປັນຈາ, ພວກເຂົາທັງສີ່ອ້າຍນ້ອງ ຈຶ່ງໄດ້ພົບກັນຢູ່ທີ່ນັ້ນ.

ສ່ວນນາງຄໍາກອງຢູ່ເມືອງປັນຈາກໍຄິດຮອດເມືອງຈັກຂິນເຊິ່ງເປັນເມືອງພໍ່ແມ່ຂອງນາງຈຶ່ງຊວນສາມີພ້ອມດ້ວຍລູກຫຼານທຸກຄົນໄປເມືອງຈັກຂິນ. ເມື່ອໄປຮອດກໍເຫັນແຕ່ເມືອງຮ້າງ, ມີແຕ່ກອງກະດູກເຕັມຢູ່, ທ້າວເພັດຊະລາດຈຶ່ງເອົານິ້ວມືວິເສດຊີ້ໃສ່ກອງກະດູກຈຶ່ງກັບຄືນມາເປັນຄົນເປັນສັດເຕັມເມືອງຄືເກົ່າ. ສ່ວນຮຸ້ງຍັກຜົວເມຍ ເຫັນຄົນໃນເມືອງ ເຄື່ອນໄຫວປົກກະຕິມັນຈຶ່ງລົງ ມາຊິກິນຄົນຢູ່ໃນເມືອງຄືເກົ່ານັ້ນອີກ, ໃນເວລານັ້ນ ທ້າວເພັດຊະລາດ ກໍໄດ້ປາບຮຸ້ງຍັກຜົວເມຍຈົນຕາຍ. ຈາກນັ້ນ ທ້າວເພັດຊະລາດ ກໍໄດ້ຄອງເມືອງຈັກຂິນຂຶ້ນ ແທນພໍ່ເຖົ້າ, ຕໍ່ມາທ້າວສຸວັນ ນະໄກສອນໄດ້ປົກຄອງເມືອງປັນຈາແທນປູ່, ທ້າວອັດຊະລາດ ໄດ້ປົກຄອງເມືອງເຂົາຂຶງ ເຊິ່ງເປັນເມືອງຂອງແມ່. ສ່ວນທ້າວທັງສາມຜູ້ເປັນອ້າຍນັ້ນ ໄດ້ໄປປົກຄອງເມືອງຂອງເຂົາຄື: ທ້າວເສດຕະລາດຄອງເມືອງສິງຫົນ, ທ້າວຈິດຕະລາດ ຄອງເມືອງໄອສວນ ແລະ ທ້າວ ສຸວັນນະລາດ ຄອງເມືອງຈໍາປາ.

## ຄຳຖາມ ແລະບົດເຝິກຫັດ

1. ວັນນະຄະດີ "ກະວີນິຍາຍ" ແມ່ນແນວໃດ?
2. ເນື້ອໃນຂອງ "ກະວີນິຍາຍ" ມີເນື້ອໃນຫັຍງແດ່?
3. "ກະວີນິຍາຍ" ມີຄຸນຄ່າແນວໃດ?
4. ຈົ່ງອ່ານເລື່ອງ "ຈຳປາສີ່ຕົ້ນ" ເນື້ອໃນເວົ້າເຖິງຫຍັງ?

# ພາກທີ III
# ວັນນະຄະດີລາວໃນສະຕະວັດທີ XVIII - XIX
## ບົດທີ 9
## ວັນນະຄະດີລາວໃນສະຕະວັດທີ XVIII - XIX

### 1. ສະພາບປະຫັວດສາດ ແລະ ສັງຄົມລາວ

#### 1.1 ສະພາບປະຫັວດສາດ

ອານາຈັກລາວລ້ານຊ້າງ,ເມື່ອກ້າວເຂົ້າສູ່ສະຕະວັດທີXVIII-XIXກໍ່ເລີ່ມມີແຕ່ຄວາມສັບສົນວຸ້ນວາຍຢ່າງຮ້າຍແຮງແລະແຕກແຍກກັນຢູ່ພາຍໃນກຸ່ມສັກດິນາລາວຜູ້ກຳອຳນາດໂດຍສະເພາະຫຼັງຈາກເຈົ້າສຸລິຍະວົງສາສິ້ນພະຊົນໃນປີ1690ຈົນພາໃຫ້ອານາຈັກລາວລ້ານຊ້າງທີ່ເປັນເອກະພາບ, ຈະເລີນຮຸ່ງເຮືອງ ແລະ ເຂັ້ມແຂງ ຕ້ອງຖືກແບ່ງແຍກ ເປັນ ສາມອານາຈັກຄື:

- ປີ1707 ປະເທດແບ່ງອອກເປັນ ສອງອານາຈັກ: ອານາຈັກລ້ານຊ້າງວຽງຈັນ ແລະ ອານາຈັກລ້ານຊ້າງຫຼວງພະບາງ
- ປີ 1713 ທາງນະຄອນຈຳປາສັກກໍ່ປະກາດແຍກຕົວອອກເປັນອານາຈັກໜຶ່ງອີກຢ່າງເອກະລາດ
- ການແຕກແຍກ ແລະ ປໍລະປັກກັນລະຫ່ວາງ 3 ອານາຈັກ ໄດ້ເຮັດໃຫ້ ອານາຈັກທັງ 3 ນັບມື້ອ່ອນເພຍ ແລະ ຊຸດໂຊມລົງເລື້ອຍໆ ເຊິ່ງເຮັດໃຫ້ສັດດີນາສະຫຍາມເຂົ້າມາຮຸກຮານ
- ສະພາບການດັ່ງກ່າວນັ້ນເຮັດໃຫ້ປະເທດຊາດ ບ້ານເມືອງ, ເວົ້າສະເພາະແມ່ນນະຄອນຫຼວງວຽງຈັນໄດ້ຖືກທຳລາຍມ້າງເພ. ພວກສັກດິນາສະຫຍາມໄດ້ບັງຄັບຈັບກຸມເອົາຊາວນະຄອນຫຼວງວຽງຈັນ, ເປັນຕົ້ນແມ່ນພວກປັນຍາຊົນ ແລະ ນາຍຊ່າງພ້ອມນັ້ນພວກມັນຍັງປຸ້ນສະດົມເອົາສັບສົມບັດເປັນຈຳນວນຫຼວງຫຼາຍ, ພິເສດພວກເຂົາໄດ້ປຸ້ນເອົາພະແກ້ວມໍລະກົດ, ພະບາງ ແລະ ສິ່ງຂອງມີຄ່າອື່ນໆ. ພະແກ້ວມໍລະກົດຍັງຖືກຍຶດຄອງ ແລະ ຮັກສາໄວ້ຢູ່ປະເທດໄທ ຈົນເຖິງດຽວນີ້.
- ປີ 1804 ເຈົ້າອະນຸວົງໄດ້ຂຶ້ນຄອງລາດວຽງຈັນ, ພະອົງເປັນຜູ້ທີ່ມີຈິດໃຈຮັກຊາດຢ່າງສູງສົ່ງ ແລະ ຮອດປີ 1827 - 1828 ພະອົງຈຶ່ງໄດ້ນຳພາປະຊາຊົນ ແລະ ກຳລັງທະຫານລຸກຂຶ້ນຕໍ່ສູ້ແລ້ວນຳເອົາປະຊາຊົນທີ່ຖືກພວກສັກດິນາສະຫຍາມເກັບກວາດໄປນັ້ນກັບຄືນມາວຽງຈັນ. ຂະບວນການຕໍ່ສູ້ຂອງເຈົ້າອະນຸວົງດຳເນີນໄປຢ່າງດຸເດືອດ ແຕ່ບໍ່ສຳເລັດຜົນ ຍ້ອນກຳລັງໜ້ອຍ, ອາວຸດບໍ່ທັນສະໄໝ ແລະ ອື່ນໆ ຂະບວນການຕໍ່ສູ້ຂອງພະອົງຖືກປາບປາມ, ເຈົ້າອະນຸວົງກໍ່ຖືກສັກດິນາສະຫຍາມຈັບໄປບາງກອກ ແລະ ຖືກທາລຸນຈົນເຖິງແກ່ມໍລະນາກຳ. ແຕ່ຮູບພາບ, ນ້ຳໃຈອັນສະຫ່າງາອົງອາດຂອງເຈົ້າອະນຸວົງ ແລະ ເພື່ອນຮ່ວມຮົບຂອງພະອົງຍັງຄົງຝັງແໜ້ນຢູ່ໃນດວງໃຈຂອງປະຊາຊົນລາວຜູ້ຮັກຊາດຕະຫຼອດມາ.

## 1.2 ສະພາບສັງຄົມລາວ

ໃນສະພາບທີ່ປະເທດຊາດສູນເສຍຄວາມເປັນເອກະລາດມັນໄດ້ສ້າງຄວາມເຈັບປວດໃຫ້ປະຊາຊົນລາວທຸກຄົນ; ເຈົ້າອະນຸວົງຂຶ້ນຄອງລາດວຽງຈັນໃນປີ 1804 ພະອົງໄດ້ນຳພາປະຊາຊົນຟື້ນຟູປະເທດຊາດໃຫ້ຈະເລີນຂຶ້ນດັ່ງນີ້:

- ປີ 1807 ໄດ້ສ້າງພະລາດສະວັງຂຶ້ນໃນພະນະຄອນວຽງຈັນ
- ປີ 1808 ໄດ້ສ້າງວັດສີບຸນເຮືອງຂຶ້ນຢູ່ໜອງຄາຍ (ແຕ່ກ່ອນເປັນເຂດດິນຂອງລາວ)
- ປີ 1812ໄປສະຫຼອງວັດທາດພະນົມ, ຈັດການສ້າງຂົວຂ້າມແມ່ນ້ຳຂອງຢູ່ທ່າວັດຊ້າງເຜືອກ ບ້ານສີຊຽງໃໝ່ (ກົງກັນຂ້າມກັບເມືອງສີໂຄດຕະບອງຂອງລາວດຽວນີ້)
- ປີ 1816 ໄດ້ທຳບຸນສະຫຼອງຫໍພະແກ້ວ ແລະ ຫໍໄຕ ຢູ່ວຽງຈັນ
- ປີ 1818 ພະອົງຈິ່ງຂໍແຕ່ງຕັ້ງເຈົ້າລາຊະບຸດໂຍ ພະລາຊະບຸດຂອງພະອົງໃຫ້ໄປເປັນເຈົ້ານະຄອນຈຳປາສັກ

# 2. ສະພາບວັນນະຄະດີ ແລະ ເນື້ອໃນສ່ອງແສງ

ເມື່ອເວົ້າເຖິງສະພາບວັນນະຄະດີຢູ່ໃນວັນນີ້, ມີຄວາມຟົດເຄືອງ ແລະ ຫຍຸ້ງຍາກຫຼາຍສົມຄວນເພາະບົດວັນນະຄະດີບໍ່ໄດ້ຂະຫຍາຍຕົວແຮງຄືແຕ່ກ່ອນຍ້ອນສາເຫດທາງດ້ານການເມືອງ ແລະ ສັງຄົມລາວຖືກບີບຮັດ, ນັກແຕ່ງນັກຂຽນບໍ່ສາມາດສະແດງອອກດ້ານກິດຈະການໃດໆເທົ່າທີ່ຄວນ, ແຕ່ກໍມີບົດວັນນະຄະດີທີ່ດີເດັ່ນເກີດຂຶ້ນເປັນຕົ້ນແມ່ນສານລຶບພະສູນ, ກາບເມືອງພວນ, ພື້ນວຽງ ຫຼື ພື້ນວຽງຈັນ ແລະ ເລື່ອງອື່ນໆ.

ບັນດາບົດວັນນະຄະດີທີ່ແຕ່ງຂຶ້ນໃນໄລຍະນີ້ລ້ວນແຕ່ມີເນື້ອໃນສ່ອງແສງເຖິງປະເທດຊາດບ້ານເມືອງ ແລະ ການສູນເສຍຄວາມເປັນເອກະລາດຂອງຊາດ; ສ່ອງແສງເຖິງໂທດກຳອັນໂຫດຮ້າຍປ່າເຖື່ອນຢ່າງລົ້ນຟ້າເຫຼືອແຜ່ນດິນຂອງພວກສັກດີນາສະຫຍາມຜູ້ຮຸກຮານທີ່ເຮັດໃຫ້ປະຊາຊົນລາວມີຄວາມທຸກທໍລະມານທາງກາຍ ແລະ ໃຈ; ສ່ອງແສງເຖິງຄວາມເຈັບແຄ້ນແໜ້ນໃຈ ແລະ ນ້ຳໃຈຮັກຊາດ, ຄຽດແຄ້ນສັດຕູຂອງປະຊາຊົນລາວ, ຄວາມເດັດດ່ຽວບໍ່ຍອມຈຳນົນໃຫ້ແກ່ສັດຕູ ແລະ ຄວາມເຊື່ອໝັ້ນຕໍ່ອະນາຄົດດັ່ງສານຂຽນວ່າ:

| | | |
|---|---|---|
| " ຊາດທີ່ທົງທ່ອນທັນໝີເວັ້ນ | ວາງສະໃສສ່ອງ | ໄດ້ເດ |
| ປະກອບຮຽງແທ່ນແກ້ວ | ການຮ້ອນທ່ອນຊິຖອຍ | ເມື່ອໃດ |
| ກົວແຕ່ເດີນໄກຮ້າງ | ຄຳພະໄມມາຍທ່າງ | ເສຍແລ້ວ |
| ຄິດໄຄ່ຮຽງປະກອບແກ້ວ | ກອນຖ້ອຍຖອດຂະໜອງ " | |
| " ບ້າງເຈົ້າບ້າງ | ປາງລາຊະວົງ | |
| ຊົງວຽງຈິນ | ລາຊະວົງເປັນເຄົ້າ | |

ວຽງຈັນເສົ້າ ສາວເອີຍຢ່າຟ້າວວ່າ
ມັນຊິໂປ້ປາດຫຼ້າ ໝາກແຕງຊ້າງໝ່ວຍປາຍ ”

## 3. ຄຸນຄ່າ

ບົດວັນນະຄະດີທີ່ກ່າວມາຂ້າງເທິງມີຄຸນຄ່າຢ່າງໃຫ່ຍຫຼວງຕໍ່ກັບປະຫັວດສາດຂອງຊາດ ເພາະໄດ້ສ່ອງແສງເຖິງຄວາມເປັນມາຂອງປະຫັວດສາດໃນໄລຍະນັ້ນ, ເຮັດໃຫ້ພວກເຮົາຮູ້ກ່ຽວກັບສະພາບການຕ່າງໆດ້ວຍຮູບການວັນນະຄະດີ, ສຶກສານ້ຳໃຈຮັກຊາດ ແລະ ສະຕິຕໍ່ຊາດໃຫ້ປະຊາຊົນລາວບັນດາເຜົ່າ ເພື່ອສືບຕໍ່ມູນເຊື້ອແຫ່ງການຕໍ່ສູ້ປົກປັກຮັກສາປະເທດຊາດຂອງບັນພະບຸລຸດລາວ.

## ຄຳຖາມ

1. ສະພາບປະຫັວດສາດ ແລະ ສັງຄົມລາວ ໃນສະຕະວັດທີ XVIII-XIX ເປັນແນວໃດ?
2. ເນື້ອໃນວັນນະຄະດີໄລຍະນີ້ ສ່ອງແສງເຖິງບັນຫາໃດແດ່?

# ບົດທີ 10
# ສານລຶບພະສູນ

## 1. ຄວາມເປັນມາ

ບົດວັນນະກຳ "ສານລຶບພະສູນ" ເປັນບົດໜຶ່ງໃນຈຳນວນວັນນະຄະດີຊັ້ນຍອດຂອງລາວໃນສະໄໝອານາຈັກລາວລ້ານຊ້າງ. ຜູ້ແຕ່ງໃສ່ຊື່ບົດວັນນະຄະດີຂອງຕົນວ່າ "ສານລຶບພະສູນ" ເຊິ່ງມີຄວາມໝາຍວ່າບັງດວງຕາເວັນ, ແຕ່ເນື້ອແທ້ບໍ່ແມ່ນແຕ່ງສານເພື່ອບັງດວງຕາເວັນ, ເປັນສານທີ່ມີຖ້ອຍຄຳສຳນວນແບບປິດສະໜາ, ເຊື່ອງອຳຢ່າງເລິກລັບໂດຍບໍ່ໄດ້ເປີດເຜີຍຈຸດປະສົງຂອງນັກແຕ່ງທີ່ຕ້ອງການຢາກບອກໃຫ້ຮູ້ແຈ້ງ, ມັນຄ້າຍຄືດັ່ງເມກຝ້າບັງດວງຕາເວັນ ພ້ອມນັ້ນສານລຶບພະສູນເປັນສານທີ່ມີຖ້ອຍຄຳສຳນວນມ່ວນ ແລະ ຄົມຄາຍແຕ່ຕົ້ນຕະຫຼອດປາຍ, ບໍ່ມີຄຳຫຍາບຊ້າຢູ່ໃນສານນັກແຕ່ງໄດ້ບັນຍາຍດ້ວຍຖ້ອຍຄຳທີ່ມີຮູບພາບຢ່າງເລິກເຊິ່ງ ແລະ ປິດສະໜາເຊື່ອງອຳເຮັດໃຫ້ຜູ້ອ່ານຜູ້ຟັງຕ້ອງໃຊ້ປັນຍາຄົ້ນຄິດຕຶກຕອງດ້ວຍຄວາມຕື່ນຕົວເອົາເອງ ທັງນີ້ກໍເນື່ອງຈາກວ່າໃນຂະນະທີ່ປະເທດຊາດບ້ານເມືອງຂອງລາວຖືກບັງຄັບຈາກພວກສັກດີນາຕ່າງດ້າວ (ສະຫຍາມ), ນັກແຕ່ງນັກຂຽນບໍ່ສາມາດເປີດເຜີຍຈຸດປະສົງຂອງຕົນໃຫ້ປະຊາຊົນລາວທຸກທົ່ວໜ້າຮູ້ແຈ້ງເຫັນດີໄດ້.

ບົດວັນນະກຳ"ສານລຶບພະສູນ"ນີ້, ນັກຄົ້ນຄ້ວາທັງຫຼາຍໄດ້ສັນນິຖານວ່າອາດຈະແມ່ນພະເຈົ້າອານຸວົງເປັນຜູ້ນິພົນຂຶ້ນໃນເວລາທີ່ປະຊາຊົນລາວຕົກເປັນເມືອງຂຶ້ນແກ່ສັກດີນາສະຫຍາມ, ຜູ້ແຕ່ງໄດ້ແຕ່ງສານນີ້ເພື່ອປຸກລະດົມຈິດໃຈປະຊາຊົນລາວຢ່າງລັບໆ ແລະ ເປັນການກະກຽມເພື່ອປົດປ່ອຍປະເທດຊາດໃຫ້ຫຼຸດພົ້ນອອກຈາກແອກຄອບຄອງຂອງສັກດີນາສະຫຍາມ. ດັ່ງນັ້ນ, ສານລຶບພະສູນຈຶ່ງມີລັກສະນະຕິດພັນກັບປະຫັວດສາດໄລຍະນັ້ນຢ່າງເດັ່ນຊັດ; ຖ້າອ່ານ ແບບຜິວເຜີນຈະເຂົ້າໃຈວ່າເປັນສານຂອງບ່າວສາວສົ່ງຫາກັນ, ແຕ່ໃນຄວາມໝາຍແລ້ວສານມີເນື້ອໃນການເມືອງຢ່າງເລິກເຊິ່ງ. ບົດວັນນະກຳ "ສານລຶບພະສູນ" ບໍ່ຍາວປານໃດ, ແຕ່ສານແບ່ງອອກເປັນສາມ ບັ້ນຄື: "ບັ້ນບັງລະທັດ", "ບັ້ນສົມທີ່ຄຶດ" ແລະ "ບັ້ນສຸດທີ່ອ່າວ".

## 2. ເນື້ອໃນສານລຶບພະສູນ " ບັ້ນບັງລະທັດ"

| | |
|---|---|
| ດວງນີ້ຊື່ວ່າ ບຸແຜ່ນທໍລະນີດົ້ນ | ກຸມພະກອນກຳໂຮບ |
| ເກາະກ່າຍເກີນໂລບລ້ຽວ | ສະເໜນຄ້ານໂຄ່ນຄອນ |
| ຄະເຄື່ອນຄຸງແກ່ນເຫງົ້າ | ກາກາບໄກວກະຈັດ |
| ເສລາເນົາພູຜາ | ເກື້ອນທະລັງທະລາຍຍ້ອງ |
| ອານົນເນົາແນບພື້ນ | ເຟືອນຟາດຟອງສະໝຸດ |
| ນາໂຄຄະ | ຄາດໂຮງງານຍ້ອງ |
| ຈັກກະວານເຫຼື້ອມ | ຄືລີຫງວຍຫງ່ວນ |

| | |
|---|---|
| ນາຄະເຟືອນຟັ່ງຟ້າວ | ຟຸມເຟື້ອແຄ່ເຟືອຍ |
| ຄຸດທະອ້າປີກຂຶ້ນ | ຂຳເມກເຮືອງລິດ |
| ຈັນໂທເມົາມົວມຸດ | ມືດແສງສູນອຳ້ |
| ໃສສ່ອງເຮືອງຮາວຖ້ານ | ລັງສີສຸລິເຍດ |
| ຍາມທ່ອງຫຼວລ່ວງຟ້າ | ພິມານເອື້ອມອາດສະໝີ |
| ນິຄະສິງສະຫັວນຢ້ອງ | ບໍລະເມປະນິມແມ່ |
| ເມືອງມາບເຫຼື້ອມ | ແສງແກ້ວແກ່ວງທະລັງ |
| ໄຟກໍລຸກວີບໄໝ້ | ເສນາດທະເມົາມຸດ |
| ແປວເປ່ງເຮືອງອະລຸນ | ຫອບແສງສູນຟ້າ |
| ບາລັງຊ້ອນ | ໄສຍາອິນທະລາດ |
| ສະໝຸກຍິ່ງລຳ້ | ລົມເປື້ອງປີ່ນໄກວ |
| ດາວະດຶງຊັ້ນ | ເທວະດາເມືອງມອດ |
| ຕົບຕ່າວຟື້ງ | ພິມານເຕົ໊າຕຸ່ມຕອງ |
| ລະແຫ່ງຫ້ອງ | ຜາສາດເຮືອງຮິດ |
| ລິງທ່ອງຫຼວນິຄົມຄົນ | ຄ່ວາສູງສະແຫວງເຫຼັ້ນ ເລີຍລົນ |
| ຊຳ້ປະສິດເມົາມົວເດືອດ | ກະສັນປົ່ວຟື້ງ |
| ຄຶດເມື່ອບາລັງຊ້ອນ | ໄສຍາອິນທະລາດ |
| ສະໝຸກຍິ່ງລຳ້ | ລົມເປື້ອງປີ່ນໄກວ |
| ທຸຍຮຸ່ງໝ້ອມ | ຄະນິງປ່ອງແປວສະໝຸດ |
| ຄະນິງນິງສີ | ພາກພະໄທມິໄດ້ |
| ຄິດໄຄ່ທວຍທະລັງປີ່ນ | ຍໍຕາວເປື້ອງແກ່ວງ |
| ເອົານັ້ນພູຟາດມ້າງ | ດູຕ້ອງຕອກກະແຈ |
| ລົບລ່ຽມດ້າວ | ໄຂປ່ອງແປວລະຫັດ |
| ຫຼືວ່າ ໂທມທອງຂັດ | ມືດຂະໝອງເໝືອນໄໝ້ |
| ຫຼື ຈັກທວຍທົ່ງອູ້ມ | ຈັກກະວານຮຽງຮ່ອມ |
| ເອົານັ້ນກົວທີ່ຟ້າ | ແປ່ຂວຳ້ຂະໝາມເຄົ້າ |
| ຄວິຄວາມມົວມືດໄໝ້ | ມ້າງແຜ່ນພັນທະກຶດ |
| ກັບເລົ່າເລີຍລົນຂະລັງ | ຕອບແຖມເຖິງເຕົ້າ |
| ນັບທີ່ລວງດູລຳ້ | ຕາມຕາອານັນເນກ |
| ມານັ້ນ ກັບເລົ່າຄວັນເທົ້າຟ້າ | ເຮືອງກຸ້ມເມກກຸມ |
| ໃຈມ່ອມອ້າຍ | ໝາຍມຸ່ງພະໄມມິດ |
| ຊິຄ່ອຍປຸນປອງຮັກ | ຮ່ວມຮຽງຮາວຖ້ານ |

ສົມພານເບື້ອງ ປາລະມີຮຽງຮອດ ກັນແລ້ວ
ສຸດຟາກລວງເລີກລ້ຳ ພິລາກັ້ງວກ່ອມລຳ
ໄດ້ເດແນນເກົ່າເກືອ ເກີດຮ່ວມຮຽງຮັກ ແລ້ວນັ້ນ
ໃຜທ່ອນຂີດຂັດເຊີ່ງ ສວາດດູດາຍໄດ້
ສົມຄວນໄດ້ ຊີໄລວາງປະປ່ອຍ ເປັນລື
ແມ່ນວ່າສຸດຟາກຟ້າ ທະຍານຢື້ຢ່ອງເຖິງ
ພີ່ຂໍຖາມຂ່າວນ້ອງ ນິງຖ່າວຖະໜອມສີ
ຍັງຄ່ອຍທົ່ງຄວາມສຸກ ປີ່ງຊອນແຊມຊ້ອນ
ຫຼືວ່າຍັງປະສິງສ້າງ ສົມພານພຽງພີ່
ຂໍແຕ່ນ້ອງນາດໄທ້ ພະໄມຊ້ອນຂອດຮຽມ ພີ່ຖ້ອນ
ໂອນໍ ! ສິງສານບຸບຜາພົ້ວ ດວງຫອມເທີຍກິ່ນ ໜຽມເອີຍ
ພຸມມະລິນສ່ວານແສ້ວ ສະແຫວງກົ້ວກິ່ນລະອອງ
ເຈົ້າຜູ້ມາລາສ້ອຍ ໄພພະນອມໃນປ່າ ຮຽມເອີຍ !
ບານເຮື່ອແຫ້ງ ຍາມແລ້ງລິ່ນດາຍ ແລນໍ
ນ້ຳສະໝຸດມຸນມາກລົ້ນ ລຶບແຜ່ນທໍລະນີ
ລົມພາຍພັດ ຟາດຟອງກະຈາຍຟົ້ງ
ທົ່ງຄຳຟ້າຍ ບິນບິນສະເໝີວ່າ
ສັງບໍ່ເປື້ອງປິ່ນໜ້າ ມາພົ້ເພື່ອລົມ ບ່າງເດ
ພີ່ຂໍຖາມຂ່າວນ້ອງ ເນື້ອໃໝ່ມາລາສີ
ມະໂນທວາຍຍັງ ທ່ຽງຊຸ້ນໃນທົ້ນ
ຫຼືວ່າມະໂນທວານນ້ອງ ລົມຕີເປື້ອງແກວ່ງ
ຂໍແກ່ອິນທະລາຮູ້ ຍານເຕື້ອງໄຕ່ຕອງ ພີ່ຖ້ອນ
ເປັນດັ່ງອັກຄີໄໝ້ ພອນພາງເຟືອຍປ່າ
ຄິດໄຄ່ທອບແມ່ນ້ຳ ທັງທ້າອາບສິງ
ກໍ່ບໍ່ເປັນໄປໄດ້ ໂດຍດັ່ງມະໂນນຶກ
ເພາະວ່າມະຫານາທີເປັງຈານ ຢູ່ກ້ວາງໄກຮ້າຍ
ວ່າຈັກໂອບເອີານ້ຳ ມາລາລ້າງສ່ວຍ
ພໍໃຫ້ຫາຍໂສກຮ້ອນ ຂະນັງເບື້ອງຝ່າຍຫຼັງ
ກັບກໍ່ຕັ້ງເຂດໄວ້ ຫ້າຂວບພັນວັດສາ
ອານິນກີນກິນທາງ ແຫ່ງມັນທະເນີາໄໝ້
ໄພພະນັງເຮື້ອ ຮາວເຂົາຂຽວຄິ່ວ
ຄິດໄຄ່ມ້າງມຸ່ນມ້ວຍ ມີວຂວ້ຳໄຂ່ວຂີນ

ຫຼາຍສ່ຳໄມ້ ໃນປ່າອານັນໜັກ
ຫາລຳເປັນຂອງຫອມ ແກ່ນຈັນບໍ່ມີໄດ້
ຄືນເຕັມບ້ານ ຄາເມມີມາກ
ຫາຜູ້ຕ້ອງ ມະໂນໄທ້ໄປ່ມີ
ອີນຮ່ຳຖອນເຖິງແຈ້ງ ຄະດີໂດຍດອມເຫດ ເຣວຖ້ອນ
ມີໃຫ້ຮັກພີ່ງຜຶ້ງ ຊິເອົາຕຸ້ມຕ່ອມຂ້ອນ
ພີ່ບໍ່ໃຫ້ຄາດຮ້າງ ເຫີຍທ່າງພະໄມມິດ
ພໍພະໄທຈັກ ໄຄ່ຄອຍຄອງຕຸ້ມ
ຂໍແກ່ອີສູນນ້າວ ແນມສະໝອນຊິມຊ່ວຍ
ອີນຫາກຣວຍຮ່ຳເບື້ອງ ສະເໝີຊ້ອນສ່ອງເງົາ ຢູ່ແລ້ວ
ລາຫູຮຽງຕີນເຂົ້າ ສູນພະຈັນແຖມເລົ່າ
ມົວມືດກຸ້ມກົບຟ້າ ບັງກັ້ງກ່ອມສະເໝີ
ສະໝີເບື້ອງເລື່ອມຊ້ອນ ຮຽງຮ່ວມລາສີ
ປະເປັ່ງເງົາງາໍສະໝີ ບໍ່ສ່ອງໃສສູນໄໝ້
ອາທິດທຽວເທິງຟ້າ ລາສີເງື້ອມແງ່ພະໂຍມບິນ
ລາຫູບັງ ເລື່ອມລັງສີເສົ້າ
ອັນວ່າຈັນທະລັງເຫຼື້ອມ ບໍ່ມີເພັງແຮມຄ່ຳ ອວນເອີຍ !
ອາທິດບໍ່ເບັ່ງບ້າ ເພັງແຈ້ງດັ່ງພະຈັນ.

## ຄຳຖາມ ແລະ ບົດເຝິກຫັດ

1. ບົດວັນນະກຳ " ສານລຶບພະສູນ" ມີຄວາມເປັນມາແນວໃດ?
2. ເນື້ອໃນສານ "ບັ້ນບັງລະຫັດ "ເວົ້າເຖິງຫັຍງ?
3. "ຄັນບໍ່ມີເຟືອຍໄມ້ ໄຟບໍ່ລາມໄໝ້ປ່າ ນາງເອີຍ!
   ມີບໍ່ໃສ່ຖໍ່ຈຳ້ ເຮືອຊິຂຶ້ນເຜັນຜາຍ ພີ່ລື
   ຊາດທີ່ຄູຫາຫ້ອງ ລາຊະນີທຽວທ່ອງ
   ບໍ່ຫ່ອນລະຖິ້ມໄວ້ ຊິໄປຊຶ້ນປ່າຄາ ພີ່ແລ້ວ"
   ເນື້ອໃນສານຕອນນີ້ ເວົ້າເຖິງຫັຍງ?

# ພາກທີ IV
# ວັນນະຄະດີປັດຈຸບັນຂອງລາວ
# ບົດທີ 11
# ການກຳ ແລະ ການຂະຫຍາຍຕົວຂອງວັນນະຄະດີປັດຈຸບັນ ໂດຍສັງເຂບ

## 1. ຄວາມຮູ້ພື້ນຖານທາງດ້ານປະຫວັດສາດ

ເລີ່ມແຕ່ທ້າຍສະຕະວັດທີ XI ປະເທດລາວໄດ້ຕົກເປັນຫົວເມືອງຂຶ້ນຂອງຈັກກະພັດຝຣັ່ງປະເທດຊາດໄດ້ສູນເສຍເອກະລາດ. ປະຊາຊົນລາວບໍ່ມີສິດເປັນເຈົ້າຕົນເອງ, ພວກເຂົາໄດ້ກຳຈັດໃຫ້ການນຳໃຊ້ພາສາລາວ-ຕົວໜັງສືລາວ ໃນຂົງເຂດການສຶກສາ ແລະ ທາງລາຊະການ, ພວກເຂົາໄດ້ນຳໃຊ້ພາສາຝຣັ່ງເຂົ້າໃນຫຼັກສູດການຮຽນ-ການສອນ, ຮຽນຕາມແບບຂອງຝັ່ຣງໃນທຸກໆຊັ້ນຮຽນ, ເອົາພາສາຝຣັ່ງເປັນພາສາທາງລາຊະການຂອງລາວ, ການສຶກສາບໍ່ມີການຂະຫຍາຍຕົວ ປະຊາຊົນ 90% ບໍ່ຮູ້ໜັງສື, ຍ້ອນແນວນັ້ນປະຊາຊົນລາວຜູ້ຮັກຊາດ ຈຶ່ງລຸກຂຶ້ນຕໍ່ສູ້ຕ້ານພວກຝຣັ່ງ ເຊັ່ນ: ຂະບວນການຕໍ່ສູ້ພາຍໄຕ້ການນຳພາຂອງພໍ່ກະດວດ, ອົງແກ້ວ ອົງກົມມະດຳ, ເຈົ້າຟ້າເມືອງສິງ, ເຈົ້າຟ້າປັດໃຈ ແລະ ຜົດອື່ນໆ..

ເຖິງປີ1954 ພວກລ່າເມືອງຂຶ້ນຝຣັ່ງໄດ້ຍອມເຊັນສັນຍາເຊີແນວ ຟື້ນຟູສັນຕິພາບຢູ່ອິນດູຈີນ, ຮັບຮູ້ຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງລາວ, ພາຍຫຼັງທີ່ພວກລ່າເຝືອງຂຶ້ນຝຣັ່ງກັບຄືນເມືອ (ປະລາໄຊສົງຄາມອິນດູຈີນ) ຈັກກະພັດອະເມລິກາໄດ້ເຂົ້າມາແທນ ແລະ ສືບຕໍ່ຮຸກຮານລາວ.ປະຊາຊົນລາວໄດ້ພາກັນລຸກຂຶ້ນຕໍ່ສູ້ ພາຍໄຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ທີ່ໄດ້ສ້າງຕັ້ງຂຶ້ນໃນປີ 1955 ໃເວລາ ປະເທດລາວໄດ້ແບ່ງອອກເປັນ 2 ເຂດຄື: ເຂດປົດປ່ອຍຂອງຝ່າຍປະເທດລາວ ແລະ ເຂດຄວບຄຸມຂອງຝ່າຍລາຊະອານາຈັກລາວ.

ຢູ່ເຂດປົດປ່ອຍສູນກາງພັກ ແລະ ແນວລາວຮັກຊາດ ໄດ້ນຳພາກໍ່ສ້າງ ແລະ ຂະຫຍາຍວຽກງານຮອບດ້ານ: ການທະຫານ, ການປົກຄອງ, ເສດຖະກິດ, ສຶກສາວັດທະນະທຳ ແລະ ສັງຄົມ, ພາສາລາວໄດ້ນຳເຂົ້າສອນຢູ່ໃນໂຮງຮຽນທຸກຊັ້ນ, ເຂດຝ່າຍລາຊະອານາຈັກລາວ, ອະເມລິກາ ແລະ ລູກມື ພວກເຂົາໄດ້ພະຍາຍາມຫັນເອົາວັດທະນະທຳ-ວັນນະຄະດີລາວໃຫ້ກາຍເປັນແບບຕາເວັນຕົກ ອັນພາໃຫ້ວັດທະນະທຳ- ວັນນະຄະດີລາວໃນເຂດນີ້ມີລັກຊະນະຊອດກະຈາ, ຂາດລັກສະນະຊາດ, ລັກສະນະມະຫາຊົນ.

ໃນວັນທີ 2 ທັນວາ ປີ 1975 ປະເທດຊາດໄດ້ຮັບການປົດປ່ອຍ ແຕ່ນັ້ນມາປະຊາຊົນລາວໄດ້ເປັນເຈົ້າຂອງປະເທດຊາດ, ເປັນເຈົ້າຕົນເອງແລະມີສິດເສລີພາບຢ່າງຮອບດ້ານ, ກົດໝາຍຂອງລັດໄດ້ຮັບການຂະຫຍາຍຕົວ.

## 2. ການກຳເນີດ ແລະ ການຂະຫຍາຍຕົວຂອງວັນນະຄະດີປັດຈຸບັນໂດຍສັງເຂບ

ວັນນະຄະດີຂອງລາວກຳເນີດ ແລະ ຂະຫຍາຍຕົນຜ່ານ 3 ໄລຍະ ປະຫວັດສາດ:

- ໄລຍະແຕ່ປີ 1893 ວັນນະຄະດີລາວຂະຫຍາຍຕົວຊ້າ, ສ່ວນຫຼວງຫຼາຍແມ່ນບົດກາບກອນທີ່ມີເນື້ອໃນເວົ້າເຖິງຄວາມຮັກຊາດ, ຕ້ານພວກຈັກກະພັດຝຣັ່ງ, ບົດກະວີ ຂອງທ່ານ ພູມີ ວົງວິຈິດ, ທ່ານ ສິຊະນະ ສີສານ, ທ່ານ ສົມສີ ເດຊາຄຳພູ, ທ່ານ ແກ້ວ ຫຼວງເສນາ ແລະ ຜູ້ອື່ນໆ.. ສ່ວນວັນນະຄະດີປະເພດຄຳຮ້ອຍແກ້ວ ກໍເລີ່ມມີບົດວຽກດີຄືນເດັ່ນ, ບົດເລື່ອງຈິງຄືນແທ້.

- ໄລຍະປີ 1955 - 1975 ແມ່ນໄລຍະຂະຫຍາຍຕົວວັນນະຕະດີປະຕິວັດ, ເຊິ່ງຢູ່ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ, ວັນນະຄະດີມີເນື້ອໃນຮັບໃຊ້ໜ້າທີ່ການເມືອງພັກ, ວັນນະຄະດີ, ສິລະປະໄດ້ມີເນື້ອໃນອຸດົມສົມບູນຂຶ້ນ, ໄລຍະນີ້ວັນນະຄະດີປະເພດຄຳຮ້ອຍກອງໄດ້ຂະຫຍາຍຕົວຢ່າງແຂງແຮງ ຈາກບົດເລື່ອງຈິງຄືນແທ້ ກ້າວຂຶ້ນມາເປັນບົດບັນທຶກ, ບົດເລື່ອງສັ້ນ. ເລີ່ມແຕ່ຊຸ່ມປີ 60 ເຖິງຊຸ່ມ ປີ 70 ບົດນະວະນິຍາຍໄດ້ປະກົດໂຕຂຶ້ນ, ໃນສະໄໝນີ້ມີນັກປະພັນ: ທ່ານ ຄຳມາພົມກອງ, ທ່ານ ຄຳລຽງ ພົນເສນາ, ທ່ານ ສຸວັນທອນ ບຸບຜານຸວົງ ແລະ ຜູ້ອື່ນໆ...

- ນັບແຕ່ປີ 1976 ເປັນຕົ້ນມາວັນນະຄະດີຄຳຮ້ອຍແກ້ວໄດ້ຂະຫຍາຍຕົວເທົ່າທຽມກັບວັນນະຄະດີຄຳຮ້ອຍກອງ, ພິເສດວັນນະຄະດີນະວະນິຍາຍ, ນັກຂຽນໜຸ່ມໄດ້ປະກົດຕົວຂຶ້ນ ເຊິ່ງມີທັງຂຽນອາຊີບ ແລະ ນັກຂຽນສະໝັກຫຼິ້ນເຊັ່ນ: ທ່ານ ພໍພວງສະບາ, ທ່ານ ທອງເສີຍ ໂຄດວົງສາ, ທ່ານ ຫຸມພັນ ລັດຕະນະວົງ, ທ່ານ ອຸທິນ ຍຸນຍາວົງ.

**ສະຫຼຸບແລ້ວ:** ວັນນະຄະດີຂອງລາວໄດ້ເລີ່ມຈາກ "ກະແສວັນນະຄະດີຮັກຊາດ" ທີ່ມີເນື້ອໃນຕໍ່ສູ້ຕ້ານສັດຕູຜູ້ຮຸກຮານ ( ໃນໄລຍະ ປີ 1893 - 1954 ) ກ້າວຂຶ້ນເປັນວັນນະຄະດີແບບໃໝ່ຂອງປະເທດລາວ ໃນສະໄໝປັດຈຸບັນທີ່ມີຄຸນຄ່າທາງດ້ານເນື້ອໃນ ແລະ ຮູບການສິລະປະ.

### ຄຳຖາມ:

1. ວັນນະຄະດີລາວປັດຈຸບັນຂະຫຍາຍຕົວແນວໃດ?
2. ໄລຍະແຕ່ປີ 1893-1954 ວັນນະຄະດີລາວຂະຫາຍຄືແນວໃດ? ມີນັກຂຽນຊື່ແນວໃດແດ່?
3. ໃນໄລຍະແຕ່ ປີ 1976 ເປັນໄມາ ວັນນະຄະດີລາວຂະຫຍາຍຕົວແນວໃດ?

# ບົດທີ 12
# ເມືອງລາວສວຍງາມຮັ່ງມີ
## ພູມີ ວົງວິຈິດ
(1909-1994)

## 1. ບາງຈຸດກ່ຽວກັບນັກກະວີ

ທ່ານ ພູມີ ວົງວິຈິດ ເກີດທີ່ບ້ານຄາຍ, ຕາແສງຍອດງື່ມ, ແຂວງ ຊຽງຂວາງ, ບົນພື້ນແຜ່ນດິນທີ່ມີຮ່ອງຮອຍປະຫວັດສາດອັນເກົ່າແກ່, ມີມູນເຊື້ອວິລະຊົນປະຕິວັດ, ມີພູມພາບທຳມະຊາດອັນສວຍວິດງົດງາມ ແລະ ມີຊັບພະຍາກອນທຳມະຊາດທີ່ອຸດົມຮັ່ງມີ.

ທ່ານ ພູມີ ວົງວິຈິດ ແມ່ນຜູ້ນຳຜູ້ໜຶ່ງຂອງການປະຕິວັດລາວ ທັງເປັນນັກກະວີທີ່ມີຊື່ສຽງ ແລະ ເປັນນັກເຄື່ອນໄຫວດ້ານວັດທະນະທຳທີ່ມີບົດຮຽນຂອງລາວ, ເພິ່ນມີຄວາມຮູ້ເລິກເຊິ່ງ, ກ້ວາງຂວາງກ່ຽວກັບດ້ານວັດທະນະທຳຂອງຊາດ, ໂດຍສະເພາະແມ່ນທາງດ້ານປະຫວັດສາດ, ວັນນະຄະດີ, ສິລະປະ, ອັກສອນສາດ, ບົດກາບກອນ ແລະ ໂຄງສານຕ່າງໆທີ່ທ່ານໄດ້ແຕ່ງອອກ.

ບົດກາບກອນ " ເມືອງລາວສວຍງາມຮັ່ງມີ " ທ່ານ ພູມີ ວົງວິຈິດ ໄດ້ແຕ່ງອອກໃນສະໄໝຕໍ່ຕ້ານກັບຈັກກະພັດອະເມລິກາ ( ຊຸມປີ 60 ຂອງສະຕະວັດທີ XX ), ເປັນບົດກອນທີ່ມີຄວາມຍາວ ມີທັງໝົດ 280 ວັກ ໃນນັ້ນໄດ້ພັນລະນາເຖິງຄວາມສົດສວຍງົດງາມ, ຄວາມອຸດົມຮັ່ງມີທາງດ້ານຊັບພະຍາກອນທຳມະຊາດ ແລະ ມູນເຊື້ອອັນເກົ່າແກ່ຂອງປະເທດລາວ.

## 2. ເນື້ອໃນ ບົດກອນ " ເມືອງລາວສວຍງາມຮັ່ງມີ "

ເມືອງລາວເປັນເຂດບ້ານ ສະຖານຖິ່ນງາມຕາ
ທາງເໜືອມີພູຜາ ໜ່ວຍພະນອມລຽນຊ້ອນ
ຍິນສະອອນດົງໄມ້ ໄພສິນແສນຍ່ານ
ເປັນດັ່ງອຸທິຍານໃຫຍ່ກ້ວາງ ຊວາສະອຸ້ມສູ່ຍາມ

ເດືອນຍີ່ສາມສີ່ເຕົ້າ ເອົ້າອຸ່ນລະດູບານ
ແສນສຳປານມາລາ ເບີກເບຍບານແຍ້ມ
ສີດ່າງແດງດຳແຫ້ມ ເຫຼືອງກະຈາຍເຕັມປ່າ
ເໝືອນດັ່ງດາວສ່ອງຟ້າ ປະດາເຫຼື້ອມຮຸ່ງເຮືອງ

ຍາມເມື່ອລົມປິ່ນເປື້ອງ ພັດຝຸ່ນລະອອງຫອມ
ໄປສູ່ຈອມພູສູງ ກິ່ນກະຊຈວງຟອງຟຶ້ງ
ຝູງໝູ່ດົງດອນດ້າວ ຕະການຕາກ້ວາງໃຫຍ່
ຫອມກິ່ນດວງດອກໄມ້ ກະຈາຍກ້ວາທົ່ວແດນ

ນັບແດ່ໃນເຂດແຄ້ວນ ພະນອມປ່າໄພຊຽວ
ບໍ່ອາດພັນລະນານັບ ອ່ານປຸນໄປໄດ້
ອະເນການອງລຳໄມ້ ແນວດີມີຄ່າ
ສາມາດຂາຍແລກຄ້າ ຂອງໃຊ້ເຄື່ອງດົງ

ຢູ່ໃນຂົງເຂດນັ້ນ ສັດສິງກໍມີຫຼາຍ
ມີງົວ ຄວາຍທັງໝູ ໝູ່ກະທິງ ເຍືອງ ແບ້
ອໍແອເຕັມດົງກ້ວາງ ກວາງ ຟານ ມ້າມິ່ງ
ມີທັງເສືອ ແຮດ ຊ້າງ ໝີ ເໝັ້ນ ຄ່າງ ທະນີ

ກະຕ່າຍແລ້ນລິ່ນລີ້ ໝີ ໝູ່ລິງກັງ
ຝູງກະເລນ ງູເຫຼືອມ ເຕົ່າກະແຕ ແມງໄມ້
ໄກໆພຸ້ນ ຍຸງຍອງຮ້ອງສິ່ງ
ຄັບປ່າດົງດ່ານໄມ້ ສະນັນກ້ອງໄກ່ຂັນ

ສັບພະພັນຫຼາກລ້ຳ ຫຼາຍສ່ຳປັກສີ
ສັກກຸນີມີຫຼາຍ ໝື່ນແນວນາມລົ້ນ
ມີແນວເຫຼືອງສົ້ວ ຊຽວເທົາແດງອ່ອນ
ກະໂດດຄອນໄຄ່ເຕັ້ນ ແຈວຈົ້ວສີ່ສຽງ

ຟັງຍິນທາດໆພັ້ງງ ກ້ອງປ່າໄພພະນາ ພຸ້ນເຢີ
ນັ້ນແມ່ນອາໂປໂຕນ ຄາດສູງແສນທ້າງ
ຕົກໃສ່ກາງວັງນຳ ເຫວຊັນເປັນຫຼົ່ນ
ເຫັນແຕ່ຄ້ອນມືດກຸ້ມ ຟອງຟົ້ງສິ່ງສຽງ

ຕຶກບໍ່ຮູ້ຂາດສຽງ ໄຫຼເລັ່ງເປັນສາຍ
ໄຫຼກະຈາຍລົງໄປ ສູ່ນະທີທານກ້ວາງ
ໄຫຼເປັນທາງວຽນລ້ອມ ໂງເງກ້ຽວກອດ
ລອດປ່ອງນັ້ນປ່ອງນີ້ ລົງເຂົ້າສູ່ຂອງ.

## ຄຳຖາມ ແລະ ບົດເຝິກຫັດ

1. ບົດກອນ " ເມືອງລາວສວຍງາມຮັ່ງມີ " ແຕ່ງຂຶ້ນສະໄໝໃດ? ໃຜເປັນຜູ້ແຕ່ງ?
2. ເນື້ອໃນຂອງບົດກອນ "ເມືອງລາວສວຍງາມຮັ່ງມີ " ພັນລະນາເຖິງອັນໃດແດ່?

# ບົດທີ 13

## ແຫກຄຸກ

ທອງເສີຍ ໂຄດວົງສາ

ໃນປຶ້ມເລື່ອງ "ແຫກຄຸກ" ນີ້ເປັນປະເພດບົດເລົ່າເລື່ອງວິລະກຳປະຫັວດສາດຕອນໜຶ່ງຂອງຊາດ, ເຊິ່ງມີຕົວຈິງໃນພາລະກິດຕໍ່ສູ້ກູ້ຊາດ ເພື່ອຍາດເອົາຄວາມເປັນເອກະລາດ ແລະ ອິດສະຫຼະພາບຂອງປະຊາຊົນລາວ.

ນັກຂຽນ ທອງເສີຍ ໂຄດວົງສາ ແມ່ນອະດີດນັກຮຽນສາລະວັດທະຫານຊຸດທີເກົ້າທີ່ຖືກໄປຍາມຄຸກ ເຊິ່ງພວກກຳອຳນາດປະຕິການຂວາຈັດວຽງຈັນຄຸມຂັງບັນດາທ່ານຜູ້ນຳການປະຕິວັດ. ທອງເສີຍ ໂຄດວົງສາ ຖືກພວກກຳອຳນາດປະຕິການອົບຮົມບົ່ມສອນດ້ວຍແນວຄິດຊຸນເສີກ, ອາດຈະເວົ້າໄດ້ວ່າ ພວກເຂົາໄດ້ສ້າງໃຫ້ນັກຮຽນສາລະວັດຄົນນີ້ ກາຍເປັນນັກຕ້ອງຄອມມູນິດຜູ້ອອກໜ້າອອກຕາ. ໂດຍຜ່ານການໂອ້ລົມກັບຜູ້ນຳທີ່ຖືກຄຸມຂັງຢູ່ນັ້ນ, ທ່ານເຫັນແຈ້ງວ່າອັນໃດຜິດ, ອັນໃດຖືກ, ອັນໃດຍຸດຕິທຳ ແລະ ບໍ່ຍຸດຕິທຳ, ເຫັນແຈ້ງແນວທາງທີ່ເປັນທຳຂອງແນວລາວຮັກຊາດ.

ທອງເສີຍ ໂຄດວົງສາ ຜູ້ມີສາຍເລືອດລາວ, ມີນ້ຳໃຈຮັກຊາດ ແລະ ເປັນຜູ້ຮັກຫອມຄວາມເປັນທຳ, ແມ່ນໜຶ່ງໃນຈຳນວນສາລະວັດທະຫານ 9 ຄົນທີ່ໄດ້ພາທ່ານຜູ້ນຳປະຕິວັດແຫກຄຸກໂພນຄ້ງອອກໄປສູ່ເຂດທີ່ໝັ້ນຂອງການປະຕິວັດໄດ້ຢ່າງປອດໄພ.

### ແຫກຄຸກ

(ຄັດຕອນ)

< ... > ຢູ່ທີ່ວຽງຈັນ, ສັດຕູໄດ້ໃຊ້ກຳລັງເພື່ອປິດລ້ອມເຮືອນບັນດາຜູ້ນຳແນວລາວຮັກຊາດຄື ເຮືອນລຸງປະທານ ສຸພານຸວົງ, ເຮືອນລຸງໜູຮັກ ພູມສະຫວັນ, ລຸງພູມີ ວົງວິຈິດ ແລະ ຜູ້ນຳອື່ນໆ ໃນນັ້ນນັບທັງສຳນັກງານຜູ້ຕາງໜ້າແນວລາວຮັກຊາດ ໃນນະຄອນຄອນຫຼວງວຽງຈັນອີກດ້ວຍ. ໃນເວລາດຽວກັນນັ້ນ, ຢູ່ທີ່ຄ້າຍໂພນຄ້ງ ນະຄອນຫຼວງວຽງຈັນສັດຕູກໍເລີ່ມລົງມືສ້າງຄຸກແຫ່ງໜຶ່ງຂຶ້ນ ຢູ່ທິດເໜືອນຄ້າຍນີ້ຢ່າງຮີບຮ້ອນທັງເວັນ ແລະ ຄືນ, ຄຸກນີ້ເປັນເຮືອນຕຶກຊັ້ນດຽວ, ມຸງສັງກະສີແອ້ມດິນ, ຂັ້ນເປັນ 30 ຫ້ອງ. ແຕ່ລະຫ້ອງແຄບໆບັນຈຸໄດ້ພຽງແຕ່ຕຽງ 1 ໜ່ວຍ, ໂຕະ ແລະ ຕັ່ງອີ້ຊຸດດຽວເທົ່ານັ້ນ, ປ່ອງຢ້ຽມນ້ອຍຂັ້ນດ້ວຍນິ້ວເຫຼັກ, ຕໍ່ໜ້າຊານເຮືອນປະມານເຈັດແມັດມັນພັດເຮັດຮົ້ວລ້ອມຕັ້ງຫຼາຍຊັ້ນ ດ້ວຍເຫຼັກໜາມໝາກຈັບ ທັງສູງ ທັງໜາແໜ້ນເກາະກ່າຍກັນ, ຈາກນັ້ນມັນກໍລ້ອມຮົ້ວດ້ວຍສັງກະສີຊັ້ນ ຈົນຫຼຽວອອກມາບໍ່ເຫັນຫຼັງເຮືອນທາງນອກ, ມີປະຕູເຂົ້າພຽງແຕ່ປ່ອງດຽວເທົ່ານັ້ນ. ຂ້າງນອກປະກອບດ້ວຍດອກໄຟໃຫຍ່ເຍືອງສີ່ດ້ານຕະຫຼອດຄືນ ແລະ ບັນຈຸກຳລັງທາງໃຫ້ຕຳຫຼວດ ແລະ ສາລະວັດທະຫານຍາມປະຈຳຊົ່ວໂມງໜຶ່ງສອງຄົນ ທາງຂ້າງນອກມີລົດຕັງ 4 ຄັນປ້ອງກັນກຽມພ້ອມ

ສູ້ຮົບຕະຫຼອດເວລາ.

ນັບແຕ່ວັນ 28/7/1959 ສັດຕູເລີ່ທະຍອຍລົງມືຄຸມຕົວບັນດາທ່ານຜູ້ນຳຄື ລຸງສຸພານຸວົງ, ລຸງໜູຮັກ ພູມສະຫວັນ, ລຸງພູມີ ວົງວິຈິດ, ລຸງພູນ ສີປະເສີດ, ລຸງສີທົນ ກົມມະດຳ, ລຸງມາ ໄຂຄຳພິທູນ, ລຸງໝື່ນ ສົມວິຈິດ, ລຸງສີຊະນະ ສີສານ, ລຸງສິງກະໂປ ສີໂຄດຈຸນລະມະນີ, ລຸງຄຳຜາຍ ບຸບຜາ, ລຸງເພົ້າ ພົມມະຈັນ ແລະ ຜູ້ອື່ນໆ ລວມ 16 ທ່ານ ຈາກແຫ່ງຕ່າງໆໃນວຽງຈັນ ແລະ ທົ່ວປະເທດ ມາລວມກັນຢູ່ໃນຄຸກແຫ່ງນີ້ໂດຍແບ່ງອອກເປັນຫ້ອງໃຜມັນ ແລະ ຫ້າມເດັດຂາດບໍ່ໃຫ້ພົວພັນກັນ. ໃນຄາວທຳອິດ ຕະຫຼອດວັນຄືນ ແມ່ນພຽງແຕ່ໄດ້ອອກມາອາບນ້ຳ ແລະ ປະຕູໄດ້ຖືກໄຂໃນຍາມທະຫານຍໍພາເຂົ້າເຊົ້າ, ທ່ຽງ, ແລະ ແລງເທົ່ານັ້ນ ສຳລັບພວກຕຳຫຼວດ ຫຼື ສາລະວັດທະຫານທີ່ຖືກຍາມຢູ່ຊັ້ນໃນແມ່ນຫ້າມບໍ່ໃຫ້ເຂົ້າພົວພັນ ໂອ້ລົມກັບບັນດາທ່ານຜູ້ນຳເຮົາຢ່າງເດັດຂາດ ຖ້າສືບພໍ້ສໍ້ເຫັນ ຜູ້ກ່ຽວມີຫວັງແຕ່ສິ່ງດຽວຄືລາໂລກນີ້ໄປສູ່ໂລກໃໝ່ທີ່ບໍ່ມີໃຜປາຖະໜາ,

ເມື່ອສັດຕູໄດ້ປ່ວງບ້າໂສຕາຍເຮັດໄປຄືແນວນັ້ນ ເຮັດໃຫ້ກະແສຟອງແຫ່ງຄວາມຄຽດແຄ້ນໃນບັນດາກຳລັງຮັກຊາດ, ຮັກອິດສະຫຼະພາບຄື ພະສົງ, ນັກຮຽນ, ຂ້າລາຊະການ ແລະ ປະຊາຊົນທົ່ວຢູ່ວຽງຈັນໄດ້ຟົດເດືອດຂຶ້ນສູ່ລະດັບສູງ. ໃນວຽງຈັນໄດ້ເກີດການຕໍ່ສູ້ຫຼາຍຮູບແບບນ້ອຍໃຫຍ່ຕ່າງກັນຄືທວງໃຫ້ປ່ອຍບັນດາຜູ້ນຳເຮົາ, ທວງໃຫ້ພວກເຂົາຍຸດຕິການປາບປາມ ແລະ ອື່ນໆ. ຈັດຕັ້ງໂຮມຊຸມນຸມກ່າວປະນາມໂທດກຳຂອງພວກເຂົາດ ຊາວໜຸ່ມ, ນັກຮຽນ, ນັກສຶກສາກໍເຕົ້າໂຮມກັນວິພາກວິຈານບັນການປະພຶດທີ່ໄຮ້ສາລະຂອງພວກປະຕິການ ແລະ ຈັກກະພັດອາເມລິກາ ມີຫຼາຍເຫດການທີ່ເກີດຂຶ້ນຄື ສ້າງຫາງສຽງເວົ້າວ່າ: ກົກໂພພັນຕົ້ນເກີດຢູ່ທົ່ງໄຫຫີນ, ເຮືອນຄຳເກີດຢູ່ໜອງ, ຊຽດນັບພັນໂຕເອົາຫົວສຽບຕາມໜາມມາກຈັບລຽບແຄມຄ້າຍວັດໄຕ ແລະ ອື່ນໆ. ໃນເວລານັ້ນເອງພາຍໃນຖັນແຖວຂອງພວກທຸ່ນວຽງຈັນ ກໍເກີດການຂັດແຍ່ງກັນຢ່າງໜັກ, ກຸ່ມພູມີ ໜໍ່ສະຫວັນໂຄ່ນລົ້ມຜຸຍຊະນະນິກອນ, ຕຳຫຼວດຕີກັບນັກຮຽນ, ທະຫານແຫ່ກຳລັງປາບຕຳຫຼວດ, ທະຫານ ແລະ ກຳມະກອນຂ້າກັນຕາມໂຮງບາ, ແລະ ຍັງມີຫຼາຍເລື່ອງທີ່ເກີດຂຶ້ນ ກໍ່ຄວາມວຸ້ນວາຍເຮັດໃຫ້ພາຍໃນຂອງພວກປະຕິການກ້າວຂຶ້ນປະຫັດປະຫານກັນລຽນຕິດ.

ສ່ວນຈັກກະພັດອາເມລິກາ ແລະ ພວກປະຕິການວຽງຈັນໃນຍາມນັ້ນ ເຫັນວ່າເມື່ອຖືກໂດດດ່ຽວ ແລະ ກ່າວປະນາມຊ້ຳພັດຍິ່ງດີ້ນຮົນກະວົນກະວາຍເພີ່ມທະວີໜີບຮັດບັນດາຜູ້ນຳເຮົາໃນຄຸກ, ໃຊ້ນັກສືບເຊອີອາເຂົ້າສືບສວນເອົາຄະດີເປັນປະຈຳທຸກອາທິດ, ຊື້ຈ້າງຄົນກຸ່ມນ້ອຍຈຳນວນນຶ່ງເດີນຂະບວນກ່າວປະນາມຫາເລື່ອງໃສ່ຮ້າຍປ້າຍສີແນວລາວຮັກຊາດ, ຟ້ອງຂຶ້ນໃຫ້ສານທະຫານຕັດສິນປະຫານຊີວິດບັນດາຜູ້ນຳເຮົາ.

ເມື່ອສັດຕູປ່ວງບ້າເຊັ່ນນັ້ນບັນດາຜູ້ນຳເຮົາກໍໄດ້ຊອກຫາເສັ້ນທາງທີ່ເໝາະສົມເພື່ອສືບຕໍ່ຊູຄັນທຸງກູ້ຊາດຕ້ານອາເມລິກາ ເຮັດໃຫ້ປະຊາຊົນລາວໄດ້ຮັບການປົດປ່ອຍຈາກການກົດຂີ່ຂົ່ມເຫັງຂອງພວກຈັກກະພັດຕ່າງດ້າວ ແລະ ພວກລາວຂາຍຊາດ. <...>

# ຄຳຖາມ

1. ເລື່ອງ “ແທກຄຸກ” ມີເນື້ອໃນເວົ້າເຖິງຫຍັງ?
2. ເລື່ອງ “ແທກຄຸກ” ມີຄຸນຄ່າ ແລະ ຄວາມໝາຍແນວໃດ?